# ແພງແມ່

ໂຮມເລື່ອງສັ້ນໂດຍ

## ອຸທິນ ບຸນຍາວົງ



ໂຮມເລື່ອງສັ້ນ

# ແພງແມ່

## ອຸທິນ ບຸນຍາວົງ

ກົມວັນນະຄະດີ

1991

ທະບຽນອະນຸມັດເລກທີ 207/ພ.ຈ.ໜນ.ປ.

ໂຣມເລື່ອງສັ້ນ : ແພງແມ່

ໂດຍ : ອຸທິນ ບຸນຍາວົງ

ແຕ້ມຮູບໜ້າປົກໂດຍ : ປຸ້ຍ ( 11ປີ )

ຈັດໜ້າ ແລະ ຕົບແຕ່ງໂດຍ : ໂອທອງ

ພິມຄັ້ງທຳອິດ 1991

ພິມທີ່ໂຮງພິມ ສະຖາບັນສຸຂະສຶກສາ

ພິມຈຳນວນ 3.000 ຫົວ

# ຄຳ ນຳ

ວົງການວັນນະຄະດີ ຂອງລາວເຮົາ ພວມມີການເຄື່ອນໄຫວ ທີ່ໜ້າຊົມຊື່ນຍິນດີ ຄືໃນປີ 1990 ນີ້ ມີການພິມປື້ມອອກມາຫລາຍຫົວ ແລະ ພິເສດໃນເດືອນຕຸລາປີນີ້ ສະມາຄົມ ນັກປະພັນລາວ ກໍໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ. ເປັນການຕອບສະໜອງການຄອງຄອຍອັນດົນນານຂອງເຫລົ່ານັກຂຽນຜູ້ເຕັມໄປດ້ວຍຄວາມກະຕືລືລົ້ນ ແລະ ຄວາມຕື່ນຕົວສູງ ໃນການສ້າງສັນ ວັນນະກຳລາວ ໃຫ້ຈະເລີນກ້າວໜ້າ ແລະ ປະກົດເດັ່ນໃນເວທີສາກົນ. ການເຄື່ອນໄຫວດັ່ງກ່າວນີ້ ເປັນນິມິດໝາຍອັນດີ ແລະ ສິ່ງພົນກະທົບໃນທາງບວກໃຫ້ແກ່ວົງການ.

ນີ້ປື້ມອອກມາຫລາຍຫົວ ກໍຄືມີດອກໄມ້ບານພ້ອມກັນຫລາຍດອກ ແລະ ຫລາຍສີສັນ. ວາດແຕ່ງ ຂອງແຕ່ລະນັກປະພັນ ກໍປຽບຄືສີສັນຂອງດອກໄມ້ໃນອຸດທິຍານ ຊຶ່ງມີສີເດັ່ນສະດຸດຕາ, ສີໜຸ່ມນວນ, ສີເຢືອກເຢັນຕາ, ສີຮ້ອນແຮງ ແລະ ອື່ນໆ ...

ສ່ວນອຸທິນ ບຸນຍາວົງ ກໍມີວາດແຕ່ງທີ່ເປັນເອກະລັກຂອງຕົນເອງ ນັ້ນກໍຄືການເລີ່ມເລື່ອງດ້ວຍປະໂຫຍກງ່າຍ ໆ ທໍາມະດາ ໆ ແລະ ບາງເທື່ອກໍສັ້ນໆ. ຄວາມງ່າຍດາຍ ຈະດຶງດູດຜູ້ອ່ານໃນທັນທີ ທີ່ສາຍຕາສໍາຜັດກັບແຖວອັກສອນໃນຕອນຕົ້ນ ແລ້ວຈະພາທ່ານໄປເຖິງແຖວສຸດທ້າຍຂອງເລື່ອງ. ແຕ່ການຂຽນເລື່ອງໃຫ້ອ່ານງ່າຍບໍ່ແມ່ນເລື່ອງງ່າຍຄືດັ່ງຫລາຍຄົນຄິດ, ຫາກແຕ່ຜູ້ຂຽນຈະຕ້ອງມີຄວາມຊໍານານ ມີຄວາມປະນີດໃນການສ້າງສັນພົນງານຊຶ່ງສັ່ງລວມມາໄດ້ຈາກປະສົບການ ແລະ ການຮຽນຮູ້ເປັນໄລຍະເວລາດົນສົມຄວນ.

ເລື່ອງສັ້ນໃນປຶ້ມຫົວນີ້ ສ່ວນຫລາຍໄດ້ຮັບການພິມເຜີຍແຜ່ມາແລ້ວໃນຫນັງສືພິມ ແລະ ວາລະສານຢູ່ພາຍໃນປະເທດ ແລະ ບາງເລື່ອງໄດ້ຮັບການແປ ແລະ ພິມລົງໃນວາລະສານຂອງຕ່າງປະເທດມາແລ້ວ.

ກົມວັນນະຄະດີ ມີຄວາມພູມໃຈສະເຫນີປຶ້ມຫົວນີ້ ຕໍ່ທ່ານຜູ້ອ່ານ. ມັນເປັນໂຮມເລື່ອງສັ້ນທີ່ໃຫ້ແງ່ຄິດຫລາຍດ້ານ ໂດຍສະເພາະດ້ານມະນຸດສະທໍາ ຊຶ່ງທຸກຄົນຈະຕ້ອງມີປະຈໍາໃຈທັງນີ້ເພື່ອໃຫ້ສັງຄົມດໍາລົງຢູ່ຢ່າງສະຫງົບປອດໃສ ທ່າມກາງທໍາມະຊາດສິ່ງແວດລ້ອມທີ່ປາສະຈາກຮ່ອງຮອຍຂອງຜູ້ທໍາລາຍທັງມວນ.

ວຽງຈັນ, ວັນທີ 30 ຕຸລາ 1990.
ດຣ. ທອງຄໍາ ອ່ອນມະນີສອນ
ຫົວຫນ້າກົມວັນນະຄະດີ.

# ສາລະບານ


| ເລື່ອງ | ໜ້າ |
|---|---|
| ນົກບິນຂ້າມປາຍຕານ | 7 |
| ໝົກເກົ່າ | 13 |
| ປະກອບສ່ວນ | 23 |
| ແພງແມ່ | 29 |
| ຈຳປາໜ້າບ້ານ | 35 |
| ໝູ່ພໍ່ | 41 |
| 50ກີບ | 47 |
| ດົກກັບແດ້ງ | 53 |
| ຍາມແມ່ຈາກໄປ | 63 |
| ແຮງເສຍສະຫລະ | 71 |
| ສຽງຈາກທົ່ງໄຫຫີນ | 81 |
| ຄືນງາມ | 89 |

# ນົກບິນຂ້າມປາຍຕານ

ຕົ້ນເດືອນສາມ, ດອກຈານຕົ້ນແຄມທົ່ງ ບານເຮືອງເຮື່ອ ຕ້ອງກັບແສງຕາເວັນຍາມຄ້ອຍຄ່ຳ ເປັນສີແດງສົດໃສ ຈົນບາດຕາ. ກັດໄປອີກບໍ່ໄກ ຕົ້ນຕານຕົ້ນຫນຶ່ງຢືນໂດດເດັ່ນ ເບິ່ງຄືວ່າບໍ່ຫວັ່ນໄຫວຕໍ່ຟ້າຝົນລົມແດງ ແລະ ແສງແດດແຕ່ຢ່າງໃດ. ມັນຕັ້ງຢູ່ຢ່າງຫມັ້ນຄົງ ຢ່າງສະຫງ່າມາແຕ່ໃດໆ. ຊາວຊົນນະບົດແຫ່ງນີ້ ມັກກີເອົາມັນເປັນບ່ອນບອກເວລາ. ເມື່ອຕາເວັນຂຶ້ນສູງຊື່ປາຍຕານ ກໍຫມາຍຄວາມວ່າເປັນເວລາທ່ຽງ ແລະ ເມື່ອຕາເວັນຄ້ອຍລົງຈົນຢູ່ລະດັບດຽວກັບປາຍຕານ ກໍແມ່ນເວລາຕ້ອນງົວຄວາຍເຂົ້າແຫລ່ງ, ສ່ວນແມ່ເຮືອນກໍຈັດແຈງດັງໄຟຫນຶ້ງເຂົ້າ

ຄວັນສີຂາວລອຍຂຶ້ນຈາກເຮືອນຫລັງນີ້ຫລັງນັ້ນ, ມັນເປັນຄວັນໄຟຈາກໂດ້ນຟືນ ແລະ ອາຍຈາກຫວດຫນຶ້ງເຂົ້າ, ແສງຕາເວັນຍາມແລງສ່ອງລອດງ່າໄມ້ ໄປກະທົບຄວັນທີ່ວ່ານັ້ນ ເຮັດໃຫ້ເກີດເປັນບ່ອນກ່ານໆ ຢັ່ງຢາຍຢູ່ທຸກແຫ່ງຫົນ ແລະ ລອຍລ່ອງຢູ່



แต้มโดย : ทองมะนี

ກາງອາກາດ.

ນາງອຸ່ນ ໜຶ້ງເຂົ້າປະໄວ້ແລ້ວກໍມານັ່ງຢູ່ຊານກັບລູກຊາຍ ອາຍຸ 7 ປີ ຊື່ນິດ, ໜ້າບ້ານເປັນເດີ່ນກວ້າງ, ຟາກເດີ່ນເປັນຫົນທາງດິນຊຶ່ງແຕ່ກ່ອນມີແຕ່ກວຽນເທົ່ານັ້ນ ທຽວໄປມາ, ຕົກມາກາງປີທີ່ແລ້ວ ຈຶ່ງມັກມີລົດບັນທຸກຂົນໄມ້ ແລ່ນໃຫ້ເຫັນສະເໝີ. ຫົນທາງເລີ່ມມີຊີວິດຊີວາ ເພາະມີຄົນທະຍອຍຕ່າວຄືນເຮືອນພາຍຫລັງສຳເລັດວຽກງານປະຈຳວັນຕາມໄຮ່ນາຮົ້ວສວນ. ງົວຄວາຍຝູງທຳອິດກໍປະກົດຕົວ ແລະ ມີຄົນຍ່າງນຳຫລັງ ເພື່ອຕ້ອນໄປສູ່ແຫລ່ງ. ສຽງຂຶກສຽງໂປງ ດັງປະສານກັບສຽງໝາເຫົ່າເປັນສັນຍະລັກວ່າວັນໜຶ່ງໃນຊົນນະບົດ ພວມຈະສິ້ນສຸດລົງ.

ນາງອຸ່ນ ຫລຽວໄປທີ່ຫົນທາງ, ເບິ່ງການເຄື່ອນໄຫວຕ່າງໆ ເຊັ່ນ ຄົນກາຍທາງ ເຊິ່ງບາງຄັ້ງ ໃນຈຳນວນຄົນເຫລົ່ານັ້ນ ກໍມັກປະກົດມີທິດຕັນ ຜົວຂອງນາງຢູ່ນຳດ້ວຍ-ເຂົາພວມມຸ່ງໜ້າກັບຄືນເຮືອນຫລັງຈາກສຳເລັດວຽກງານປະຈຳວັນ. ນາງບໍ່ມີເຈດຕະນານັ່ງຄອງກ້າຜົວດອກ ແຕ່ບັງເອີນ ມີບາງຄັ້ງໃນຂະນະທີ່ນາງນັ່ງຢູ່ຊານນີ້ ກໍພໍດີຜົວນາງຕ່າວກັບມາ.

ຍາມແລງເກືອບທຸກມື້ ນາງອຸ່ນ ກັບລູກພາກັນນັ່ງຢູ່ຊານແນມເບິ່ງນົກບິນຂ້າມຟ້າເໜືອທົ່ງນາ, ເບິ່ງທຳມະຊາດກ່ອນອາທິດຈະລັບລົງຟາກສາຍພູດ້ານຕາເວັນຕົກ. ນົກເປັນໝູ່ສາມໝູ່ສີ່ ບິນມາຈາກທິດຕາເວັນອອກ ມຸ່ງໜ້າຄືນສູ່ຮັງ ທີ່ຢູ່ປ່າໄມ້ສີຂຽວໆ ດ້ານຕາເວັນຕົກຂອງບ້ານ. ບາງໝູ່ບິນຕ່ຳ, ບາງໝູ່ບິນສູງ, ແນມເຫັນເປັນຈຸດທີ່ເຄື່ອນໄຫວໄປທາງໜ້າ ຢ່າງສະໝ່ຳສະເໝີ, ຢ່າງບໍ່ລັງເລ. ທ່າມກາງນົກທັງຫລາຍ ທີ່ຕ່າວຄືນຮັງນີ້ ກໍມີນົກກົກຄູ່ໜຶ່ງບິນຮຽງກັນຢ່າງຊື່ກົງ ປານສອງເສັ້ນຂະໜານກັນໄປ, ມັນບິນຂ້າມຊື່ປາຍຕານ ເປັນປະຈຳທຸກວັນ,

ພິປີກບິນຕັດທ້ອງຟ້າຍາມແລງໄປຢ່າງສະຫງ່າງາມ. ນາງບໍ່ຮູ້ວ່າ ນົກສອງໂຕນີ້ບິນຄູ່ກັນ ແລະ ຂ້າມຊີ່ປາຍຕານມາແຕ່ດົນປານໃດ, ແຕ່ກໍສັງເກດເຫັນເປັນປະຈຳທຸກວັນ ນັບແຕ່ອອກພັນສາພຸ້ນມາ. ນາງຊີ້ໃຫ້ລູກຊາຍເບິ່ງນົກຄູ່ນີ້, ພາກັນແນມນຳ ຢ່າງບໍ່ວາງຕາໄປ ໃສ, ແລ້ວຄວາມຄິດຂອງນາງກໍລ່ອງລອຍໄປໄກ ... ນາງ ຢາກເປັນນົກ ຢາກບິນໄປໃນທ້ອງຟ້າອັນກວ້າງໄກ. ບາງຄັ້ງ ນົກຄູ່ນີ້ກໍລັບຫາຍໄປຈາກສາຍຕາເມື່ອບິນຫ່າງໄກອອກໄປ ແລ້ວກໍ ປະກົດໃຫ້ເຫັນອີກໃໝ່ ແຕ່ເປັນພຽງຈຸດນ້ອຍໆ.

" ພຸ້ນ ! ພຸ້ນແມ່ ຢູ່ຊື່ຕົ້ນໄມ້ສອງຕົ້ນສູງໆ ພຸ້ນ " ລູກ ຊາຍແສງຕາດີກວ່າ ຊີ້ໃຫ້ແມ່ເບິ່ງ.

" ໃສ, ຢູ່ໃສ ? ເອີເຫັນແລ້ວ,ເປັນຈຸດນ້ອຍໆ ເອົາ! ບໍ່ເຫັນແລ້ວບັດນີ້ "

" ຍັງເຫັນຢູ່ແມ່, ມັນນ້ອຍໆ ທີ່ປາຍເຂັ້ມ, ພຸ້ນບິນໄປ ພູ້ນ, ຍັງເຫັນນ້ອຍໆໆ ... ຮີບໍ່ເຫັນຈ້ອຍ, ບໍ່ເຫັນເລີຍບັດນີ້ ແມ່ ".

" ຈັກໜ່ອຍພໍ່ກໍຈະຕ່າວມາ " ນາງມັກບອກລູກແນວນີ້.

ນາງອຸ່ນ ນັ່ງຊົມນົກພ້ອມກັບລູກຊາຍຢ່າງສະບາຍອາລົມ. ບາງຄັ້ງບາງຄາວ ນາງກໍເຂົ້າໄປໃນເຮືອນຄົວ ເພື່ອຊຸກຟືນໃສ່ ເຕົາໄຟ. ຢູ່ເດີ່ນໜ້າບ້ານໃກ້ກັບຕີນຂັ້ນໄດ ມີກອງດິນຊາຍ ນ້ອຍໆ ພ້ອມກັບປ້ອງເບຍ ແລະ ປ້ອງແປັບຊີ ສອງ-ສາມປ້ອງ. ປ້ອງເປົ່າເຫລົ່ານີ້ມີສີສົດໃສ ເປັນທີ່ສະດຸດຕາ ແລະ ເປັນຂອງ ແປກໃໝ່ສຳລັບຊົນນະບົດແຫ່ງນີ້, ທ້າວນິດ ລູກຊາຍຂອງນາງ ເກັບມາຫລິ້ນ ເພາະມັນງາມດີ, ແຕ່ທັງແມ່ ທັງລູກຍັງບໍ່ເຄີຍຊີມ ລົດຊາດວ່າເປັນແນວໃດ. ສິ່ງເສດເຫລືອດັ່ງກ່າວ ປະກົດໃຫ້ ເຫັນເມື່ອທ້າຍປີທີ່ຜ່ານມາ, ມັນຢາຍຢູ່ຕາມຫົນທາງ ເຂົ້າບ້ານ

ພ້ອມທັງຊອງເປົ່າຢາເບັນເຊີນ ແລະ ຢາສາມທ້າ ແລະມາພ້ອມກັບລົດບັນທຸກໄມ້ ແລະ ລົດກະບະຄັນໃຫມ່ໆ ຊຶ່ງຄືນທີ່ນັ່ງຢູ່ລົດດັ່ງກ່າວນີ້ ທຳອິດຊາວບ້ານມັກເອີ້ນກັນວ່າ ພໍ່ຄ້າໄມ້, ແຕ່ຕໍ່ມາ ຜູ້ກົກເອີ້ນບໍ່ມັກຄຳນີ້ ຈຶ່ງບອກໃຫ້ຊາວບ້ານເອີ້ນວ່າ ນັກທຸລະກິດ, ແຕ່ຄຳນີ້ ເປັນສັບໃຫມ່ ສຳລັບຊາວບ້ານ, ເຂົາເຈົ້າບໍ່ເຂົ້າໃຈຄວາມຫມາຍດີ ຈຶ່ງມັກເອີ້ນຕິດກັນໄປເລີຍວ່າ ນັກທຸລະກິດພໍ່ຄ້າໄມ້. ບາງຄັ້ງມີຜູ້ເຫັນນັກທຸລະກິດເຫລົ່ານີ້ ພາຍປືນບອກຍາວໆ ແລະ ວ່າສຳລັບໃຊ້ລ່າເນື້ອ.

ນົກຫລາຍໆໂຕ ບິນເທີນຟ້າ ຂ້າມທົ່ງນາ ໄປເກືອບຫມົດແລ້ວ, ຍັງເຫລືອພຽງແຕ່ຈຳນວນຫນ້ອຍ, ແຕ່ປະກົດວ່າມື້ນີ້ນາງ ແລະ ລູກບໍ່ເຫັນນົກຄູ່ນັ້ນທີ່ເຄີຍບິນຂ້າມປາຍຕານ ເປັນປະຈຳເລີຍ. ນາງບໍ່ຢາກເຊື່ອວ່າ ມັນປ່ຽນເສັ້ນທາງບິນ ຢ່າງກະທັນຫັນ ເພາະວານນີ້ກໍຍັງເຫັນບິນຂ້າມປາຍຕານຢູ່ ຫລືວ່າມີຄົນໄປຮາວີເຮືອນຮັງຂອງມັນ, ເອົາໄຂ່ມັນໄປແລ້ວ ມັນຈຶ່ງປ່ຽນບ່ອນຢູ່ ແລະ ຕ້ອງປ່ຽນເສັ້ນທາງບິນກັບຮັງ. ຄິດມາເຖິງຕອນນີ້ນາງຫລັບຕາໄວ້ ແລະ ບໍ່ຢາກໃຫ້ເປັນໄປເຊັ່ນນັ້ນ,ນາງຄິດເອົາວ່າ ມັນໄປຫາກິນໄກກວ່າເກົ່າ ຈຶ່ງບິນຕ່າວຄືນຮັງຊັກຊ້າ. ນາງຄອງເບິ່ງອີກຕໍ່ໄປ ແລະ ຫວັງວ່າຈັກຫນ່ອຍຄົງຈະເຫັນມັນບິນກັບມາ. ນາງສ້າງມະໂນພາບຂຶ້ນເອງ, ນາງເຫັນມັນເລີ່ມບິນອອກຈາກບ່ອນຫາກິນທີ່ຢູ່ໄກໆ, ມຸ່ງຫນ້າມາເລື້ອຍໆ ເທີນຟ້າມາຢ່າງສະຫງ່າ ເປັນຄູ່ເດີມ ຄູ່ຮັກທີ່ອະມະຕະ ບິນໃກ້ເຂົ້າມາ, ເຂົ້າສູ່ເຂດທົ່ງນາ, ອີກບໍ່ດົນກໍຄົງຂ້າມປາຍຕານ ຄືທຸກມື້ທີ່ຜ່ານມາ... ນາງແນມໄປທີ່ປາຍຕານອີກເທື່ອຫນຶ່ງ ແຕ່ບໍ່ປະກົດເຫັນນົກຄູ່ນັ້ນບິນມາເລີຍ.

ທິດຕັນ ຜົວຂອງນາງກັບມາຮອດເຮືອນແລ້ວ.

ກ່ອນໜ້ານີ້ຈັກໜ່ອຍ ລົດກະບະຄັນໜຶ່ງ ແລ່ນກາຍໜ້າບ້ານໄປ ພ້ອມດ້ວຍຂີ້ຝຸ່ນໄງ່ກຸ້ມນຳຫລັງ. ທິດຕັນເລົ່າວ່າ ພວກທີ່ຖືໄມ້ຍິງນົກໄດ້ສອງໂຕບັກໃຫຍ່ ເຫັນເອົາຫ້ອຍໃສ່ດ້ານຫລັງລົດກະບະໄປ.

ນາງອຸ່ນປາກບໍ່ອອກ. ນາງຮູ້ສຶກວ່າ ມີສິ່ງໃດສິ່ງໜຶ່ງໃນຮ່າງກາຍຂາດຫາຍໄປ, ມັນເຢັນວາບໃນຫົວໃຈ. ນາງພາວະນາວ່າຂໍຢ່າໃຫ້ແມ່ນ ນົກສອງໂຕທີ່ບິນຂ້າມປາຍຕານນັ້ນເລີຍ. ລົມລະດູແລ້ງພັດມາຄ່ອຍໆ, ດວງອາທິດລັບສັນພູໄປແລ້ວ,ຄວາມມືດເລີ່ມເປັນເງົາບາງໆ, ນາງຍັງພໍຫລຽວເຫັນປ່ອງເບຍ ປ່ອງແປັບຊີ ທີ່ວາງກຸ້ມຢູ່ໜ້າເຮືອນ ມັນຈະມີເພີ່ມຂຶ້ນ ອີກຫລາຍປ່ອງທັ້ງໆ ທີ່ນາງບໍ່ສາມາດຊື້ມາດື່ມໄດ້. ພ້ອມດຽວກັບຈຳນວນນົກກໍຈະຫລຸດລົງ ໄປເທື່ອລະໂຕສອງໂຕ ຈາກທ້ອງຟ້າ ເໜືອທົ່ງນາແຫ່ງນີ້.

ເມື່ອຫລາຍວັນມາແລ້ວ ນາງອຸ່ນ ສັງເກດເຫັນລົດແກ່ໄມ້ເພີ່ມຂຶ້ນ ມັນແລ່ນມຸ່ງໜ້າໄປຍັງປ່າໄມ້ສີຂຽວຢູ່ທາງດ້ານຕາເວັນຕົກ ບ່ອນທີ່ນົກທັງຫລາຍອາໄສຢູ່. ທົນທາງເສັ້ນດຽວທີ່ຜ່ານບ້ານສອກຫລີກແຫ່ງນີ້ ໄງ່ກຸ້ມໄປດ້ວຍຂີ້ຝຸ່ນ ຢ່າງບໍ່ເຄີຍເປັນມາກ່ອນ. ລະອອງຝຸ່ນປິວໄປຈັບໃບໄມ້ຕາມແຄມທາງຈົນມົວໝອງ ແລະສ່ວນໜຶ່ງລອຍໄປແປດເປື້ອນດອກຈານ ທີ່ພວມບານເຮືອງເຮື່ອຢູ່ເທິງຕົ້ນແຄມທົ່ງຕົ້ນນັ້ນ.

ນັບແຕ່ມື້ນັ້ນມາ ນາງອຸ່ນ ແລະ ລູກ ບໍ່ເຫັນນົກຄູ່ນັ້ນບິນຂ້າມປາຍຕານອີກເລີຍ.

---

ພິມເທື່ອທຳອິດ, ເດືອນກຸມພາ 1990, ໃນວັນນະສິນ.

# ຫມີກເກົ່າ

ເມື່ອນາງປົວອາບນ້ຳແລ້ວ ຕາເວັນຍັງບໍ່ທັນລັບພູ, ແດດເຫລືອງອ່ອນຍັງທາບລົງທີ່ປາຍໄມ້ແຄມນ້ຳ ແລະ ສະທ້ອນເປັນເງົາເຫລື້ອມຍິບຍັບຕາມຫນ້ານ້ຳທີ່ໄຫລຊ້າໆ. ນາງເອົາຜ້າປອກທີ່ປັ້ນດີແລ້ວພາດໃສ່ແຂນ ພວມຈະຍ້າຍບາດຕີນກ້າວທຳອິດຂຶ້ນຕະຝັ່ງ ກໍພໍດີສາຍຕາໄປພົບເອົາວັດຖຸເຫລື້ອມໆ. ນາງເດ່ມືໄປຈັບຂຶ້ນມາເບິ່ງ, ມັນຫນັກໆ ມັນມີຄ່າ ມັນແມ່ນສາຍແອວເງິນ !

ນາງຫລຽວໄປອ້ອມຂ້າງ. ຍ່ານໃຕ້ລົງໄປບໍ່ໄກ ມີຄົນພວມອາບນ້ຳຢູ່ສອງ-ສາມຄົນ. ນາງເຫັນວ່າບໍ່ມີໃຜສົນໃຈເບິ່ງຕົນ ນາງຈິ່ງຊຸກເຊື່ອງວັດຖຸສີເງິນນັ້ນໄວ້ກ້ອງຜ້າປອກ ແລ້ວຍ່າງຂຶ້ນຕະຝັ່ງ, ມຸ່ງຫນ້າຄືນສູ່ເຮືອນ ທັງໃຈກໍເຕັ້ນບໍ່ເປັນປົກກະຕິ. ນາງບໍ່ທັນຄິດວ່າຈະໄປຖາມຫາເຈົ້າຂອງແລ້ວສົ່ງຄືນ ຫລືຈະເອົາໄວ້ເປັນສົມບັດຂອງຕົນເອງ ເພາະຄວາມຄິດທຳອິດ ກໍແມ່ນຮີບອອກໃຫ້ຫວິດຈາກທ່ານ້ຳໄວໆ ເພື່ອບໍ່ໃຫ້ຄົນອື່ນມາເຫັນ. ແຕ່ທັນ



ແຕ້ມໂດຍ : ກອງມະນີ

ທີ ທີ່ນາງພົບຕະຝັ່ງ ກໍເຈີກັບນາງອ້ອຍ ຊຶ່ງເຮັດໜ້າຫລ່າຕາຕື່ນ ເຄິ່ງຍ່າງເຄິ່ງແລ່ນມາ.

" ເຫັນເຂັມຂັດເງິນຂ້ອຍບໍ່ ? " ນາງອ້ອຍຖາມ.

" ບໍ່ເຫັນໃດລະ " ນາງປີວຕອບແບບອັດຕະໂນມັດ ທັງເຮັດສຽງໃຫ້ປົກກະຕິທີ່ສຸດ.

ນາງອ້ອຍແລ່ນລົ້ວລົງໄປທ່ານ້ຳ ໂດຍບໍ່ສົ້ຫຍັງຕື່ມ ເພື່ອຟ້າວຊອກຫາສິມບັດຂອງຕົນທີ່ລືມໄວ້.

ກັບມາຮອດເຮືອນ ນາງປີວຈັບເຂັມຂັດເບິ່ງດ້ວຍມືສີ່ສັ່ນໆ ນາງບໍ່ມີປະສົບການເລື່ອງລັກເຄື່ອງລັກຂອງ ຫລືໄດ້ສິ່ງມີຄ່າຂອງຄົນອື່ນທີ່ເຮັດຕົກເຮ່ຍ. ນາງລອງເອົາຮັດແອວເບິ່ງທັງປິ່ນຊ້າຍປິ່ນຂວາຢູ່ໜ້າແວ່ນ ແລ້ວກໍສ່ອງເບິ່ງໜ້າຕົນເອງ ມັນບໍ່ສົດຊື່ນ, ມີແຕ່ແວວກັງວົນ, ມີແຕ່ຄວາມລະແວງສົງໄສ ... ມີຄຳຖາມຕັ້ງຂຶ້ນມາຮອບດ້ານ :

" ເຂົາຊິສືບຮູ້ວ່າ ເຮົາເປັນຜູ້ເອົາບໍ່ ? " ນາງຄິດ.

" ບໍ່ມີທາງຮູ້ໄດ້ ເພາະຄົນລົງອາບນ້ຳທ່ານີ້ ມີຫລາຍ, ເວົ້າໄດ້ວ່າເກືອບໝົດບ້ານ ". ນາງຕອບເອງ.

" ຊິບອກພໍ່ແມ່ດີບໍ່ ?"

" ກ້າບອກ ເພິ່ນກໍຈຳໃຫ້ເອົາໄປສົ່ງຄືນ. ແຕ່ເຮົາໄດ້ປະຕິເສດນາງອ້ອຍໄປແລ້ວວ່າບໍ່ເຫັນ,ໄປປັ່ນຄວາມຊິເປັນບໍ່ ?"

ນາງປີວຖາມຕົນເອງໄປມາ ແລະ ຫາຄຳຕອບບໍ່ທັນໄດ້, ໃຈໜຶ່ງນາງຢາກສົ່ງຄືນ, ແຕ່ໃຈໜຶ່ງຊ້ຳຢາກໄດ້. ນາງເປັນລູກສາວຄອບຄົວຊາວນາທີ່ຂາດເຂີນສົມຄວນ, ພໍ່ແມ່ບໍ່ຢູ່ໃນການະທີ່ຈະຊື້ເຂັມຂັດເງິນໃຫ້ລູກໄດ້ເລີຍ. ກ້າເອົາໄວ້ ນາງກໍຕ້ອງຄອຍໄປອີກດົນ ກວ່າຈະເອົາອອກມາໃສ່ໄດ້ ເພາະບ້ານທີ່ນາງຢູ່ເປັນພອງຊົນນະບົດນ້ອຍໆ ຊຶ່ງທຸກຄົນຮູ້ຈັກໜ້າກັນ ແລະ ກ້າມີຜູ້

ໃດຜູ້ໜຶ່ງເອົາເຄື່ອງຂອງກັນໄປໃຊ້ ກໍເປັນທີ່ຮູ້ຈັກກັນໂລດ.ນາງຈະຕ້ອງຄອຍຕໍ່ໄປ ໃຫ້ທຸກຄົນໃນບ້ານນີ້ ລືມເລື່ອງນີ້ໄປສາກ່ອນ. ເມື່ອຮອດເວລານັ້ນແລ້ວ ນາງຈະບອກພໍ່ແມ່ວ່າແນວໃດ, ເອົາເຂັມຂັດມາແຕ່ໃສ ? ບັນຫາໄດ້ຂະຫຍາຍຕົວໄປຕື່ມອີກ ນັ້ນຄືນາງຈະຕ້ອງຕົວະພໍ່ແມ່ວ່າແນວໃດ ຈຶ່ງຈະສົມເຫດສົມຜົນ.

ນາງຄິດເຫັນໜ້ານາງອ້ອຍ ທີ່ເປັນຄົນບ້ານດຽວກັນ ຊຶ່ງຢູ່ຫົວບ້ານ. ນາງເປັນສາວຂຶ້ນໃໝ່ ແລະ ຫາກໍເລີ່ມໃຊ້ສາຍແອວເງິນເມື່ອປີກວ່ານີ້. ກ່ອນໜ້ານັ້ນ ນາງໃຊ້ແຕ່ເຂັມຂັດທຳມະດາ, ພໍ່ແມ່ບໍ່ອະນຸຍາດໃຫ້ໃຊ້ເຂັມຂັດເງິນເພາະຢ້ານນາງຮັກສາບໍ່ກຸ້ມ. ນາງເປັນກຳພ້າແມ່ແຕ່ອາຍຸສິບປີ. ເມື່ອແມ່ຕາຍໄປໄດ້ສີ່ປີ ພໍ່ກໍເອົາເມຍໃໝ່ ແລະ ຢູ່ຮ່ວມຊີວິດກັນມາໄດ້ສອງປີປາຍແລ້ວ. ນາງປົວຍັງຈື່ໄດ້ດີ ຕອນທີ່ປ້າສ້ອຍ ແມ່ຂອງນາງອ້ອຍເສຍຊີວິດ ຍ້ອນອອກລູກແລ້ວເສຍເລືອດຫລາຍ, ລູກຕັ້ງຫົກຄົນຕ້ອງເປັນກຳພ້າແມ່. ມັນເປັນທຸກຂະເວທະນາ ຂອງເພື່ອນຮ່ວມບ້ານດຽວກັນ.

ຄິດມາຮອດຕອນນີ້ແລ້ວ ນາງປົວກໍຢາກເອົາເຂັມຂັດ ໄປສົ່ງຄືນ, ແຕ່ກໍມີຄວາມຄິດອັນໜຶ່ງມາຫັກຫ້າມໄວ້. ນາງຄິດແຕ່ວ່າ ບໍ່ມີຜູ້ໃດຮູ້ເຫັນ, ເອົາໄວ້ກໍຄົງບໍ່ເປັນຫຍັງ, ຫລື ຖ້າມັນຈະມີບັນຫາໃນພາຍໜ້າ ນາງກໍອາດເອົາໄປຂາຍທີ່ຮ້ານເຄື່ອງເງິນຢູ່ໃນຕົວເມືອງ, ຄວາມຄິດອັນຫລັງນີ້ ເຮັດໃຫ້ນາງເຂົ້າຂ້າງຕົນເອງ. ແຕ່ສະຕິຮັບຜິດຊອບຂອງນາງກໍບອກນາງວ່າ : ເອົາຂອງເພິ່ນ ມັນບໍ່ດີ, ມັນບາບ !

ນາງມ້ຽນເຂັມຂັດໄວ້ດີໆ ແລ້ວອອກຈາກຫ້ອງມາ. ນາງຫລຽວລ້ອກຫລຽວແລັກຄິດແຕ່ວ່າ ນາງອ້ອຍຊິມາຫາຢູ່ເຮືອນ.

ຕອນຄ່ຳມື້ນັ້ນກວານບ້ານ* ເອີ້ນລູກບ້ານຊາວກວ່າຄົນໃຫ້ໄປໂຮມຢູ່ເຮືອນ. ຄົນທີ່ຖືກເອີ້ນໄປ ແມ່ນພວກທີ່ລົງອາບນ້ຳທ່ານັ້ນກ່ອນຕາເວັນຈະຕົກດິນເລັກນ້ອຍ. ຄອບຄົວລຸງພົງທີ່ຕັ້ງເຮືອນຢູ່ງອຍທ່ານ້ຳເປັນພະຍານບອກວ່າມີຜູ້ໃດແດ່ລົງອາບນ້ຳຕອນນັ້ນ, ໃນຈຳນວນນີ້ ມີນາງປີວລວມຢູ່ນຳດ້ວຍ. ນອກຈາກນັ້ນ ກໍມີຜູ້ອາວຸໂສໃນບ້ານນີ້ເຂົ້າຮ່ວມນຳ ສີ່-ຫ້າຄົນ.

ກວານບ້ານ ແລະ ຜູ້ອາວຸໂສໄດ້ເວົ້າລົມ ຊັກຊວນ ແລະ ຂໍຮ້ອງໃຫ້ຜູ້ທີ່ໄດ້ເອົາເຂັມຂັດນັ້ນສົ່ງຄືນເຈົ້າຂອງເດີມ. ມີການໂສ້ເຫລັກັນ, ທຳອິດກໍດັງຄ່ອຍໆ, ຕໍ່ມາ ສຽງກໍຟົດສະນັ່ນ ແຕ່ສະຫລຸບແລ້ວບໍ່ມີຜູ້ໃດຍອມຮັບວ່າໄດ້ເອົາ.

ກວານບ້ານຄິດຫາວິທີໃຫມ່ ແລ້ວກໍບອກວ່າ ໃຫ້ທຸກຄົນເຮັດຫມີກເກົ່າ ໂດຍກຳນົດເອົາຕອນຄ່ຳຂອງມື້ຕໍ່ມາ ເປັນມື້ສົ່ງຫມີກເກົ່າທີ່ເຮືອນກວານບ້ານເອງ. ເປັນການໃຫ້ເວລາແກ່ຜູ້ກະທຳຜິດໄປຄິດຮິ່ນຕອງ.

ນາງປີວຍ່າງກັບຄືນເຮືອນ ໂດຍພະຍາຍາມເຮັດທ່າທາງໃຫ້ປົກກະຕິທຳມະດາທີ່ສຸດ, ແຕ່ຍິ່ງເຮັດ ກໍຍິ່ງຮູ້ສຶກວ່າ ມັນບໍ່ທຳມະດາ. ນາງຮູ້ສຶກວ່າ ມີແສງຕາຫລາຍຄູ່ຕິດຕາມນາງ ໄປທຸກບາດຍ່າງ. ເມື່ອນາງໄອອະແຮມ ກໍຮູ້ສຶກວ່າມັນບໍ່ເປັນໄປແບບທຳມະຊາດ, ເມື່ອນາງຫົວກໍຮູ້ສຶກວ່າມັນແຫ້ງກະແດ້ງ, ເວົ້າຈາຄວາມໃດກໍຄືວ່າດັດຈະຫລິດ.

ນາງປີວຄິດຫນັກ ຈິດບໍ່ເບີກໃຈບໍ່ບານ ຄິດຢ້ານແຕ່ເຂົາຈະນຳມາຄົ້ນເຮືອນ ເພື່ອຫາສາຍແອວ. ມື້ຕໍ່ມາ ຂະນະທີ່ນາງນັ່ງຢູ່ໃນເຮືອນ ພວມຄິດລັງເລກ່ຽວກັບສາຍແອວ ຕັດສິນໃຈບໍ່ໄດ້

---

* ກວານບ້ານ : ປະທານບ້ານໃນສະໄຫມກ່ອນ

ວ່າຈະເຮັດແນວໃດ ກໍພໍດີໄດ້ຍິນສຽງນາງອ້ອຍ ດັງຂຶ້ນທີ່ປາກປະຕູເຂົ້າບ້ານ.

" ມີໃຜຢູ່ບໍ່ ?" ນາງອ້ອຍເອີ້ນມາໃສ່ຄົນໃນເຮືອນ.

ນາງປີວຕົກຂະຫມ່າຫນ້າຈືດ ຫົວໃຈເຕັ້ນຕູມຕາມ. ນາງໄປສ່ອງປ່ອງຢູ່ຕາມຝາເຮືອນເບິ່ງນາງອ້ອຍ ທີ່ພວມຍ່າງເຂົ້າມາບໍລິເວນບ້ານ. ບໍ່ທັນດົນ ແມ່ຂອງນາງປີວທີ່ເຮັດວຽກ ຍ້ອມຜ້າຫມໍ້ນິນຢູ່ຫລັງບ້ານ ຮ້ອງຕອບວ່າ " ປ້າຢູ່ພີ້ ".

ນາງອ້ອຍຍ່າງກົງໄປທີ່ຫລັງບ້ານ ທັງເວົ້າວ່າ : " ກະດຽວວ່າບໍ່ມີໃຜຢູ່ຊັ້ນດອກ, ມິດອິມສິມ, ແມ່ປ້າ ຂ້ອຍມາຂໍຢືມຂັນໃດນຶ່ງເຈົ້າໄປກ່າຍຂຶ້ນເກັບພູ. ອີ່ແມ່ຊິໄປຢາມພີ່ນ້ອງເລີຍຢາກໄດ້ພູໄປຕ້ອນເຂົາເຈົ້າ ".

" ເອີ ເອົາໂລດ, ຂັນໃດຢູ່ຂ້າງເລົ້າຫັ້ນ. ເປັນຈັ່ງໃດອ້ອຍ ຍັງບໍ່ເຫັນທວະສາຍແອວໂຕ ."

" ບໍ່ເຫັນນ່າແມ່ປ້າ. ຢ້ານເສຍເລີຍແລ້ວລະ. ອີ່ແມ່ກ່າຮ້າຍວ່າ ຮັກສາຂອງບໍ່ກຸ້ມ."

ນາງປີວທີ່ສັງເກດຟັງຢູ່ເທິງເຮືອນ ເມື່ອຮູ້ຄັກວ່າ ນາງອ້ອຍບໍ່ໄດ້ມາທວງຖາມເລື່ອງສາຍແອວ ກໍຮູ້ສຶກໂລ່ງໃຈ. ນາງລົງໄປຫານາງອ້ອຍທີ່ເດີ່ນບ້ານ.

" ແມ່ໂຕຊິໄປໃສ ທວະອ້ອຍ ." ນາງປີວຖາມໂດຍໃຫ້ນ້ຳສຽງເປັນກັນເອງທີ່ສຸດ.

" ລາວວ່າ ຊິໄປບ້ານຫລັກຊາວ ຫາພີ່ນ້ອງພາໄປລົມຫມໍສ່ອງເພື່ອສ່ອງເບິ່ງຂອງທີ່ເສຍວ່າຊັ້ນ, ບາງທີມື້ອື່ນຫລືມື້ຮື ຈຶ່ງຊິໄປ ."

ໄດ້ຍິນດັ່ງນີ້ ນາງປີວແຮ່ງປັ່ນປ່ວນໃນຫົວໃຈ ແລະ ຟ້າວພານາງອ້ອຍຍ່າງໄປທີ່ເລົ້າບ່ອນທີ່ຂັນໃດວາງຢູ່. ນາງຊ່ວຍຫາມ

ສັ້ນໃດ ໂດຍໃຫ້ນາງອ້ອຍອອກໜ້າ ຕົນເອງຢູ່ດ້ານຫລັງ.

" ຍັງບໍ່ເຫັນເທື່ອຫວະ ສາຍແອວ ? " ນາງປີວຖາມ.

" ບໍ່ເຫັນນ່າເອື້ອຍປີວ, ໝົດພົ້ນຊອກແລ້ວ, ຈັ່ງແມ່ນເສຍດາຍ."

" ບໍ່ແມ່ນຕົກນ້ຳຫວະລະ ?" ນາງປີວພະຍາຍາມຫັນເຫຄວາມຄິດຂອງນາງອ້ອຍ ທີ່ເຊື່ອວ່າມີຄົນເອົາ.

" ຄືຊິບໍ່ຕົກດອກ. ຂ້ອຍກໍລອງງົມເບິ່ງຕາມແຄມຝັ່ງແລ້ວບໍ່ເຫັນ."

ທັງສອງຍ່າງໄປຮອດປະຕູເຂົ້າບ້ານ, ແລ້ວນາງປີວກໍເອົາສັ້ນໃດໃຫ້ນາງອ້ອຍ ແບກໄປຄົນດຽວ ເພາະບໍ່ໜັກເກີນຄວນ.

ຄ່ຳມາ, ຫລັງຈາກກິນເຂົ້າແລງແລ້ວ ກໍມີການເຕົ້າໂຮມຢູ່ເຮືອນກວານບ້ານອີກ. ມື້ນີ້ມີຄົນມາຫລາຍກວ່າເກົ່າ ເຂົາເຈົ້າມາເບິ່ງ, ມາເປັນສັກຂີພະຍານ ເຫດການຄັ້ງນີ້. ຜູ້ທີ່ມີພັນທະຕ້ອງເອົາໝາກເກົ້າມານັ້ນ ໃຫ້ຍ່າງຜ່ານໄປຫ້ອງໜຶ່ງ ຊຶ່ງປາສະຈາກຜູ້ຄົນ. ເຂົາເຈົ້າເອົາໝາກເກົ້າໃສ່ກະຕ່າມາໂດຍມີແນວປົກປິດກະຕ່າໄວ້ ເພື່ອບໍ່ໃຫ້ຜູ້ອື່ນເຫັນວ່າ ໝາກເກົ້າຂອງຕົນນັ້ນມີລັກສະນະຢ່າງໃດ ທັງນີ້ ເພື່ອຮັບປະກັນບໍ່ໃຫ້ຜູ້ໃດຮູ້ຈັກວ່າ ໝາກໃດເປັນຂອງໃຜ. ແຕ່ລະຄົນຈັບເອົາໝາກຂອງຕົນວາງໄວ້ຫ້ອງນັ້ນແລ້ວ ອອກມານັ່ງລວມຢູ່ນຳໝູ່ຂ້າງນອກ. ນາງປີວກໍເອົາໝາກເກົ້າມາດ້ວຍ. ໝາກເກົ້ານີ້ຫໍ່ດ້ວຍໃບຕອງກ້ວຍ, ທາງໃນມີຂີ້ເກົ້າ, ໝາກພິກ ອັນເປັນສັນຍາລັກຂອງຄວາມເຈັບແສບ ຮ້ອນຮົນ ຖ້າຜູ້ໃດລັກເອົາເຄື່ອງຄົນອື່ນ. ເມື່ອການວາງໝາກເກົ້າໃນຫ້ອງນັ້ນສຳເລັດລົງແລ້ວ ໝາຍຄວາມວ່າບໍ່ມີຜູ້ໃດກີໝາກເກົ້າມາອີກ ກໍຮອດເວລາສຳຄັນທີ່ທຸກຄົນຄອງຄອຍ. ກວານບ້ານໄປຂົນເອົາໝາກເກົ້າອອກມາວາງຕໍ່ໜ້າທຸກຄົນ, ບໍ່ມີຜູ້ໃດຮູ້ວ່າໝາກ

ໃດເປັນຂອງຜູ້ໃດ.

ຊາຍຜູ້ອາວຸໂສຄົນໜຶ່ງເຮັດໜ້າທີ່ໄຂໝຶກເກົ່າໄປແຕ່ລະໝຶກ. ລາວໄຂໝຶກອອກຢ່າງລະມັດລະວັງ ບໍ່ຟ້າວບໍ່ຟັ່ງ,ກອດໄມ້ຂັດອອກ ແບໃບຕອງ ແລ້ວເອົາໄມ້ເຂ່ຍຂີ້ເກົ່າຊ້າໆ. ທຸກຄົນເບິ່ງດ້ວຍໃຈຈົດຈໍ່. ໝຶກທີ່ໜຶ່ງຜ່ານພົ້ນໄປ ໂດຍມີແຕ່ຂີ້ເກົ່າ ແລະ ໝາກພິກແດງ. ລາວໄຂໝຶກທີສອງ, ເຂ່ຍເບິ່ງສອງ-ສາມບາດ, ແລ້ວກໍເອົາໝຶກທີສາມ, ທີ່ລາວບໍ່ເຂ່ຍ ຫລາຍບາດກວ່ານັ້ນ ກໍເພາະເຂັ້ມຂັດເປັນຂອງໃຫຍ່, ພໍໄຂໝຶກອອກ ເຂ່ຍບາດດຽວກໍຮູ້ໂລດວ່າມີຫລືບໍ່ມີ, ບໍ່ຄືແຫວນຫລືຕຸ້ມຫູ ຊຶ່ງຈະຕ້ອງເຂ່ຍຫາຢ່າງກີ້ກ້ອນ.

ການໄຂໝຶກເກົ່າເປັນໄປຢ່າງໜ້າສົນໃຈ. ຜູ້ໃດກໍເຝົ້າເບິ່ງ ບໍ່ປາກບໍ່ເວົ້າ ເກືອບບໍ່ພິບຕາ ປານວ່າເຝົ້າເບິ່ງການໄຂປາກໄຫຄໍາ ທີ່ກຶກຂຸດມາຈາກໃຕ້ດິນ. ການໄຂດໍາເນີນໄປຮອດໝຶກທີສິບຫ້າ ແຕ່ກໍບໍ່ພົບສິ່ງທີ່ຕ້ອງການເລີຍ. ຫລາຍຄົນຄິດຢ້ານວ່າຈະເປັນການໄຮ້ປະໂຫຍດລ້າໆ.

ໝຶກທີສິບຫົກ, ສິບເຈັດ, ສິບແປດ, ແຕ່ກໍຄືເກົ່າ.

ຊາຍຜູ້ອາວຸໂສ ມີທ່າທາງໝົດກໍາລັງໃຈ ແຕ່ກໍຕ້ອງຢິບເອົາໝຶກຕໍ່ໄປມາໄຂ. ມັນເປັນໝຶກທີສິບເກົ້າ. ລາວກອດໄມ້ຂັດ, ໃບຕອງກຶກແບອອກ, ຂີ້ເກົ່າທີ່ເປັນກອງສູງ ພັງເຍື່ອຍລົງແລ້ວກໍປະກົດເຫັນວັດຖຸເຫລື້ອມໆທັນທີ. ສຽງຄົນໂຮແຊວຂຶ້ນປານແປເຮືອນຊິຫລຸ. ມັນເປັນສຽງດີໃຈມ່ວນຊື່ນ, ສຽງເວົ້າ,ສຽງຫົວ, ເປັນສຽງຂອງຜູ້ມາເບິ່ງເປັນສັກຂີພິຍານ, ສຽງຂອງຜູ້ທີ່ເອົາໝຶກເກົ່າມາ, ສຽງຂອງຜູ້ທີ່ເອົາເຂັມຂັດມາສົ່ງຄືນ ແຕ່ບໍ່ມີໃຜຮູ້ຈັກໜ້າ ແລະ ພິເສດກໍຄື ສຽງນາງອ້ອຍເຈົ້າຂອງເຂັມຂັດຊຶ່ງຕື້ນຕັນໃຈຈົນນໍ້າຕາໄຫລ. ສຽງທີ່ດັງຟົດສະນັ່ນນັ້ນ ສະແດງ

ອອກເກີງຄວາມສາມັກຄີຮັກແພງ, ຄວາມບໍລິສຸດຈິງໃຈຕໍ່ກັນ, ຄວາມເປັນນ້ອງ ເປັນອ້າຍກັນ ຊຶ່ງເຄີຍເປັນມາ ນັບຫລາຍເຊັ່ນຄົນ.

ການໄຂຫມຶກໄດ້ຍຸດຕິລົງ ກັບຫມຶກທີສິບເກົ້ານີ້, ຍັງອີກຫ້າທີກຫມຶກ ຊຶ່ງຊາຍຜູ້ອາວຸໂສເຫັນວ່າບໍ່ຈຳເປັນໄຂຕໍ່.

---

ພິມເທື່ອທຳອິດ, ເດືອນ ກໍລະກົດ 1990, ໃນວັນມະສິນ.

ວັນນີ້...
ຫລຽວສຸດສາຍຕານັ້ນ ເຮົາເຫັນຟ້າລິງຈອບດິນ
ມີສາຍພູສີຂຽວໆ ເມກລອຍສີບາງໆ
ຫ່າງແສນຫ່າງ ໄກແສນໄກ
ຫົວໃຈກະຫວີນຫາ ເພາະປ່າຂຽວສົດຊື່ນ
ແຕ່ຈະມີວັນໜຶ່ງ...
ຫລຽວສຸດສາຍຕາແລ້ວ ເຫັນຟ້າຈອບທະເລຊາຍ
ພູແປນປອກໂລ້ນ ເຫລືອແຕ່ດິນແດ່ນແດ້
ສາຍນ້ຳຢຸດໄຫລ ຕົ້ນໄມ້ເຫລືອແຕ່ຮອຍ
ຢ່າປ່ອຍໂອກາດໃຫ້ມີວັນນັ້ນເລີຍ....



ຮູບໂດຍ : ບຸນສີມ

# ປະກອບສ່ວນ

ເບິ່ງທ່າທາງແລ້ວ ກໍເຫັນວ່າ ເຂົາສະຫງົບ ງຽບດີ, ສຸຂຸມ, ເຢືອກເຢັນ, ບາກບັ່ນພາກພຽນ, ແຕ່ໃນຫົວໃຈເຂົານັ້ນ ມັນຮ້ອນຮົນຟົດເດືອດ. ເຂົານັ່ງຢູ່ແຈກະຫນົບ ກ້ອງຮົ່ມຕົ້ນສໍາສາ ທ່າມກາງສາຍລົມທີ່ປິວພັດມາເກືອບຕະຫລອດເວລາ, ແຕ່ສາຍລົມກໍຊ່ວຍຫຍັງບໍ່ໄດ້. ດ້ວຍຄວາມຊໍານິຊໍານານ ເຂົາໃຊ້ເຂັມ, ໄມ້ຄ້ອນ ແລະ ອຸປະກອນອື່ນໆ ອີກສອງສາມຊະນິດທໍາການຫຍິບເກີບຂາດ ແລະ ເປ່ເພ. ພຽງເວລາບໍ່ດົນ ເກີບທີ່ເຈົ້າຂອງໃຊ້ການບໍ່ໄດ້ແລ້ວນັ້ນ ກໍກັບກາຍເປັນເກີບທີ່ດີ ທີ່ໃຊ້ການໄດ້ອີກ, ແລ້ວເຂົາກໍຈັບເອົາກິ່ງໃຫມ່ ຫລືຄູ່ໃຫມ່ມາແປງຕໍ່ໄປເລື້ອຍໆ. ຢູ່ຕໍ່ຫນ້າເຂົາ ມີແກັດໄມ້ຊຶ່ງເຕັມໄປດ້ວຍເກີບ. ແກັດທີ່ວາງຢູ່ນີ້ສະແດງວ່າ ເຂົາປັກຫລັກທໍາມາຫາກິນຢູ່ບ່ອນນີ້, ມື້ໃດ ບໍ່ມີແກັດ ກໍບໍ່ເຫັນເຂົາ ຊຶ່ງກໍມັກເປັນມື້ຝົນຕົກ. ໂດຍປົກກະຕິເຂົາຈະມາປະຈໍາຢູ່ບ່ອນນີ້ທຸກມື້. ມັນເປັນກະຫນົບທີ່ມີຄົນທ່ອງທ່ຽວໄປມາຫລາຍ

ສະດວກສະບາຍສຳລັບຜູ້ທີ່ຈະເອົາເກີບແອ່ມາແປງ. ບາງຄົນກໍຄອງກ້າເອົາພ້ອມບາດໂລດ, ບາງຄົນກໍປະໄວ້ແລ້ວນັດເວລາມາເອົາຕາມທີຫລັງ.

ເຂົານັ່ງແປງເກີບຢູ່ຢ່າງມິດໆ, ບາງຄັ້ງກໍເສືອດສາຍຕາໄປເບິ່ງເກີບຄູ່ໜຶ່ງ ຊຶ່ງເຈົ້າຂອງເອົາມາແປງ ເມື່ອເດືອນກວ່າມາແລ້ວ. ກ້າເຈົ້າຂອງເກີບມາເອົາ, ເຂົາກໍຈະໄດ້ເງິນຄ່າສ້ອມແປງເປັນເງິນຕັ້ງພັນຫ້າຮ້ອຍກີບ ! ມັນເປັນເກີບ ຊະນິດງາມ ໜັງດີ ທີ່ເຈົ້າຂອງເສຍດາຍຫລາຍສົມຄວນ ຈຶ່ງເອົາມາແປງ ໂດຍປ່ຽນພື້ນໃໝ່ທັງສອງກີ່ງ, ດັ່ງນີ້ຄ່າແປງຈຶ່ງແພງສົມຄວນ, ເຂົາຈື່ໄດ້ວ່າ ເຈົ້າຂອງເກີບເປັນຊາຍໜຸ່ມ ໜ້າຕາດີທ່າທາງກ້າວກີ່ງ. ເຂົາຄິດໄລ່ຄ່າແປງ ແລະ ບອກວ່າພາຍໃນສາມວັນໃຫ້ເຈົ້າຂອງມາເອົາ, ແຕ່ເມື່ອຮອດກຳນົດ ກໍປະກົດວ່າບໍ່ເຫັນເຈົ້າຂອງກັບຄືນມາເອົາເລີຍ, ເຂົາຄອງຄອຍ ມື້ນັ້ນມື້ນີ້ຈາກວັນເປັນອາທິດ, ຈາກອາທິດເປັນເດືອນ, ເດືອນໜຶ່ງຜ່ານໄປ ເດືອນທີສອງເຂົ້າມາ ແຕ່ບໍ່ເຫັນເຈົ້າຂອງເກີບມາເອົາ. ທີ່ເຂົາຄອງຄອຍດ້ວຍຄວາມກະວົນກະວາຍ ກໍເພາະເຂົາຢາກໄດ້ເງິນ, ເງິນທີ່ເຂົາຕ້ອງການທີ່ສຸດໃນຣະບະນີ້ ຈົນເຂົາຮູ້ສຶກເປັນຮ້ອນເປັນຮົນ.

ເຂົາເຮັດວຽກລຳພັງຄົນດຽວ ແຕ່ຫົວໃຈມັນແສນອຶກກະທຶກ. ຢູ່ຂ້າງເຂົາ ມີວິທະຍຸນ້ອຍໜ່ວຍໜຶ່ງທີ່ພວມກະຈາຍຂ່າວມັນເປັນຂ່າວທີ່ກະຕຸກເສັ້ນຂອງເຂົາທຸກສ່ວນໃນຮ່າງກາຍ.

*... ຍົນໂອວີ - 10 ຂອງຝ່າຍກົງກັນຂ້າມກົກທະຫານທ້ອງກິ່ນບໍ່ແຕນ ຍິງຕົກ ໃນວັນທີ 13/2/1988, ນັກບິນ ສອງຄົນກົກຈັບກັບທີ່. ທາງພາກພື້ນດິນ ທະຫານເຮົາຢູ່ປ້ອມ 1428 ຕ້ານຍັນການບຸກຂອງພວກກະທິງແດງ ທະຫານກ້າຕາຍຂອງຝ່າຍ*

*ກົງກັນຂ້າມໄວ້ໄດ້. ປ້ອມ 1370 ກໍຖືກບຸກຕີໜັກ ໂດຍສະເພາະຖືກກະຫລົ່ມດ້ວຍປືນໃຫຍ່. ຫລັງຈາກຝ່າຍກົງກັນຂ້າມໃຊ້ປືນໃຫຍ່ຍິງກະຫລົ່ມ ເປັນເວລາສີ່ຊົ່ວໂມງແລ້ວ ພວກກະທິງແດງກໍບຸກຂຶ້ນມາເພື່ອຈະຍຶດປ້ອມທັງສອງ ແຕ່ພໍມາໃກ້ຂຸມຄອງປະມານ 20 -30 ແມັດ ທະຫານເຮົາກໍເປີດສາກຍິງສຸມໃສ່, ການສູ້ຮົບເປັນໄປຢ່າງດຸເດືອດທີ່ສຸດ, ພວກກະທິງແດງ ພະຍາຍາມບຸກຂຶ້ນມາເປັນຫລາຍຊຸດ ແຕ່ກໍບໍ່ສາມາດຢ່ອງບາດຕີນເຂົ້າເຖິງຂຸມຄອງອ້ອມປ້ອມທັງສອງໄດ້. ປ້ອມ 1428, ປ້ອມ 1370 ແລະປ້ອມອື່ນໆ ຍັງເປັນຈຸດທີ່ໝັ້ນຂອງທະຫານເຮົາຢ່າງໝັ້ນຄົງ.*

ຂ່າວຈາກວິທະຍຸດັ່ງຕໍ່ໄປວ່າ: *ປະຊາຊົນຈາກແຫ່ງຕ່າງໆ ຈັດສິ່ງຂອງຂວັນ ໄປໃຫ້ອ້າຍນ້ອງທະຫານ ຢູ່ແນວໜ້າຢ່າງເປັນຂະບວນຟົດຟື້ນ. ມີຜູ້ບໍລິຈາກເງິນ, ເຄື່ອງໃຊ້, ເຄື່ອງກິນ, ຢາດູດ ແລະ ອື່ນໆ, ພ້ອມທັງຂຽນຈົດໝາຍໄປອວຍໄຊໃຫ້ພອນແກ່ທະຫານຢູ່ແນວໜ້າທີ່ເຂດບໍ່ແຕນ ...*

ເມື່ອຟັງຂ່າວມາຮອດຕອນນີ້ແລ້ວ ເຂົາຮູ້ສຶກບໍ່ສະບາຍໃຈເພາະຕົນເອງຍັງບໍ່ໄດ້ບໍລິຈາກຫຍັງຈັກຢ່າງ,ແລ້ວເຂົາກໍໃຈຮ້າຍໃຫ້ເຈົ້າຂອງເກີບຄູ່ນີ້. ເຂົາຫວັງວ່າເມື່ອໄດ້ເງິນຈຳນວນພັນຫ້າຮ້ອຍກີບແລ້ວ ເຂົາຈຶ່ງຈະພໍແບ່ງສ່ວນ ຄື ເຄິ່ງໜຶ່ງເອົາໃຫ້ຄອບຄົວ ແລະ ອີກເຄິ່ງໜຶ່ງ ເອົາປະກອບສ່ວນຮ່ວມກັບປະຊາຊົນຄຸ້ມບ້ານຂອງເຂົາ ເພື່ອໄປຊື້ຂອງຂວັນ ມອບໃຫ້ທະຫານແນວໜ້າ. ເຂົາໄດ້ເງິນຈາກລູກຄ້າລາຍອື່ນໆຢູ່ ແຕ່ກໍພຽງເລັກໜ້ອຍເພາະເປັນການສ້ອມແປງພຽງເບົາບາງ ຊຶ່ງເຂົາໄດ້ຄ່າສ້ອມແປງພຽງ 70 - 100 ກີບເທົ່ານັ້ນ. ມື້ໜຶ່ງໆ ເຂົາໄດ້ເງິນ ປະມານ 400 - 500 ກີບ ຊຶ່ງນັບວ່າ ອັດຕະຄັດຂັດສົນສຳລັບລ້ຽງຄອບຄົວ.

ບາງຄັ້ງ ເຂົາກໍຄິດວ່າ ຈະຂາຍເກີບຄູ່ນີ້ ເພາະດົນເກີນຄວນແລ້ວ ແຕ່ເຈົ້າຂອງກໍບໍ່ມາທວງການເອົາຄືນ. ເຂົາເອງໄດ້ລົງທຶນໄປຊື້ພື້ນເກີບໃຫມ່ມາໃສ່, ຖ້າເຈົ້າຂອງ ບໍ່ມາເອົາແທ້ໆ ເຂົາກໍມີສິດຂາຍ ເພື່ອຈະໄດ້ເງິນຄືນ, ແຕ່ເຂົາກໍໄດ້ແຕ່ຄິດເທົ່ານັ້ນ, ເນື່ອງຈາກວ່າ ບໍ່ມີຜູ້ໃດອອກປາກຂໍການຊື້ຈັກເທື່ອ. ໃຈຫນຶ່ງ ເຂົາກໍຄິດວ່າ ເອົາໄວ້ຕໍ່ໄປສາກ່ອນ, ວັນຫນຶ່ງຂ້າງຫນ້າ ເຈົ້າຂອງຄົງກັບມາ. ບາງທີເຈົ້າຂອງອາດໄປຕ່າງແຂວງຢ່າງກະທັນຫັນ ຈິນບໍ່ມີເວລາມາເອົາເກີບ, ຫລື ອາດປະສົບບັນຫາທີ່ຄາດບໍ່ເຖິງກໍເປັນໄດ້. ເຂົາສົມມຸດເລື່ອງໄປເອງ ແຕ່ກໍບໍ່ໄດ້ຕັດສິນໃຈຢ່າງໃດ.

ເວລາຜ່ານໄປ, ຂ່າວການສູ້ຮົບຢູ່ແນວຫນ້າທີ່ເຂດບໍ່ແຕນມິດງຽບໄປ, ມີແຕ່ຂ່າວການປະຊຸມຂອງຄະນະກຳມະການປະສົມທະຫານ ລາວ - ໄທ ທີ່ບ້ານເຫມືອງແພ່, ຂ່າວການສົ່ງຄືນນັກບິນໄທສອງຄົນນັ້ນ ເພື່ອເຫັນແກ່ມະນຸດສະທຳ ແລະຄວາມສຳພັນອັນດີຕໍ່ກັນ, ຕໍ່ມາ ແມ່ນຂ່າວການປະດັບຫລຽນໄຊໃຫ້ແກ່ທະຫານທີ່ທຳການປ້ອງກັນພືນແຜ່ນດິນລາວ ໃນຄັ້ງນີ້.

ພິທີປະດັບຫລຽນໄຊ ຜ່ານໄປອີກສາມເດືອນ ແຕ່ເຈົ້າຂອງເກີບກໍຍັງບໍ່ປະກົດຕົວ.

ເຂົາເຮັດວຽກສ້ອມແປງເກີບຕໍ່ໄປຕາມເດີມ, ກ້ອງຮົ່ມຕົ້ນສຳສາຕົ້ນເດີມ, ແກັດໄມ້ແກັດເດີມ ແລ້ວວັນຫນຶ່ງ ຊາຍຫນຸ່ມເຈົ້າຂອງເກີບກໍກັບຄືນມາ, ເຂົາກ້າວລົງຈາກລົດທະຫານ ໂດຍມີໄມ້ເທົ້າຄ້ຳທີ່ກີກແຂນ ຍ່າງດ້ວຍຄວາມລຳບາກ. ຊ່າງແປງເກີບ ຢຸດເຮັດວຽກໄປຂະນະຫນຶ່ງ, ຈ້ອງເບິ່ງຊາຍຫນຸ່ມຢ່າງຕັ້ງໃຈ ແລະ ຢ່າງຄົນຄິດ. ຊາຍຫນຸ່ມຂາກຸດຂ້າງຫນຶ່ງ. ທຳອິດເຂົາບໍ່ແນ່ໃຈວ່າ ແມ່ນເຈົ້າຂອງເກີບຫລືບໍ່, ແຕ່ເມື່ອຊາຍຫນຸ່ມ

ຄືນນັ້ນຍ່າງກົງມາຫາເຂົາ ແລ້ວອອກປາກຖາມຫາເກີບ ເຂົາຈຶ່ງໝົດສົງໄສ.

" ເກີບຂ້ອຍ ເອົາມາແປງ 4 - 5 ເດືອນກ່ອນແລ້ວຕີ້ບໍ່ "

" ເອີແລ້ວ,ຄູ່ນີ້ແມ່ນຕວ່າ " ເຂົາຈັບເກີບອອກມາຈາກແກັດໄມ້.

" ແມ່ນລະ, ເປັນເທົ່າໃດເກາະ ເຮົາຕົກລົງກັນຕອນນັ້ນ ?"

ເຂົາອຶດອັດໃຈທີ່ຈະບອກວ່າ ຄ່າແປງເປັນເງິນເທົ່າໃດ, ມັນຄືມິຫຍັງມາຕັນຮູຄໍໄວ້ເມື່ອເຫັນເຈົ້າຂອງເກີບຍັງແຕ່ຂາເບື້ອງດຽວ. ເຂົາອົດບໍ່ໄດ້ ຈຶ່ງຖາມອອກໄປວ່າ :

" ຂໍໂທດ, ຂາເປັນຫຍັງ ? "

" ເອີ, ຂ້ອຍອາສາສະໝັກໄປແນວໜ້າຢູ່ບໍ່ແຕນ, ກົກລູກລະເບີດຂອງສັດຕູ ເລີຍຕ້ອງຕັດຂາຂ້າງໜຶ່ງ ... "

ຊ່າງແປງເກີບອ້າປາກຄ້າງ, ຄິດຢ່າງໜຶ່ງກໍພູມໃຈທີ່ໄດ້ພົບກັບນັກຮົບຕົວຈິງ ເພາະຜ່ານມາ ເຂົາໄດ້ຟັງແຕ່ຂ່າວ ຕາມວິທະຍຸ, ຄວາມເຫັນອົກເຫັນໃຈຕໍ່ຜູ້ທີ່ອຸທິດຕົນເພື່ອປະເທດຊາດ ກໍລົ້ນເຫລືອ ຈົນເຂົາເວົ້າຫຍັງອອກມາບໍ່ໄດ້ ດັ່ງໃຈຄິດຢາກເວົ້າ, ລົດທີ່ມາສົ່ງຊາຍໜຸ່ມກໍຍັງຕິດຈັກຄອຍກ້າຢູ່, ດັ່ງນີ້ ເຂົາຈຶ່ງເວົ້າແບບສະຫລຸບເລີຍວ່າ :

" ໂອ໋ຊັ້ນຫວະ,ເອີ ບໍ່ເປັນຫຍັງຂ້ອຍບໍ່ເອົາເງິນດອກ."

ເຈົ້າຂອງເກີບກ່າວຂອບໃຈ ແລ້ວຍ່າງກັບຄືນໄປຫາລົດ, ຊ່າງແປງເກີບແນມນຳຫລັງ ຈົນລົດຄັນນັ້ນ ລັບຫາຍໄປຈາກ

ປະກອບສ່ວນ

ສາຍຕາ. ເຂົາຮູ້ສຶກໂລ່ງໃຈ ເພາະໄດ້ປະກອບສ່ວນແລ້ວ.

---

ພິມເທື່ອທຳອິດ, ປີ 1990 , ໃນໂຮມເລື່ອງສັ້ນ "ແຕ່ນັ້ນ"
ຈັດພິມໂດຍ ອັນນະສິນ.

ເມື່ອມີປ່າໄມ້
ກໍມີຫ້ວຍນ້ຳໃສ
ຕົ້ນໄມ້ໄດ້ແຍງເງົາ
ຕາເວັນໄດ້ແຍງຟ້າ



ຮູບໂດຍ : ຈະເລີນໄຊ

# ແພງແມ່

ຫລັງຈາກຍ່າງຜ່ານປ່າມາປະມານ ສອງຊົ່ວໂມງ ພວກເຮົາກໍມາຮອດບ່ອນໂລ່ງ ຊຶ່ງຂ້າງທາງດ້ານຂວາມື ເປັນທົ່ງນາ, ດ້ານຊ້າຍມືເປັນສວນພືນລະປູກເຊັ່ນຝ້າຍ, ງາ,ໝາກແຕງ...

ເສັ້ນທາງກວ້າງພໍກວຽນທຽວໄດ້ ແລະ ໄປສຸດລົງບ່ອນທີ່ມີຕົ້ນໄມ້ຂຽວໆ ຊຶ່ງຕົ້ນພ້າວພົ້ນເດັ່ນຂຶ້ນກວ່າໝູ່. ຫລັງຄາເຮືອນປະກົດໃຫ້ເຫັນ ພຽງສອງ-ສາມຫລັງ ເນື່ອງຈາກກິກຕົ້ນໄມ້ປິດບັງ. ພວກເຮົາໃກ້ຈະຮອດຈຸດໝາຍປາຍທາງເຂົ້າໄປແລ້ວ.

ຄະນະເດີນທາງພວກເຮົາ ມີສາມຄົນນຳກັນ, ສອງຄົນເປັນນັກຂ່າວ ຊຶ່ງມາເກັບກຳຂໍ້ມູນກ່ຽວກັບການລົບລ້າງຄວາມບໍ່ຮູ້ໜັງສື ແລະ ຂ້າພະເຈົ້າໃນຖານະນັກຂຽນ ມາຊອກຮູ້ຮີດຄອງປະເພນີເກົ່າແກ່ໃນເຂດຊົນນະບົດ ແລະ ນິທານປາກເປົ່າ ເພື່ອບັນທຶກໄວ້ເປັນລາຍລັກອັກສອນ.

ຄວາມຮູ້ສຶກເກົ່າໆ ໄດ້ກັບຄືນມາອີກ ໃນດວງຈິດຂອງຂ້າ

ພວກເຮົາໃກ້ຈະຮອດຈຸດໝາຍປາຍທາງເຂົ້າໄປແລ້ວ . . . .



ພະເຈົ້າ, ເປັນຄວາມຮູ້ສຶກຂອງຄົນພາກກຸ້ມການແລ້ວກັບຄືນບ້ານເດີມ. ກິ່ນຂອງຫຍ້າຂິວ ( ຫຍ້າຝະລັ່ງ ) ຕາມແຄມທາງລອຍມາເຂົ້າດັງ, ສຽງສຽດສີຂອງກໍໄຜ່ດັງອີອດແອັດ, ສຽງຈັກຈັ່ນດັງວ່ອນມາແຕ່ໄກໆ ... ທັງຫມົດເຫລົ່ານີ້ ພາໃຫ້ຮູ້ສຶກວ່າ ຕົນເອງພວມມຸ່ງຫນ້າກັບຄືນສູ່ບ້ານເດີມ. ໃນຕົວຈິງ ພວກເຮົາພວມກັບສູ່ບ້ານເດີມ ຂອງບຸນຄໍ້າ ຫນຶ່ງໃນຄະນະເດີນທາງ ຂອງພວກເຮົາ.

ບຸນຄໍ້າ ສະແດງຄວາມຕື່ນເຕັ້ນອອກມາ ຢ່າງເຫັນໄດ້ຄັກເມື່ອພາບຊົນນະບົດແຫ່ງນີ້ ປະກົດຕົວຢູ່ຕໍ່ຫນ້າ.

" ຊາວປີແລ້ວທີ່ເຮົາອອກຈາກບ້ານໄປ, ພໍຫລຽວເຫັນປາກທາງເຂົ້າສູ່ບ້ານ ປະກົດວ່າຄວາມອິດເມື່ອຍ ຫນີໄປຫມົດ. ພາບບ່ອນນີ້ເຮົາຈື່ຈໍາໄດ້ຕິດຕາ." ເຂົາເອີ່ຍຂຶ້ນແກມສຽງຫົວ.

ບຸນຄໍ້າເລົ່າວ່າ ເຂົາເກີດຢູ່ບ້ານນີ້, ແມ່ເຂົາຕາຍ ເມື່ອເຂົາອາຍຸ 8 ປີ, ແລ້ວພໍ່ກໍໄປເອົາເມຍໃຫມ່ ຢູ່ບ້ານອື່ນ ແລະຍ້າຍຄອບຄົວໄປແຫ່ງໃຫມ່ເລື້ອຍໆ ສະໄຫມສົງຄາມ, ຈົນມາເຖິງດຽວນີ້ ເຂົາຈິ່ງມີໂອກາດກັບຕ່າວຄືນມາ. ເຂົາມີລຸງ ຊຶ່ງເປັນອ້າຍແມ່ ຍັງຄົງຢູ່ໃນບ້ານນີ້ ແຕ່ກໍເຖົ້າຫລາຍແລ້ວ. ເຂົາອິດສາເອົານົມມາຕ້ອນລຸງສອງປ໋ອງ, ເອົາມາຫລາຍກວ່ານີ້ກໍບໍ່ໄດ້ ເພາະເສັ້ນທາງບໍ່ສະດວກ.

" ຊິມີໃຜຈື່ໂຕໄດ້ບໍ່ລະ ?" ຂ້າພະເຈົ້າຖາມ.

" ຄົງບໍ່ມີໃຜຈື່ເຮົາດອກ ແຕ່ກໍຊິໄປສືບທາວຫາເອົາ, ພໍຈື່ເຮືອນລຸງໄດ້ຢູ່ ".

ພວກເຮົາຍ່າງໄປ ທັງແນມເບິ່ງ ສວນພືນລະປູກຂອງປະຊາຊົນດ້ວຍຄວາມຊື່ນຊົມ, ໄປໄດ້ອີກໄລຍະຫນຶ່ງ ກໍພໍ້ຍິງແມ່ມານຄົນຫນຶ່ງ ກືກະຕ່າໃສ່ຜັກອອກມາຈາກສວນດ້ານຊ້າຍມື.

ແພງແມ່

" ສະບາຍດີອາ ເຈົ້າຢູ່ບ້ານນີ້ບໍ ?" ບຸນຄໍາຖາມ.

" ເອີຢູ່ບ້ານນີ້ລະ ..." ນາງຕອບດ້ວຍທ່າທາງເຕັມໄປດ້ວຍຄວາມສົງໄສ ເພາະພວກເຮົາເປັນຄົນແປກໜ້າ.

" ພວກເຮົາມາແຕ່ໃນເມືອງ. ຂ້ອຍເປັນລູກຫລານຂອງບ້ານນີ້ລະ, ຈາກໄປຫລາຍປີ ຈຶ່ງໄດ້ກັບມາຢາມ ". ບຸນຄໍາເວົ້າຕໍ່ເພື່ອໃຫ້ຍິງແມ່ມານຫມົດຄວາມລະແວງສົງໄສ.

" ເອີຊັ້ນບໍ, ຈຶ່ງບໍ່ໄດ້ນ່າອັນຜູ້ເກີດໃຫມ່ໃຫຍ່ລຸນນີ້. ພວກເຈົ້າແມ່ນລູກຜູ້ໃດຫລານຜູ້ໃດ ?".

ແຕ່ລະຄົນພວກເຮົາບອກຊື່ຕົນເອງ, ສ່ວນບຸນຄໍາຍັງແກມບອກຊື່ພໍ່ແມ່ ແລະ ຊື່ລຸງ ທີ່ຍັງຢູ່ໃນບ້ານນີ້ຕື່ມອີກ. ຝ່າຍຍິງແມ່ມານບອກວ່າຮູ້ຈັກລຸງຂອງບຸນຄໍາ ຊຶ່ງເຮືອນຢູ່ຄຸ້ມໃຕ້, ສ່ວນລາວເອງຢູ່ຄຸ້ມເຫນືອ ແລະ ເອີ້ນກັນວ່າແມ່ປຸ່ນ. ບຸນຄໍາເຮັດທ່າຊຶງລຶງເພາະບໍ່ເຄີຍໄດ້ຍິນຊື່ນີ້ມາກ່ອນ ແຕ່ກໍເວົ້າອອກມາແກ້ເກີ້ວ່າ:

" ເອີ ແມ່ປຸ່ນນີ້, ເປັນຈັ່ງໃດ ເຂົ້ານໍ້າປູປາບ້ານເຮົາ?"

ຍິງແມ່ມານບອກວ່າ ໄທບ້ານກໍມີພໍຢູ່ພໍກິນ, ປູກຝັງຫລາຍແຕ່ສົ່ງອອກຂາຍ ໄດ້ພອງຫນ້ອຍດຽວ ເພາະຫົນທາງບໍ່ສະດວກ. ເວົ້າແລ້ວລາວກໍກ້າວອອກຈາກຫົນທາງ ເພື່ອລົງໄປສູ່ທົ່ງນາດ້ານຂວາມື ໂດຍບອກພວກເຮົາວ່າ ຈະແວ່ເອົາບອນຢູ່ກອງນາໄປເກືອຫມູ. ບຸນຄໍາເອີ້ນໃສ່ ທັງຈົກນໍ້າມົນປ້ອງຫນຶ່ງອອກມາຈາກກົງຍ່າມ.

" ບໍດດອວອາ, ເອົາອັນນີ້ກ່ອນ, ເອົາມົນປ້ອງນີ້ໄວ້ກິນ".

" ເອີ ບຸນຄໍານໍ້າຊູເນີລູກຫລານ." ຍິງແມ່ມານກ່າວແລ້ວ ກໍແຍກທາງໄປຕ່າງຫາກ, ສ່ວນພວກເຮົາຍ່າງຕາມເສັ້ນທາງເດີມຕໍ່ໄປ.

ຂ້າພະເຈົ້າກ່າວຊົມເຊີຍນໍ້າໃຈອັນສູງສົ່ງຂອງບຸນຄໍາ ທີ່

ເອົານ້ຳມົນມາສອງປ໋ອງ ເພື່ອຕ້ອນຈຸງ ແຕ່ກໍຕ້ອງເສຍສະຫລະໃຫ້ຄົນອື່ນໄປໜຶ່ງປ໋ອງ. ບຸນຄຳເວົ້າດ້ວຍຄວາມພາກພູມໃຈວ່າ: " ໃນຄອບຄົວເຮົາເຄີຍສອນກັນແນວນີ້ ໂດຍສະເພາະແມ່ເຮົາເຄີຍສັ່ງສອນວ່າ ກ້າເຮົາມີຂອງກິນຕິດມືແລ້ວ ໄປພໍ້ແມ່ມານຕ້ອງປັນໃຫ້ໂລດ, ມີໜ້ອຍຫລືມີຫລາຍກໍຕ້ອງປັນໃຫ້. ມັນເປັນປະເພນີ ທີ່ຄົນສ່ວນຫລາຍໃນບ້ານນີ້ເຄີຍປະຕິບັດກັນມາ.

ພໍ່ເຮົາເຄີຍເລົ່າສູ່ຟັງ ໂດຍອີງຕາມປາກຄຳ ຂອງແມ່ວ່າ ຕອນທີ່ແມ່ກືພາເຮົານັ້ນ, ມື້ໜຶ່ງແມ່ໄປສວນຢູ່ນອກບ້ານ, ຂະນະຍ່າງໄປຕາມທາງ ເລີຍໄປພໍ້ໄທບ້ານ ທ້າ-ຫົກຄົນ ກັບມາແຕ່ໄຫ່ເນື້ອ ໂດຍຫາມຟານມາໂຕໜຶ່ງ. ເມື່ອປາດຊີ້ນ ແບ່ງເປັນພູດພວກໄທ່ເນື້ອໄດ້ແບ່ງໃຫ້ແມ່ເຮົາພູດໜຶ່ງ ເທົ່າກັບພູດຂອງຜູ້ອື່ນ. ອັນນີ້ເປັນສິດຂອງແມ່ມານ ຕາມປະເພນີ ທີ່ເຄີຍປະຕິບັດກັນມາຢູ່ບ້ານນີ້. ຜູ້ໄດ້ລື່ນໜູ່ກໍມີແຕ່ນາຍພານຜູ້ເປັນເຈົ້າຂອງປືນ ຄືໄດ້ສອງພູດ ແກມຍັງໄດ້ຫົວ, ຂາທັງສີ່ ແລະ ໜັງຟານອີກ.
ແລງມື້ນັ້ນຄອບຄົວເຮົາໄດ້ກິນລາບຟານ, ພໍຕອນເດິກຄ້ອນຊິແຈ້ງແມ່ເຮົາກໍອອກລູກ ເປັນຜູ້ຊາຍ ຜູ້ຊຶ່ງພວມຍ່າງກັບໄປຢາມບ້ານເດີມຢູ່ດອວນີ້ ".

ພວກເຮົາຕ່າງກໍພາກັນຕື່ນເຕັ້ນ, ເພື່ອນນັກຂ່າວອີກຄົນໜຶ່ງເວົ້າຢອກວ່າ : " ຟານໂຕນັ້ນເກີດມາເປັນຄົນຊື່ບຸນຄຳແລ້ວຕີ້ຊັ້ນ !"

" ໄທບ້ານເຂົາເຈົ້າກໍເຊື່ອຈັ່ງຊັ້ນລະ. ກ້າຟານໂຕນັ້ນໄປເກີດເປັນຟານອີກ ມັນຄົງກືກຍິງຕາຍຊ້ຳແລ້ວຊ້ຳອີກ, ຕາມໄດ້ຍິນຊາວບ້ານເລົ່າມາວ່າ ປ່າເຂດນີ້ບໍ່ມີຟານເຫລືອຈັກໂຕແລ້ວດອວນີ້ ". ບຸນຄຳວ່າ.

" ໜ້າເສຍດາຍບໍ ". ຂ້າພະເຈົ້າຈົ່ມ.

ບຸນຄ້ຳເລົ່າຕໍ່ໄປວ່າ : " ແມ່ນາງມີຄວາມຕ້ອງການກິນອາຫານຫລາຍ ເພື່ອໄປບຳລຸງລູກຢູ່ໃນທ້ອງ, ເມື່ອແມ່ນາງໄປພົບພໍ້ຄົນທີ່ມີຂອງກິນດີໆ ປະກົດວ່າ ຄວາມຢາກຄວາມຫິວມັນຮຸນແຮງ ປານວ່າຊິກິນຊ້າງໝົດທັງໂຕ. ອັນນີ້ແມ່ນເຮົາໄດ້ຍິນຈາກປາກຂອງແມ່ນາງເດີ - ຜູ້ໃດບໍ່ເຊີນກິນ ຫລືບໍ່ແບ່ງປັນຂອງກິນໃຫ້ ແມ່ນາງຈະຈື່ບໍ່ລືມ ... ຈື່ໃນແງ່ເປັນຜູ້ບໍ່ເຫັນໃຈແມ່ນາງຊັ້ນໃດ.

ແມ່ເຮົາບໍ່ມີໂອກາດເຫັນລູກຊາຍ ຕອນໃຫຍ່ກ້າໜ້າບານເລີຍ. ພໍ່ເຮົາເລົ່າວ່າ ແມ່ອີ່ຕົນຟານໂຕນັ້ນທີ່ກົກຍິງຕາຍ, ແມ່ບໍ່ຍອມກິນຊີ້ນຟານເລີຍ ແຕ່ກໍຮັບເອົາພູດຊີ້ນ ເພື່ອໃຫ້ສະມາຊິກໃນຄອບຄົວໄດ້ກິນ. ເມື່ອເຮົາເກີດມາ ແມ່ຈຶ່ງຮັກຫລາຍເປັນພິເສດ, ແມ່ຕັ້ງຊື່ໃຫ້ວ່າບຸນຄ້ຳ ແຕ່ກໍມັກເອີ້ນວ່າ ຄຳແພງຂອງແມ່ຫລື ແພງແມ່ ... "

ເວລານີ້ ພວກເຮົາຍ່າງມາເກືອບຮອດປະຕູຮົ້ວ ເຂົ້າສູ່ບ້ານ. ຂ້າພະເຈົ້າຮູ້ສຶກພໍໃຈ ທີ່ໄດ້ເດີນທາງມາບ້ານນີ້ ເຖິງແມ່ນວ່າ ຫົນທາງບໍ່ສະດວກສະບາຍກໍຕາມ. ແຕ່ຄວາມຄິດບາງຢ່າງດຶງໃຫ້ຂ້າພະເຈົ້າຫລຽວຄືນຫລັງໄປເບິ່ງຍິງແມ່ນາງຄົນນັ້ນ. ນາງລັບຫາຍໄປແລ້ວ, ແຕ່ໃນມະໂນພາບ ນາງຍັງຢູ່ກັບຂ້າພະເຈົ້າ. ເປັນຄັ້ງທຳອິດ ທີ່ຂ້າພະເຈົ້າຮູ້ສຶກວ່າ ກົກກົດດັນຈາກສະຕິສຳປະຊັນຍະ ນັ້ນຄື ການມີພັນທະໃນການປະກອບສ່ວນເພື່ອຊີວິດນ້ອຍໆ ທີ່ຈະເກີດມາໃນໂລກ.

---

ຂຽນ ເດືອນທັນວາ ປີ 1990

# ຈຳປາໜ້າບ້ານ

ຄັ້ງໜຶ່ງ ຢູ່ແຄມກຸະໜົບ ຕໍ່ໜ້າບ້ານຂ້ອຍ ມີຕົ້ນຂາມຫວານ, ມັນແຜ່ກິ່ງກ້ານເປັນຮົ່ມເຢັນສະບາຍ. ໃຜກາຍໄປກາຍມາກໍແວ່ເຊົາ ຍາມແດດຮ້ອນອົບເອົ້າ. ຂ້ອຍເອງເປັນຄົນປູກເມື່ອຫລາຍປີມາແລ້ວ, ທຳອິດມັນຢູ່ພາຍໃນຮົ້ວ ແຕ່ຕໍ່ມາ ທາງຝ່າຍກໍ່ສ້າງຂອງກຳແພງນະຄອນ ໄດ້ມາດັດແປງ ແລະຂະຫຍາຍທາງອອກ, ຂ້ອຍໄດ້ຫຍັບຮົ້ວບ້ານເຂົ້າ ຕົ້ນຂາມເລີຍຕົກໄປຢູ່ນອກຮົ້ວ ບ່ອນທາງຄົນຍ່າງ..

ຂ້ອຍຊື່ນຊົມນຳຕົ້ນຂາມຕົ້ນນີ້ ເພາະໝ່ວຍມັນຫວານແຊບດີ, ທັງໃບກໍເປັນພຸ່ມຂຽວງາມ, ເປັນຕົ້ນໄມ້ປະດັບ ເພີ່ມຄວາມມີຊີວິດຊີວາໃຫ້ແກ່ບໍລິເວນໜ້າບ້ານ. ຢ່າງເຂົ້າໜ້າຝົນມັນເປັນດອກສີແສດບານເຮືອງເຮື່ອ ແລະ ຫລົ່ນລົງເດຍລະດາດຕາມພື້ນດິນ, ຕໍ່ມາບໍ່ດົນ ກໍເປັນໝ່ວຍນ້ອຍໆ ຊ້ອງຊາບລາບຢູ່ຕາມຍອດສູງ, ຕາມກິ່ງຕາມງ່າ, ໃຜກາຍໄປກາຍມາ ກໍແຫງນເບິ່ງດ້ວຍ

ຄວາມອອນຊອນ.

ນອກຈາກຄົນກາຍທາງ ທີ່ແວ່ຊື້ນຂີ່ມຕົ້ນຂາມນີ້ແລ້ວ ຍັງມີເດັກນ້ອຍນັກຮຽນຈຳນວນໜຶ່ງ ພາກັນມາແວ່ເຊົາຄອງກ້າພໍ່ແມ່ ຫລືຜູ້ປົກຄອງມາຮັບເອົາ ຫລັງຈາກເລີກໂຮງຮຽນ ຊຶ່ງຢູ່ບໍລິເວນໃກ້ງນີ້. ເຍົາວະຊົນເຫລົ່ານີ້ຢູ່ໃນເຄື່ອງແບບນັກຮຽນ ໜ້າຕາສົດໃສ ພວມເປັນຕາຮັກ ເປັນຕາແພງ, ບາງພ່ອງນັ່ງ ບາງພ່ອງຢືນ ຫລືແລ່ນໄລ່ຢອກກັນ. ມັນເປັນພາບທີ່ປະທັບໃຈຍາມທີ່ໄດ້ເຫັນເຍົາວະຊົນພວມກຳລັງສົດຊື່ນ ຍິ້ມແຍ້ມແຈ່ມໃສເວົ້າຢອກເວົ້າຫົວກັນໄປມາ. ບາງມື້ຂ້ອຍເສຍເວລາຍ້ອນຕັ້ງຫລາຍນາທີ ຫລືບາງເທື່ອ ກໍເປັນເຄິ່ງຊົ່ວໂມງໃນການເຝົ້າສັງເກດເບິ່ງເຂົາ ເບິ່ງຜົມດຳ ແກ້ມແດງ ແລະ ບາງຄົນກໍແກ້ມໂຕ້ນ, ເບິ່ງການເຄື່ອນໄຫວຂອງເຂົາທີ່ເປັນໄປຕາມທຳມະຊາດ ປາສະຈາກເລ່ຫລ່ຽມມານຍາ. ມີຜູ້ເວົ້າວ່າ ບໍ່ມີຮູບໃດຈະໜ້າເບິ່ງ ໜ້າກະໜອມໄປກວ່າຮູບຖ່າຍເດັກນ້ອຍທີ່ພວມຫລິ້ນຢູ່ຕາມລຳພັງ. ຂ້ອຍເຫັນພ້ອມກັບຄວາມຄິດຄວາມເຫັນອັນນັ້ນ ແລະກ້າວ່າມີກ້ອງຖ່າຍຮູບ ຂ້ອຍກໍຄົງຈະເສຍເວລາຕື່ມອີກໃນການຈອບລັກຖ່າຍຮູບໂດຍບໍ່ໃຫ້ເຂົາຮູ້ສຶກຕົວ.

ສຽງເພງ, ສຽງຫົວ, ສຽງຮ້ອງຢອກກັນຂອງພວກເດັກນ້ອຍ ຕະຫລອດທັງສຽງດ່າວ່າ ເວົ້າສອດສີກັນ ຍ້ອນຍາດໝາກຂາມ ເຮັດໃຫ້ເຮົາຄິດເກິງອະດີດຄວາມຫລັງ ຄັ້ງທີ່ເຮົາຍັງເປັນເດັກນ້ອຍໄລ່ຫລິ້ນຢອກກັນ ຢູ່ຕາມເດີ່ນບ້ານ, ຂ້ອຍຮູ້ສຶກເປັນສຸກຍາມໃດທີ່ຄິດຫາອະດີດຂອງຊີວິດ ໃນໄວເດັກ ອັນເຕັມໄປດ້ວຍຄວາມອົບອຸ່ນ, ຄວາມສົດຊື່ນ ແລະ ຄິດຢາກໃຫ້ວັນເວລາແຫ່ງຄວາມຫລັງເຫລົ່ານັ້ນ ກັບຄືນມາອີກ. ຂ້ອຍບໍ່ຮູ້ສຶກເສຍດາຍ ທີ່ເດັກນ້ອຍພາກັນແຫມັ່ນເອົາໝາກຂາມມາກິນ, ແຕ່ທີ່ເປັນຫ່ວງກໍ

ຄື ບາງຄົນປີນຂຶ້ນເທິງກົກ ແລະ ບາງຄົນກໍເອົາໄມ້ຄ້ອນຄວ່າງໃສ່, ຫລາຍໆເທື່ອຂ້ອຍຕ້ອງໄດ້ຮ້ອງບອກວ່າ : " ລະວັງຕົກເນີ ! ໄມ້ຄ້ອນຊິຕົກຖືກຫົວກັນໃດ ! ".

ຫວິດຈາກສຽງຮ້ອງບອກ ຄວາມງຽບກໍປະກົດຂຶ້ນຊົ່ວຂະນະໜຶ່ງ. ຜູ້ທີ່ຂຶ້ນຢູ່ເທິງກໍຄ່ອຍໆລົງມາ, ຜູ່ທີ່ຈັບໄມ້ຄ້ອນກໍວາງກົ້ມ, ແຕ່ພໍລັບຕາຂ້ອຍບໍ່ດົນ ສຽງແຊວໆກໍດັງຂຶ້ນອີກ, ຂ້ອຍເຄີຍບອກເຂົາວ່າ : " ກົກຂາມນີ້ຢູ່ແຄມກະໜົນມັນເປັນສົມບັດຂອງທຸກຄົນ, ສະນັ້ນຕ້ອງແບ່ງປັນກັນກິນ ແລະ ຢ່າທຳລາຍມັນກົ້ມ, ມັນເປັນສິ່ງປະດັບບ້ານເມືອງ ໃຫ້ມີຊີວິດຊີວາ. ມີກົກໄມ້ຢູ່ບ່ອນໃດ ກໍມີຄວາມສົດຊື່ນຢູ່ບ່ອນນັ້ນ ".

ຊີວິດຂ້ອຍຜູກພັນກັບໝາກຂາມຕົ້ນນີ້ ມາເປັນເວລາດົນນານ, ຂ້ອຍຮູ້ສຶກສົດຊື່ນຍາມດອກມັນບານ, ຮູ້ສຶກຫ່ຽວແຫ້ງແລ້ງໃນໃຈຍາມໃບມັນຫລົ່ນ. ຂ້ອຍຮັກຕົ້ນໄມ້ໃບຫຍ້າ ແລະ ປາຖະໜາໃຫ້ກະໜົນທຸກເສັ້ນໃນນະຄອນວຽງຈັນ ມີຕົ້ນໄມ້ຢາຍໄປຕະຫລອດສອງຟາກທາງ, ຫລຽວໄປທາງໃດກໍໃຫ້ເຫັນແຕ່ຄວາມຮົ່ມເຢັນ, ເປັນນະຄອນແຫ່ງຄວາມສົດຊື່ນ ແລະ ສົດໃສທຸກຮ່ອມທຸກແຈ.

ແຕ່ແລ້ວມາມື້ໜຶ່ງ ຂ້ອຍກັບຄືນບ້ານຫລັງຈາກເລີກການກໍພົບກັບຄວາມເສົ້າໂສກສະຫລົດໃຈ. ກົກຂາມຖືກຕັດເຫລືອແຕ່ຕໍເປັນກຸດດູດສູງພຽງຫົວເຂົ່າ, ໃບ ແລະງ່າຂອງມັນກໍກອງໂອະໂຍະຕາມພື້ນດິນ, ບໍລິເວນໜ້າບ້ານແຈ້ງຈ່າງປ່າງ, ລົມລ່ວງດີເປັນທີ່ສະຫວາດຕາ ແຕ່ໃນຫົວໃຈຂອງຂ້ອຍ ມັນເຢັນວາບ ດັ່ງມີສ່ວນໃດສ່ວນໜຶ່ງຂອງຮ່າງກາຍໄດ້ຂາດໄປ. ຂ້ອຍຢືນຊຶ່ງຢູ່ໜ້າບ້ານ, ເວົ້າຫຍັງບໍ່ອອກ, ຫລຽວໄປທີ່ປາກຮ່ອມບ່ອນກະໜົນນີ້ຕົກໃສ່ກະໜົນໃຫຍ່ ເຫັນຕົ້ນໄມ້ຍັງເຫລືອຢູ່ສອງຕົ້ນ ແຕ່ປາຍກຸດ

ຈຳປາໜ້າບ້ານ

ນອກນັ້ນກໍເຫັນລົມລ່າວໄປຕະຫລອດທາງ . ຂ້ອຍເຂົ້າໄປໃນບ້ານ ແລ້ວສອບຖາມຄົນໃນເຮືອນ .

" ພວກໃດມາຕັດຕົ້ນໄມ້ຢູ່ແຄມທາງນີ້ຣ ! ".

ເມຍຂ້ອຍຕອບວ່າ :

" ພວກຮັບເໝົາມ່າ ! ເຂົາວ່າມັນກີດສາຍໄຟຟ້າ "

" ອັນນີ້ມັນເປັນການທຳລາຍ, ມຸ່ນອັບຍັບຈັ່ງຊີ້ ".

" ຂ້ອຍເວົ້າແລ້ວເວົ້າອີກວ່າ : ບໍ່ຢາກໃຫ້ຕັດ, ຂໍໃຫ້ຮານແຕ່ງ່າ ທີ່ມັນເດ່ໄປຫາສາຍໄຟ ຫລືວ່າຕັດແຕ່ງ່າສູງ, ຈຶ່ງງ່າຕ່ຳໄວ້ຈັກສອງສາມງ່າ ເພື່ອບໍ່ໃຫ້ມັນຕາຍ, ແຕ່ເຂົາບໍ່ຍອມຟັງ, ບໍ່ແມ່ນພວກບໍລິສັດໄຟຟ້າມ່າ, ມັນແມ່ນພວກຮັບເໝົາຈຶ່ງເວົ້າຍາກ ".

" ໝົດແລ້ວ ! ... ບໍ່ມີຮົ່ມໃຫ້ຄົນຊຸ້ນອີກແລ້ວ ! ປູກຕົ້ນໄມ້ຕົ້ນໜຶ່ງ ກວ່າຊິໃຫ່ຍປານນີ້ ກໍຕ້ອງຫລາຍປີ " ຂ້ອຍຈົ່ມຢ່າງນ້ອຍໃຈ .

" ຜູ້ໃດກໍຮ້ອງຂໍ ບໍ່ຢາກໃຫ້ຕັດຈຳດີນ . ລຸງໜຶ່ງຢູ່ປາກຮ່ອມແລ່ນໄປບອກທາງກຳແພງນະຄອນ ໃຫ້ມາເບິ່ງແຍງຊ່ອຍ, ເມື່ອເຈົ້າໜ້າທີ່ມາຮອດ ການຕັດກໍຢຸດຊະງັກໄປຊົ່ວຄາວ . ເຈົ້າໜ້າທີ່ກຳແພງ ແນະນຳໃຫ້ຕັດແບບຈິງງ່າຕ່ຳໄວ້ ເພາະຕົ້ນໄມ້ແຄມຖະໜົນເສັ້ນນີ້ ໄກສາຍໄຟຫລາຍສົມຄວນ, ດັ່ງນັ້ນຕົ້ນຟາງສອງຕົ້ນຢູ່ປາກຮ່ອມ ຈຶ່ງຍັງເຫລືອຢູ່, ພອງແຕ່ປາຍກຸດກໍບໍ່ເປັນຫຍັງ ຄືງບໍ່ຕາຍ ".

ຫລັງຈາກມື້ນັ້ນມາ ຕໍ່ໜ້າບ້ານຂ້ອຍບໍ່ມີເດັກນ້ອຍສົ່ງສອງບໍ່ມີສຽງຫົວຢອກລໍ້ກັນອີກ, ມັນມິດງຽບ ເປົ່າປ່ຽວ, ມີແຕ່ແສງແດດອັນຮ້ອນຈັດເຈືອຈານໄປທົ່ວ ບໍລິເວນນັ້ນ, ຂ້ອຍຮູ້ສຶກແຫ້ງແລ້ງໃນຫົວໃຈ ແລະ ເສຍດາຍຢູ່ບໍ່ເລີກບໍ່ແລ້ວ .

ຂ້ອຍຄຶດຢູ່ຫລາຍມື້, ຄຶດຫາແນວຕົ້ນໄມ້ ທີ່ຈະເອົາມາປູກແທນໃຫມ່, ວ່າຈະເອົາຕົ້ນຫມາກນ້ຳນົມມາປູກເພາະວ່າ ເຫັນມັນເປັນຮົ່ມດີ, ແຕ່ຄືງບໍ່ພົ້ນຖືກຕັດຢູ່ເລື້ອຍໆ ເພາະວ່າມັນສູງຊັນອາດເດ່ໄປຕິດກັບສາຍໄຟຟ້າ, ຄຶດຈະເອົາຕົ້ນມ່ວງ ຕົ້ນລຳໄຍມາປູກ ແຕ່ພິຈາລະນາເບິ່ງຄັກໆແລ້ວ ກໍຈະຖືກຕັດຄືກັບຕົ້ນຂາມ. ອີກປະການຫນຶ່ງ ຕົ້ນໄມ້ທີ່ກິນຫມາກນັ້ນ ມັນດຶງດູດໃຈເດັກນ້ອຍໃຫ້ປີນຂຶ້ນ ແລະ ອາດຈະຕົກລົງມາ ເປັນອັນຕະລາຍເຖິງແກ່ຊີວິດກໍເປັນໄດ້, ຂ້ອຍບໍ່ປາຖະຫນາເຫັນເດັກນ້ອຍ ຫລືໃຜກໍຕາມຕົກຕົ້ນໄມ້ ເພາະມັນເປັນພາບທີ່ສະເທືອນໃຈ, ດີບໍ່ດີຕົນເອງອາດຈະເປັນຫົວໃຈວາຍຕາຍກ່ອນຜູ້ປະສົບອຸບັດເຫດນັ້ນຊ້ຳ. ຂ້ອຍຄຶດຈະເອົາຕົ້ນໄມ້ທີ່ມີດອກງາມໆນັ້ນມາປູກ ແຕ່ບໍ່ມີເວລາທີ່ຈະໄປຊອກຫາເອົາມາ, ຈຶ່ງໄດ້ແຕ່ແນມໄປທາງຫລັງບ້ານຕົນເອງເຫັນຕົ້ນຈຳປາພວມບານ ດອກສີຂາວສະອາດງາມຕາສົ່ງກິ່ນຫອມຫວນບໍ່ວ່າຍາມເຊົ້າຍາມສວາຍ ແລະ ຍາມແລງ, ຕົ້ນຫນຶ່ງຢູ່ແຈຮົ້ວອີກຕົ້ນຫນຶ່ງຢູ່ຂ້າງເຮືອນຄົວ.

ຂ້ອຍລົງມືປູກຕົ້ນດອກຈຳປາສາມຕົ້ນ ໃສ່ແຄມທາງ ຕໍ່ຫນ້າບ້ານ ໂດຍເຮັດໄລຍະຫ່າງກັນພໍສົມຄວນ, ຄວາມຈິງຂ້ອຍຢາກປູກຫລາຍກວ່ານັ້ນ ແຕ່ຢ້ານມັນກີ້ກັນໂພດ. ຕົ້ນດອກຈຳປາປູກງ່າຍ, ພຽງແຕ່ຕັດເອົາງ່າຍາວປະມານຄ່າແຂນ ຫລືຄ່າວາມາຝັງໄວ້ກໍໄດ້ແລ້ວ. ນອກຈາກປູກໃສ່ຕໍ່ຫນ້າບ້ານຕົນເອງແລ້ວຂ້ອຍຍັງເອົາງ່າດອກຈຳປາໄປຢາຍໃຫ້ຫລາຍໆຄົນ ທີ່ຢູ່ທາງຮ່ອມດຽວກັນປູກອີກ, ແຕ່ລະຄົນກໍປູກດ້ວຍຄວາມເອົາໃຈໃສ່ ແລະວາງໄລຍະໃຫ້ສະຫມ່ຳສະເຫມີກັນ. ອັນນີ້ ມັນເຮັດໃຫ້ຂ້ອຍມີຄວາມຊົມຊື່ນດີໃຈ ແລະ ເຊື່ອວ່າທາງການບ້ານເມືອງກໍຈະຮູ້ສຶກເຊັ່ນດຽວກັນ.

## ຈຳປາໜ້າບ້ານ

ຕົ້ນດອກຈຳປາທີ່ປູກໃໝ່ນີ້ ຂ້ອຍໄດ້ລ້ອມຮົ້ວໄວ້ ເພື່ອບໍ່ໃຫ້ຄົນ ຫລືສັດໄປຕ້ອງໄປຊຸນອັນຈະເຮັດໃຫ້ມັນຫັກໂຄ່ນຕາຍໄປ. ຂ້ອຍທົດນ້ຳ ບຳລຸງເປັນຢ່າງດີ. ເຊົ້າ, ສວາຍ, ບ່າຍ, ແລງຂ້ອຍແຍງແຕ່ຕົ້ນດອກຈຳປາເຫລົ່ານີ້. ເວລາຜ່ານ ໄປຫລາຍມື້ຫລາຍເດືອນ ມັນກໍປົ່ງໃບອ່ອນ, ຕໍ່ມາກໍເປັນໃບຂຽວສົດຊື່ນຊູງ່າສູງຂຶ້ນເທື່ອລະເລັກລະນ້ອຍ.

ຫລາຍປີຕໍ່ມາ ຢູ່ຕໍ່ໜ້າບ້ານຂອງຂ້ອຍ ແລະ ຕະຫລອດສາຍທາງຮ່ອມນີ້ກໍມີຮົ່ມເຢັນສະບາຍ, ເປັນຮົ່ມຕົ້ນດອກຈຳປາທີ່ມີໃບດົກໜາ, ຕົ້ນດອກຈຳປາບໍ່ຕ່ຳ, ບໍ່ສູງພໍປະມານ, ມັນເປັນຕົ້ນດອກໄມ້ທີ່ບານຢູ່ທຸກລະດູການ, ບານຕ້ອນຮັບສາຍຝົນ, ສາຍລົມ ແລະ ແສງແດດ, ມັນເປັນດອກໄມ້ ມິ່ງຂວັນຂອງດິນແດນລາວ.

ຕໍ່ໜ້າບ້ານຂ້ອຍກັບຄືນມາມີຊີວິດຊີວາອີກ, ມີຄົນມາແວ່ເຊົາຊຸ້ມຮົ່ມ, ມີເດັກນ້ອຍມານັ່ງຫລິ້ນຢອກກັນ ສົ່ງສຽງນັນນອງ. ເຂົາພາກັນເກັບດອກຈຳປາມາກອງໄວ້, ບາງຄົນກໍຮ້ອຍ ເປັນພວງມະໄລແລ້ວກໍເອົາມາຄ້ອງໃສ່ຄໍ ໃສ່ແຂນ, ມັນເປັນພາບທີ່ປະທັບໃຈແກ່ຜູ້ທີ່ໄດ້ພົບເຫັນທຸກຄົນ.

---

ພິມເທື່ອທຳອິດ, ປີ 1980 ໃນໂຮມເລື່ອງສັ້ນ " ຍິ້ມນັ້ນ "

# ຫມູ່ພໍ່

ແລງວັນເສົາ. ຂ້າພະເຈົ້າກັບລູກສາວ ອາຍຸ 7 ຂວບ ຍ່າງໄປຕາມແຄມນ້ຳຂອງ ເພື່ອພັກຜ່ອນຢ່ອນອາລົມ, ແຕ່ອາລົມກໍບໍ່ຄ່ອຍປອດໂປ່ງ ເພາະບາດຕີນ ໄປກະທົບກັບສິ່ງເສດເຫລືອຫລາຍຢ່າງ. ລູກສາວຍ່າງຮຽງຂ້າງ ບາງຄັ້ງກໍຍ່າງອອກກ່ອນ, ບາງຄັ້ງກໍຕົກຢູ່ຂ້າງຫລັງ ແລະ ມັກຢຸດສະເຫມີ ເພາະມົວໃຊ້ຕີນເຕະສິ່ງກີດຂວາງທາງຍ່າງ ເຊັ່ນກະປອງ ຫລືວັດຖຸທີ່ມີສີສັນ.

ມັນເປັນເວລາຫນຶ່ງອາທິດເຕັມ ພາຍຫລັງບຸນຊ່ວງເຮືອປະຈຳປີ 1989 ແຕ່ແຄມນ້ຳຂອງຕໍ່ຫນ້ານະຄອນວຽງຈັນ ກໍເຕັມໄປດ້ວຍຂີ້ເຫຍື້ອເຮ່ຍຊະຊາຍ : ກົງຢາງ, ເຈ້ຍຫໍ່ເຄື່ອງ, ເຈ້ຍຫນັງສືພິມ, ໄມ້ປີ້ງ, ກະປອງເບຍ, ຊອງຢາເປົ່າ, ປຸ່ມເປົ້າແຕກ ... ມັນເດຍລະດາດ ກະຈັດກະຈາຍ ຄືກັນກັບສະພາບບ້ານເມືອງພາຍຫລັງລົມພາຍຸພັດຜ່ານ. ທັງຫມົດເຫລົ່ານີ້ ເປັນທີ່ເຄືອງຫູເຄືອງຕາ ແກ່ຜູ້ຄົນທັງຫລາຍ.



ແຕ້ມໂດຍ : ປຸ້ຍ ( 11 ປີ )

ຂ້າພະເຈົ້າລະສາຍຕາຈາກສິ່ງເສດເຫລືອ ໂດຍເບິ່ງໄປໄກໆ ຍັງຂອບຟ້າສີຂຽວ ທີ່ມີເມກລອຍສີບາງໆ ເພື່ອຫາຄວາມປອດໂປ່ງ ຈະເລີນຕາຈະເລີນໃຈ ທີ່ປະກົດມີຕາມທຳມະຊາດ. ນ້ຳຂອງຍາມແລງໄຫລອ້ອຍອິ່ນຕ້ອງກັບແສງຕາເວັນເປັນຍິບຍັບ. ຢູ່ທາງໆ ເກືອບສຸດສາຍຕາພຸ້ນ ມີເຮືອນ້ອຍລອຍລ່ອງ ເບິ່ງຄືວ່າເຮືອນ້ອຍໄປຈອດຢັ້ງຢູ່ຕິດກັບທິວທັດຂອງສັນພູ ທີ່ທັບຊ້ອນກັນເປັນຫລັ້ນເປັນຫລັ່ນ. ດວງອາທິດພວມຈະລັບລົງທີ່ຟາກນ້ຳ. ມວນນົກເປັນໝູ່ສາມໝູ່ສີ່ ພວມບິນຄືນສູ່ຮັງ. ບາງຄັ້ງເບິ່ງຄືວ່ານົກກັບເຮືອຈະຈອບກັນທີ່ຂອບຟ້າ. ມັນເປັນພາບ ທີ່ໃຫ້ຄວາມຮູ້ສຶກເຢືອກເຢັນ ໃນອາລົມ ແລະ ໃຫ້ເກີດຄວາມສຳນຶກ ຢາກບິນໄດ້ເພື່ອຈະໄປສະແຫວງຫາຄວາມສະຫງົບສຸກ ໃນທີ່ໄກໆພຸ້ນ.

ແຕ່ສິ່ງເສດເຫລືອ ຕາມພື້ນດິນກໍກະຕຸກໃຫ້ຂ້າພະເຈົ້າຕື່ນຈາກອາລົມຝັນ ມາປະເຊີນກັບຄວາມເປັນຈິງ. ຂ້າພະເຈົ້າ ບໍ່ຢາກເບິ່ງ ແຕ່ມັນກໍເຫັນເອງ ເພາະມັນຕຳຕາ, ຂ້າພະເຈົ້າຄິດຄືກັນວ່າ ຕົນເອງຄວນຈະມີສ່ວນປະກອບ ໃນການເຮັດອະນາໄມໂດຍເກັບສິ່ງເສດເຫລືອ ໄປໄວ້ໃນບ່ອນທີ່ຖືກ ທີ່ຄວນ, ແຕ່ສະເພາະມື້ນີ້ວັນນີ້ - ຂໍນຳສາກ່ອນ, ຂ້າພະເຈົ້າແຕ່ງຕົວ ເພື່ອມາທ່ຽວຊົມທິວທັດແຄມນ້ຳຂອງ ຈຶ່ງຕ້ອງຝືນໃຈຍ່າງຕໍ່ໄປ, ຝືນໃຈເພາະສະພາບຄວາມເປັນຈິງ ມັນບໍ່ເໝາະ ສຳລັບມາຍ່າງຫລິ້ນຢ່ອນອາລົມ, ຂ້າພະເຈົ້າບໍ່ຄິດວ່າ ຈະມາພໍ້ກັບສິ່ງບໍ່ຈະເລີນຕາດັ່ງກ່າວນີ້.

ຂ້າພະເຈົ້າຍ່າງໄປຄິດໄປ ແລ້ວກໍສະດຸ້ງ ເມື່ອລູກສາວແລ່ນມາກອດແຂນດ້ວຍອາການຢ້ານກົວ. ລູກສາວຫລຽວຄືນຫລັງໄປຍັງບ່ອນທີ່ໄດ້ແລ່ນກັບມາ, ຂ້າພະເຈົ້າຫລຽວໄປຈຶ່ງຮູ້ຈັກ ສາເຫດທີ່ລູກຢ້ານກົວ.

" ບໍ່ຕ້ອງຢ້ານ , ລາວບໍ່ກວນໃຜດອກ . " ຂ້າພະເຈົ້າບອກລູກ .

ຄົນທີ່ລູກສາວຂອງຂ້າພະເຈົ້າຢ້ານນັ້ນ ຍ່າງມາຢ່າງບໍ່ມີອາການຫວັ່ນໄຫວ ທັງທີ່ຕົນເອງເປັນເປົ້າສາຍຕາ ຂອງຜູ້ຄົນທີ່ຢູ່ອ້ອມແອ້ມ ຫລື ທີ່ຜ່ານກາຍໄປ . ເຂົານຸ່ງເຄື່ອງມຸມມອມ , ມີເສດເຈ້ຍ ກົງຢາງຫ້ອຍຕິດຕາມຕົນຕົວ , ເບິ່ງແລ້ວຄ້າຍກັບວ່າເຂົາເປັນກອງຂີ້ເຫຍື້ອທີ່ເຄື່ອນໄຫວໄດ້ . ເມື່ອເຂົາມາໃກ້ໆ ຂ້າພະເຈົ້າຈຶ່ງເຫັນວ່າ ທີ່ບ່າເຂົາເບື້ອງໜຶ່ງ ມີຮວດເປັນວົງມົນ , ຮວດນີ້ມີກົງຢາງ ແລະ ເສດເຈ້ຍສອບໃສ່ ດັ່ງດອກັບຮ້ອຍຂາຂອດໃສ່ໄມ້ຕອກ ແລ້ວມັດສອງສົ້ນຕິດກັນ . ອີກຮວດໜຶ່ງເຂົາຈັບໄວ້ທີ່ມືຊ້າຍ , ເມື່ອຍ່າງໄປພໍ້ກົງຢາງ ຫລືເສດເຈ້ຍຂວາງໜ້າຢູ່ເຂົາກໍກົ້ມລົງໃຊ້ມືຂວາຈັບເອົາແລ້ວເອົາສອບໃສ່ຮວດທີ່ຢູ່ມືຊ້າຍ . ການກະທຳຂອງເຂົາເປັນທີ່ສົນໃຈຂອງທຸກຄົນ . ຜູ້ທີ່ໄດ້ພົບເຫັນແນມເບິ່ງເຂົາດ້ວຍຄວາມແປກປະຫລາດໃຈ ,ບາງຄົນກໍເຮັດໜ້າຍິ້ມໆ , ບາງຄົນກໍເວົ້າຊຶມກັບໝູ່ແລ້ວກໍງອາກເບິ່ງເຂົາ . ຫລາຍຄົນອາດຄິດວ່າ ເຂົາເກັບເອົາກົງຢາງໄປລ້າງ ເພື່ອນຳໄປຂາຍຕໍ່ , ເລື່ອງນີ້ບໍ່ອາດເປັນໄປໄດ້ ເພາະເຂົາເກັບເອົາທັງກົງຢາງຂາດ , ທັງເສດເຈ້ຍທີ່ເປື້ອນເປິ ໃຊ້ການຫຍັງບໍ່ໄດ້ແລ້ວ .

ຂ້າພະເຈົ້າຮູ້ຈັກຄົນຜູ້ນີ້ ມາແຕ່ດົນແລ້ວ , ເຂົາເປັນຄົນເສຍສະຕິ ປະເພດເຄິ່ງບ້າເຄິ່ງດີ ແລະ ພິເສດກໍຄືເຂົາເປັນໝູ່ຂອງຂ້າພະເຈົ້າ . ພວກເຮົາເຄີຍເປັນນັກຮຽນຮຸ່ນດຽວກັນແລະອາໄສຢູ່ໃນຫໍພັກ ຊຶ່ງເວລານັ້ນ ເອີ້ນກັນວ່າ ໂຮງຮຽນກິນນອນ . ຫຍັນ ຄືຊື່ຂອງເຂົາ . ສະໄໝເປັນນັກຮຽນເຂົາເປັນຄົນຂະຫຍັນໝັ່ນພຽນ ເອົາໃຈໃສ່ການຮໍ່າຮຽນຢ່າງຕັ້ງໜ້າ ຈົນໝູ່ຄູ່ຫລາຍຄົນເຕືອນແບບເຍາະເຍີ້ຍວ່າ " ລະວັງຫົວແຕກ ". ດັ່ງນີ້ຈຶ່ງ

ບໍ່ເປັນເລື່ອງແປກປະຫລາດ ທີ່ເຂົາໄດ້ຄະແນນດີເປັນປະຈຳຢູ່ໃນຫ້ອງ ແລະ ບໍ່ແປກປະຫລາດອີກ ທີ່ຕໍ່ມາອີກຫລາຍປີ ເຂົາກາຍເປັນຄົນເສຍສະຕິ ຫລື " ທຳແຕກ ". ຂ້າພະເຈົ້າ ຈື່ໄດ້ວ່ານອກຈາກຮຽນຢ່າງມືວເມົາແລ້ວ ເຂົາຍັງເປັນຄົນລະອຽດພິດທຳມະດາ, ໂຕະຂອງເຂົາຕ້ອງເປັນລະບຽບຮຽບຮ້ອຍ, ປື້ມ ຫລືສໍແລະ ປາກກາ ຕ້ອງວາງໃຫ້ຕັ້ງສາກກັບໂຕະ. ຄັ້ງຫນຶ່ງຫມູ່ຄົນຫນຶ່ງຢືມຢາງລຶບເຂົາໄປ, ເມື່ອໃຊ້ແລ້ວ ຫມູ່ຄົນນັ້ນ ກໍໂຍນຢາງລຶບຄືນມາລົງຫນ້າໂຕະ. ເຂົາຍ່າງໄປຫາຫມູ່ຜູ້ນັ້ນ ແລ້ວບອກໃຫ້ມາວາງຢາງລຶບ ໂດຍໃຫ້ຕັ້ງສາກກັບປື້ມ ທີ່ວາງຢູ່ຫນ້າໂຕະຕາມບ່ອນເດີມຂອງມັນ ເລື່ອງນີ້ເປັນທີ່ເວົ້າຕິດສົບຕິດປາກຂອງຫມູ່ຄູ່ຢູ່ເປັນເວລາດົນນານ.

ຫຍັນໄດ້ໄປຮຽນຕໍ່ທີ່ຕ່າງປະເທດ, ສ່ວນຂ້າພະເຈົ້າຮຽນຕໍ່ວິຊາຊີບຢູ່ພາຍໃນປະເທດ, ແລ້ວຂ່າວຄາວຂອງຫຍັນກໍມິດງຽບໄປ. ເວລາຜ່ານໄປຫລາຍປີ ຈົນຂ້າພະເຈົ້າລືມຫລັງ ລືມຫມູ່ຄົນຊື່ຫຍັນ. ວັນຫນຶ່ງຂ້າພະເຈົ້າໄດ້ຮັບການບອກເລົ່າ ຈາກຫມູ່ຄູ່ວ່າ ຫຍັນເປັນຄົນທຳແຕກ ເສຍສະຕິໄປແລ້ວ. ເຂົາກັບຄືນບ້ານເກີດເມືອງນອນໂດຍບໍ່ທັນຮຽນສຸດຊ້ຳ ແຕ່ກໍກ້າວໄປຈົນເຖິງປີສຸດທ້າຍ ໃນມະຫາວິທະຍາໄລ.

ຂ້າພະເຈົ້າພົບພໍ້ເຂົາເປັນບາງຄັ້ງ. ເຂົາມັກນັ່ງຊຶງລຶງຢູ່ວັດແຫ່ງຫນຶ່ງເປັນປະຈຳ ເຝົ້າເບິ່ງໃບໄມ້ຫລົ່ນ, ເມື່ອໃບໄມ້ຫລົ່ນລົງ ເຂົາຈະເກັບສຽບໃສ່ໄມ້ໄວ້ ແລ້ວກໍນັບໄປນັບມາ ທັງຍິ້ມນ້ອຍຍິ້ມໃຫຍ່ ຄືດັ່ງພູມໃຈຫລວງຫລາຍ ທີ່ໄດ້ເກັບໃບໄມ້ອອກຈາກເດີ່ນວັດ.

ບາງຄັ້ງ ເມື່ອສວນກັນກາງທາງ ພວກເຮົາຈະເບິ່ງຫນ້າກັນ, ເຂົາເຮັດຫນ້າຍິ້ມໆ ແຕ່ບໍ່ປາກ, ຂ້າພະເຈົ້າງຶກຫົວໃສ່

ແລ້ວກໍຮ້ອງຖາມໄປວ່າ " ຈັ່ງໃດຫຍັນ ! " ເຂົາບໍ່ຕອບ ແລະ ຂ້າພະເຈົ້າກໍບໍ່ຫວັງໄດ້ຮັບຄຳຕອບ ເພາະເປັນຄຳຖາມບໍ່ເອົາຈິງ ເອົາຈັງຖາມໄປພໍແລ້ວຮີດ, ເປັນການທັກທາຍໃນຖານະຄົນເຄີຍ ຮູ້ຈັກກັນ.

ຂ້າພະເຈົ້າພາລູກຍ່າງຕໍ່ໄປ ຈັບມືລູກໄວ້ເພື່ອໃຫ້ລູກຫມັ້ນ ໃຈວ່າ ຈະບໍ່ເປັນອັນຕະລາຍ, ເຂົາກໍຍ່າງກົງມາ, ພວກເຮົາ ຫ່າງກັນປະມານສາມແມັດ, ຂ້າພະເຈົ້າທັກທາຍເຂົາ ດ້ວຍປະ ໂຫຍກເດີມ ໂດຍບໍ່ເຕີມຕື່ມຫຍັງ.

" ຈັ່ງໃດ ຫຍັນ ! "

ເຂົາຜ່ານໄປ ໂດຍບໍ່ມີສຽງທັກທາຍຕອບ ມີແຕ່ຫອບເອົາ ສິ່ງເສດເຫລືອທ້ອຍຕິດໂຕເປັນມະຍຸ່ງມະຍ່າງໄປ.

ລູກສາວຂ້າພະເຈົ້າຫລຽວນຳຫລັງເຂົາໄປແລ້ວ ຖາມຂຶ້ນ ວ່າ :

" ຫມູ່ພໍ່ຫວະ ? "

" ເອີ ແມ່ນລະ "

" ຫມູ່ພໍ່ແບບນີ້ ມີຈັກຄົນ ? "

" ມີຫຼູດອອ. " ຂ້າພະເຈົ້າຕອບແຕ່ກໍຍັງສົງໄສໃນຄຳ ຖາມຂອງລູກ.

" ລູກຢາກໃຫ້ພໍ່ມີຫມູ່ແບບນີ້ຫລາຍຄົນ ."

" ເປັນຫຍັງວ່າຈັ່ງຊັ້ນລູກ ? "

" ມີແບບນີ້ຫລາຍຄົນ ແຄມນ້ຳຂອງກໍບໍ່ມີຂີ້ເຫຍື້ອ." ລູກ ສາວອະທິບາຍ.

---

ພິມເທື່ອທຳອິດ, ປີ 1991 ໃນສຽງແຄນລາວ.

# 50 ກີບ

ໃບໄມ້ພວມຂຽວອ່ອນ, ສຽງຈັກຈັ່ນຮ້ອງດັງລະງົມ, ແສງແດດກ້າເກີນທຳມະດາ, ລົມບໍ່ຄ່ອຍພັດແຮງ ອາກາດຈຶ່ງຮ້ອນອົບເອົ້າ - ນີ້ຢ່າງເຂົ້າລະດູຮ້ອນເຕັມທີແລ້ວ.

ຂ້ອຍນັ່ງຢູ່ກ້ອງຮົ່ມຕົ້ນໄມ້ໜ້າບ້ານ ຟັງສຽງຈັກຈັ່ນຮ້ອງທີ່ດັງແວ່ວໆມາຈາກທຸກທິດ, ເປັນການປະສານສຽງ ທີ່ມີຈັງຫວະດຽວ ບໍ່ມີກຳນົດຍາມເຊົາແນ່ນອນ, ໃຜອາລົມດີກໍຟັງມ່ວນ, ໃຜອາລົມບໍ່ດີ ກໍຮູ້ສຶກຢາກໄລ່ຫູ, ສ່ວນຂ້ອຍເອງຮູ້ສຶກວ່າດົນຕີທຳມະຊາດນີ້ ພາໃຫ້ຄວາມຄິດລ່ອງລອຍໄປໄກ ແລະອາດຈະຝັນທັງນັ່ງກ້າບໍ່ຮູ້ສຶກຫິວນ້ຳ. ຂ້ອຍຢາກກິນຂອງເຢັນໆ ໂດຍສະເພາະກະແລ້ມຫວານໆທີ່ເຄີຍເຫັນຜູ້ຂາຍມັກຜ່ານກາຍໜ້າບ້ານໄປເລື້ອຍໆ ມື້ນີ້ຍັງບໍ່ໄດ້ຍິນສຽງກະດິ່ງຂອງຄົນຂາຍກະແລ້ມເທື່ອ, ບໍ່ດົນເຂົາອາດຜ່ານມາເຂດນີ້.

ທີ່ປະຕູຮົ້ວບ້ານ, ເດັກນ້ອຍອາຍຸຫ້າປີ ຊື່ ຄຳຕຸພວມຫລິ້ນ



ແຕ້ມໂດຍ : ປຸ້ຍ ( 11 ປີ )

ຢູ່ຕາມລຳພັງ. ຄຳຕຸ ເປັນລູກຊາຍຂອງນ້າສາວພິນ ຊຶ່ງເປັນນ້ອງສາວຫລ້າຂອງແມ່ຂ້ອຍ. ນ້າສາວພິນເປັນແມ່ໝ້າຍ, ຜົວຂອງລາວຕາຍ ເມື່ອສາມປີກ່ອນ. ລາວເອົາລູກສອງຄົນເຂົ້າມາໃນເມືອງ, ຄົນໜຶ່ງເອົາມາປິ່ນປົວ ຢູ່ໂຮງພະຍາບານ ເພາະປ່ວຍເປັນໄຂ້ປ່າ, ຄົນໜຶ່ງເອົາມາຝາກໄວ້ນຳຄອບຄົວຂ້ອຍ ຄືຄຳຕຸນີ້ເອງ. ສ່ວນລູກຊາຍກົກ ອາຍຸ 8 ປີ ຢູ່ນຳລຸງ ທີ່ຊົນນະບົດພຸ້ນ. ນ້າສາວພິນ ເຝົ້າລູກຢູ່ໂຮງພະຍາບານ ນັບແຕ່ມື້ມາຮອດ.

ຄຳຕຸ ເປັນເດັກນ້ອຍປາກກ້ອງ, ຄຳຖາມຂອງເຂົາເຮັດໃຫ້ທຸກຄົນໄດ້ຫົວ. ທຳອິດທີ່ມາຮອດ ເຂົາຖາມຂ້ອຍໂລດວ່າ :

" ອ້າຍຢູ່ຫ້ອງ ປ.ໄດ ? "

" ກາຍຫ້ອງ ປ. ແລ້ວ, ອ້າຍຢູ່ມັດທະຍົມ. ຕຸເດ ຢູ່ຫ້ອງໃດ ? "

" ຍັງບໍ່ໄດ້ເຂົ້າໂຮງຮຽນເທື່ອ."

" ປານໃດຈຶ່ງຊິເຂົ້າ " ຂ້ອຍສໍ້.

" ເພິ່ນວ່າເອົາມືຈັບຫູໄດ້ກ່ອນ."

" ຈັບແບບໃດ ! ລອງເບິ່ງດູ."

ແລ້ວຄຳຕຸ ກໍເອົາມືຂວາໂຄ້ງຂ້າມຫົວໄປຈັບຫູເບື້ອງຊ້າຍແຕ່ບໍ່ເຖິງ, ສະແດງວ່າ ຍັງບໍ່ທັນໃຫຍ່ ພໍເຂົ້າໂຮງຮຽນເທື່ອ. ຂ້ອຍຫາກໍມາເຂົ້າໃຈ ວິທີການວັດແທກ ເພື່ອຄັດເລືອກເອົາເດັກນ້ອຍເຂົ້າໂຮງຮຽນຢູ່ຊົນນະບົດ ຈາກການບອກເລົ່າ ຂອງຄຳຕຸນີ້ເອງ.

ຄຳຕຸເຄີຍຖາມຂ້ອຍວ່າ : " ອ້າຍຈັບຈັກຈັ່ນເປັນບໍ່ ?" ຂ້ອຍຕອບວ່າບໍ່ເປັນ, ບໍ່ເຄີຍຈັບ, ມີແຕ່ຟັງສຽງມັນຮ້ອງເມື່ອຢ່າງເຂົ້າລະດູຮ້ອນ. ແລ້ວຄຳຕຸ ກໍໄປຊອກເອົາໄມ້ນ້ອຍໆ

ຍາວປະມານສອງແມັດມາ,  ເອົາຢາງໝາກມີ້ ຈາກຕົ້ນຢູ່ຫລັງບ້ານ ແລ້ວເອົາຕິດໃສ່ສົ້ນໄມ້ເບື້ອງໜຶ່ງ. ຕໍ່ຈາກນັ້ນ ເຂົາກໍເຂົ້າໄປກ້ອງຕົ້ນໄມ້ທີ່ມີສຽງຈັກຈັ່ນດັງລະງົມ. ເຂົາຄ່ອຍໆເດ່ໄມ້ໄປຫາຈັກຈັ່ນທີ່ຢູ່ສູງ ຈົນເກືອບຫວິດສົ້ນໄມ້, ຄາວດຽວກໍເຫັນແມງໄມ້ດິ້ນດັ່ນ ພັບປີກວັບໆ ຕິດຢູ່ສົ້ນໄມ້, ມັນພະຍາຍາມດິ້ນໃຫ້ຫລຸດຈາກຢາງ ແຕ່ບໍ່ສຳເລັດ. ຄໍາຕຸ ເອົາຈັກຈັ່ນໃຫ້ຂ້ອຍເບິ່ງດ້ວຍທ່າທາງພູມໃຈໃນຄວາມສາມາດຂອງຕົນ.

" ເກັ່ງ ເກັ່ງອີ່ຫລີ ! " ຂ້ອຍກ່າວຊົມເຊີຍ " ຈັບໂຕດຽວກໍພໍເດີ, ປ່ອຍໃຫ້ພວກມັນຮ້ອງ."

ຊີວິດຢູ່ຊົນນະບົດສອນໃຫ້ ຄໍາຕຸຮູ້ຈັກຫລາຍສິ່ງຫລາຍຢ່າງຊຶ່ງຂ້ອຍບໍ່ເຄີຍຮູ້ຈັກມາກ່ອນ. ຂ້ອຍຮຽນຮູ້ນຳເຂົາຫລາຍເລື່ອງພ້ອມດຽວກັນ ຂ້ອຍກໍສອນໃຫ້ເຂົາຮູ້ຫລາຍສິ່ງຫລາຍແນວກ່ຽວກັບຕົວເມືອງ. ຂ້ອຍບອກເຂົາວິທີຍ່າງໄປຕາມທາງ ແລະ ການຂ້າມທາງທີ່ປອດໄພ, ບອກເລື່ອງເຮັດອະນາໄມ ແລະສິ່ງທີ່ເຂົາພໍໃຈທີ່ສຸດ ກໍຄືໄດ້ຂີ່ຊ້ອນທ້າຍລົດຈັກຂອງຂ້ອຍໄປບ່ອນນັ້ນບ່ອນນີ້, ເບິ່ງຊຶ່ງເຂົາມີຄວາມສຸກທີ່ສຸດ ແລະ ຍອມເຮັດທຸກສິ່ງ ທຸກຢ່າງຕາມທີ່ຂ້ອຍບອກ. ບາງຄັ້ງ ລົດຈັກຈອດຢູ່ ເຂົາກໍຂຶ້ນຂີ່, ເອົາມືລູບບ່ອນນັ້ນ ບາຍບ່ອນນີ້. ຂ້ອຍເຄີຍພາໂລກາມວ່າ :

" ຢູ່ບ້ານຕຸເຄີຍຂີ່ບໍ່ ? "

" ບໍ່, ຂີ່ແຕ່ມ້າກ້ານກ້ວຍ."

ຕອນມາຮອດໃຫມ່ໆ ກ່ອນທີ່ແມ່ຂອງເຂົາຈະພານ້ອງເຂົ້ານອນໂຮງໝໍ, ແມ່ສັ່ງເຂົາວ່າ ໃຫ້ຟັງຄວາມລຸງປ້າ ແລະ ພວກອ້າຍເອື້ອຍ, ບໍ່ໃຫ້ຂໍເງິນນຳຜູ້ໃດ.

" ເຊົາແອ່ວແມ່ຊີ້ນັ້ນ ຊີ້ນີ້ໃດ ເພາະແມ່ບໍ່ມີເງິນຫລາຍ, ກ້າຕຸຂໍເງິນໄປຊື້ເຂົ້າໜົມແລ້ວ ແມ່ກໍບໍ່ມີເງິນຊື້ຢາປິ່ນປົວນ້ອງ

ແລ້ວນ້ອງກໍແຮ່ງເຈັບຫລາຍຂຶ້ນ, ຕຸຮັກນ້ອງແມ່ນບໍ ?" ນ້າພິມເວົ້າລົມກັບລູກຄ່ອຍໆ ແຕ່ແຈ່ມແຈ້ງ.

ຄໍາຕຸງຶກຫົວຮັບ ແລະ ບໍ່ເວົ້າຫຍັງ.

ຄໍາຕຸ ລຶ້ງແກວ່ນສະຫນິດສະຫນົມກັບຂ້ອຍຫລາຍກວ່າກັບຜູ້ອື່ນໆ ໃນຄອບຄົວ. ເຂົາເຮັດທຸກສິ່ງທຸກຢ່າງ ທີ່ຂ້ອຍບອກສອນທັງນີ້ອາດເປັນເພາະ ເຂົາຫວັງຈະໄດ້ຂີ່ຊອນທ້າຍລົດຈັກຂ້ອຍຢູ່ເລື້ອຍໆ. ແຕ່ໂດຍທົ່ວໄປແລ້ວ ຂ້ອຍເຫັນວ່າຄໍາຕຸເປັນເດັກນ້ອຍສະຫລາດ ສະຫລຽວ ແລະ ເຂົ້າໃຈງ່າຍ ໃນທຸກເລື່ອງທີ່ຂ້ອຍບອກສອນ.

ການຄອງຄອຍໃຫ້ຄົນຂາຍກະແລ້ມປະກົດຕົວ ທ່າມກາງສຽງຈັກຈັ່ນຮ້ອງດັງລະງົມນັ້ນ ຮູ້ສຶກວ່າ ເວລາຄືແກ່ຍາວດົນນານພິລຶກ. ຂ້ອຍແນມໄປທີ່ປາກປະຕູຮົ້ວເຂົ້າບ້ານ, ເຫັນຄົນກາຍທາງຜ່ານໄປເກືອບຕະຫລອດເວລາ ທ່າມກາງແສງແດດກ້າຈົນເຮັດໃຫ້ຢາງປູທາງເປື່ອຍ.

ແລ້ວໃນທີ່ສຸດ ກໍມີສຽງກະດິງຄົນຂາຍກະແລ້ມ ດັງມາແຕ່ໄກ. ຂ້ອຍຮ້ອງບອກຄໍາຕຸ ມາເອົາເງິນໄປລັດຊື້ ຢູ່ແຄມທາງຊື່ປາກປະຕູເຂົ້າບ້ານ.

" ເອົານີ້ເງິນຮ້ອຍກີບ, ໃບລະ 50 ຊື້ກະແລ້ມສອງອັນອັນລະ 50 ອັນຫນຶ່ງໃຫ້ຕຸກິນ ອັນຫນຶ່ງໃຫ້ອ້າຍ."

ເຂົາຮັບເອົາເງິນແລ້ວ ແລ່ນໄປທີ່ປາກປະຕູ ເຂົ້າບ້ານ, ບໍ່ດົນກໍ່ຍ່າງກັບຄືນມາ ມືຖືກະແລ້ມມາອັນດຽວ. ຂ້ອຍແປກໃຈ, ຄິດຢ່າງຫນຶ່ງວ່າ ກະແລ້ມຂຶ້ນລາຄາເປັນອັນລະຮ້ອຍກີບບໍ ຫລືວ່າຄົນຂາຍໂກງເງິນເດັກນ້ອຍ. ເມື່ອເຂົາມາຮອດໃກ້ ຂ້ອຍຈຶ່ງຖາມຂຶ້ນ :

" ເປັນຫຍັງຊື້ອັນດຽວ."

ເຂົາບໍ່ຕອບ ແຕ່ກໍຍິ້ມກະແລ້ມອັນດຽວນັ້ນໃຫ້ຂ້ອຍ. ຂ້ອຍສໍ້າການຕື່ມເພື່ອຄວາມແຈ່ມແຈ້ງ.

" ເງິນຮ້ອຍກີບ ເປັນຫຍັງຊື້ອັນດຽວ ? "

" 50 ກີບ, ຕຸຊື້ໃຫ້ອ້າຍ ອີກ 50 ກີບ ຕຸເອົາໄວ້ໃຫ້ແມ່ຊື້ຢາປົວນ້ອງ." ເຂົາເວົ້າສອງຄ່ອຍ ທ່າທາງຢາກກິນກະແລ້ມ ຢ່າງເຫັນໄດ້ຄັກ.

ຂ້ອຍຄິດວ່າຈະເອົາກະແລ້ມເຂົ້າປາກ ແຕ່ກໍຮູ້ສຶກມີຫຍັງມາຕັນຮູຄໍໄວ້, ຄວາມຢາກຄວາມຫິວເຫືອດຫາຍໄປ ແລະຄວາມອີດູສົງສານເຂົ້າມາແທນທີ່. ຂ້ອຍເອົາກະແລ້ມອັນດຽວນີ້ຄືນໃຫ້ຄໍາຕຸ ເພາະກ້າຈະຊື້ອີກ ກໍບໍ່ທັນ ເພາະຄົນຂາຍ ໄດ້ກາຍໄປໄກແລ້ວ.

" ຕຸກິນສາ, ອ້າຍເຄີຍກິນມາຫລາຍແລ້ວ. "

ຄໍາຕຸ ເອົາມືໜຶ່ງຈັບກະແລ້ມໃສ່ປາກ, ອີກມືໜຶ່ງກໍາເງິນໃບ 50 ກີບໄວ້ແໜ້ນ.

---

ຂອນປີ 1990

# ດິກ ກັບ ແດ້ງ

ເວລາໃດເຫັນບັກດິກນອນມິ້ນຕາເສີຍຢູ່ແລ້ວ ຂ້ອຍຮູ້ສຶກອີ່ມເອີາໃຈ. ຍາມໄທເຮົາກັບຈາກໂຮງຮຽນ ຫລືໄປວຽກມາ ບໍ່ມີລະວ່າ ມັນຊິແກວ່ງຫາງດ້ອກແດ້ກໃສ່ ຫລື ແລ່ນມາດົມ ຕາມແຄ່ງຕາມຂາ, ມັນເອົາແຕ່ນອນເສີຍ ບໍ່ຫ່ວງບໍ່ໄຍນໍາໃຜ, ຢ່າງຫລາຍກໍມີພຽງແຕ່ຍືນຂຶ້ນ ຢຽດຂາອ້າປາກຫາວເວີບ, ຄັນໄທເຮົາບໍ່ຮ້ອງບໍ່ດີດມືໃສ່ ມັນກໍເຮັດອີ່ເງາະອີ່ງ່ອຍລົ້ມນອນລົງອີກ.

" ໂອຍດິກເອີຍ ... ຈັ່ງແມ່ນມຶງຂີ້ຄ້ານສັນຫລັງຍາວລື່ນບ້ານເຫລືອເມືອງເພິ່ນນໍ້ ". ແມ່ມັກຈົ່ມດັ່ງນີ້ສະເຫມີ ເມື່ອເຫັນມັນນອນແລ່ງແງ່ງຢູ່ກ້ອງຕະລ່າງ.

ຍາມໃດຂ້ອຍມີຂອງກິນຕິດມືມາ ບາດນັ້ນລະບັກດິກລຸກປຸບປັບ ແລ່ນຫອບຂະໂຍງມາຫາ ຊູສອງຕີນຂຶ້ນສູງ ຊິຍາດເອົາຄາມືຄາຕີນເຮົາໃຫ້ໄດ້, ພໍບັກແດ້ງເຂົ້າມາໃກ້ ຫວັງເອົາສ່ວນແບ່ງ ບັກດິກຄາງຮື່ມໆ ຫຍໍ່າແລ້ວໃສ່ ເພື່ອນາບຂູ່ໃຫ້ຫມູ່ຢ້ານ ປານວ່າ

ເປັນໝາແຕ່ມັນໂຕດຽວໃນບ້ານນີ້. ຂ້ອຍຮູ້ສຶກຄັນແຂ້ວ, ຫລາຍເທື່ອຫລາຍທີ ຂ້ອຍກໍອົດບໍ່ໄດ້ ຈຶ່ງຄ້ວາເອົາໂດ້ນຟືນຟາດໃສ່ກາງຫລັງມັນ ຟັງສຽງມັນຮ້ອງດັງຄັບບ້ານ ປານຊິລົ້ມຊິຕາຍໄປໃນບຶດໜຶ່ງຍາມດຽວ.

ຂ້ອຍຮູ້ວ່າ ເປັນຫຍັງບັກດິກຈຶ່ງຮ້ອງເອົາແທ້ເອົາວ່າ ທັງທີ່ຂ້ອຍບໍ່ໄດ້ຕີແຮງພິລຶກພິໂລ, ບາງເທື່ອເຕາະຄ່ອຍໆ ຫລືບາງເທື່ອພຽງແຕ່ເງືອດໄມ້ຄ້ອນເທົ່ານັ້ນ ບັກດິກ ຈະຮ້ອງເງົ້ງເງົ້ງເພື່ອໃຫ້ເຈົ້າຂອງມັນໄດ້ຍິນ.

ພ້ອມໆກັບສຽງບັກດິກຮ້ອງ ກໍມີສຽງບຸນໂຕດັງຂຶ້ນ.

" ບັກໃດຕີໝາກູ ? " ນາຍຂອງບັກດິກຮ້ອງຖາມແບບເອົາເລື່ອງ.

" ມັນຍາດກິນຂອງບັກແດ້ງ, ບໍ່ທັນໄດ້ຕີ ພຽງແຕ່ເງືອດໃສ່ຊື່ໆ " ຂ້ອຍແກ້ຄວາມ.

" ບໍ່ຕີມັນຊິຮ້ອງເບາະ, ລະອັງເດີ້ !" ບຸນໂຕເອົ້ານາບຂູ່ຂ້ອຍແບບກວນໆປະສາດ, ກໍຄືກັນກັບບັກດິກນາບຂູ່ບັກແດ້ງນັ້ນລະ.

ເປັນຕາຊັງແທ້ແລ້ວ ແມ່ນຕອນເກືອເຂົ້າ, ບັກດິກສວາບກິນໄວປານຫຍັງ ສຽງດັງຈວ໊າບ ຈວ໊າບ, ບໍ່ພໍຄາວ ເຂົ້າກໍໝົດແລ້ວມັນກໍເສືອກແລ່ນໄປໃສ່ກ້ວຍຂອງບັກແດ້ງ ແລະຍາດກິນເອົາຢ່າງບໍ່ເກງອົກເກງໃຈ, ແກມຍັງຫຍໍ້ງແຂ້ວໃສ່ ເພື່ອໃຫ້ບັກແດ້ງຢ້ານ. ຂ້ອຍຕ້ອງເຝົ້າເບິ່ງທຸກເທື່ອ ແລະ ປ້ອງກັນບໍ່ໃຫ້ບັກດິກມາຍາດກິນເຂົ້າບັກແດ້ງ, ກ້າບໍ່ດັ່ງນັ້ນ ບັກແດ້ງໝາຂອງຂ້ອຍກໍບໍ່ທັນກິນອີ່ມຈັກເທື່ອ ເພາະມັກຖືກບັກດິກຂົ່ມຂູ່ ຈົນຕ້ອງໜີຈາກກ້ວຍເຂົ້າກ່ອນທີ່ຈະອີ່ມທ້ອງ.

ມີຫລາຍເທື່ອທີ່ຂ້ອຍຕັກເອົາເຂົ້າປົນນໍ້າແກງ ໃສ່ກ້ວຍໃຫ້

ບັກແດ້ງຫລາຍໆ ແຕ່ໃສ່ກ້ວຍໃຫ້ບັກດຶກໜ້ອຍໆ ແລ້ວກໍກຸມກີໄມ້ຄ້ອນໄວ້. ບໍ່ດົນບັກດຶກ ກໍຈະແລ່ນມາຫາກ້ວຍເຂົ້າຂອງບັກແດ້ງ, ພໍເຫັນຂ້ອຍຈັບໄມ້ຄ້ອນຢູ່ ມັນຈະຢຸດຈິກແລ້ວແນມເບິ່ງໜ້າ ໃຊ້ລີ້ນເລຍສົບໄປມາ, ທ່າທາງຂອງມັນບົ່ງບອກ ເຖິງຄວາມລັງເລໃຈ ເພາະວ່າຖ້າຈະຫລົບໄປຍາດກິນເຂົ້າບັກແດ້ງ ກໍມີຫວັງກີກຄ້ອນ, ຖ້າບໍ່ຍາດກໍຈະຫິວ ເພາະກິນບໍ່ອີ່ມ. ຂ້ອຍທຳທ່າຫລຽວໄປທາງອື່ນ ເຮັດຄືບໍ່ສົນໃຈ ແລ້ວບັກດຶກກໍຈະຄ່ອຍໆຍ່າງເຂົ້າໄປໃກ້ກ້ວຍເຂົ້າບັກແດ້ງ, ຂ້ອຍເອງເສືອດຕາຫາເບິ່ງບຸນໂຕ ນາຍຂອງບັກດຶກ, ເມື່ອເຫັນວ່າບໍ່ມີບຸນໂຕ ຢູ່ໃກ້ໆແຖວນີ້ຂ້ອຍກໍເງືອດໄມ້ຄ້ອນ ຟາດໃສ່ຫລັງບັກດຶກຢ່າງໜຳໃຈ, ມັນຮ້ອງຈົນສຸດສຽງທັງແລ່ນໜີໄປລີ້ຢູ່ກ້ອງຄອກໝູ ສົ່ງສຽງເວົ້າເວົ້າ ດັ່ງມາເປັນບາດ ເປັນບາດ ຄ້າຍສຽງສະອື້ນ ປານວ່າຊິບໍ່ຍືນພໍກຸ້ມຟ້າ ກຸ້ມຝົນປີນີ້.

ແມ່ນຢູ່ວ່າ ເປັນການບໍ່ຍຸດຕິທຳ ທີ່ແບ່ງເຂົ້າໃຫ້ໝາສອງໂຕບໍ່ເທົ່າກັນ, ແຕ່ມັນກໍເໝາະສົມດີແລ້ວ, ເພາະບັກດຶກ ມັນຂີ້ຄ້ານ, ຄົນແປກໜ້າເຂົ້າບ້ານ ບໍ່ເຫັນວ່າມັນຊິເຫົ່າຈັກເທື່ອ, ມີແຕ່ປ່ອຍໃຫ້ບັກແດ້ງເຫົ່າໂອ້ງໆຍາມໃດກໍດາຍ. ໄທເຮືອນເຮົາຍັງເວົ້າພົ້ນຢູ່ບໍ່ເຊົາ ຄືວ່ານັບແຕ່ເອົາບັກດຶກມາລ້ຽງໄວ້ໄດ້ສອງປີປາຍແລ້ວ ເຫັນມັນເຫົ່າເທື່ອດຽວ - ແມ່ນຕອນທີ່ ບັກແທງຜີບ້ານຸ່ງເສື້ອຕ່າມຍ່າມພາຍກົງເຂົ້າມາໃນບ້ານ ເພື່ອຂໍທານ. ເວົ້າເລື່ອງນີ້ຂຶ້ນມາຍາມໃດ ແມ່ນເຄືອງຫູບຸນໂຕຍາມນັ້ນ. ຄວາມຈິງບັກດຶກກໍເຫົ່າຫລາຍຢູ່ດອກ ແຕ່ຄືນໆ ເຫົ່າເທື່ອໜຶ່ງ ໄທເຮືອນເຮົາກໍເລີຍລືມຄິດເຖິງຕອນມັນເຫົ່າສາ.

ບຸນໂຕ ມັກເວົ້າປົກປ້ອງບັກດຶກສະເໝີ ແຖມຍັງໃສ່ຮ້າຍປ້າຍສີບັກແດ້ງອີກ ຫາວ່າບັກແດ້ງເຫົ່າຊະຊາຍ. ເຂົາວ່າບັກດຶກ

ເຄັ່ງຂຶມ, ເດັກນ້ອຍຢ້ານມັນຄືຫຍັງນີ້ ພຽງແຕ່ມັນຄາງຫງັ່ງໆໃສ່ໜ້ອຍດຽວ ເດັກນ້ອຍພາກັນເປີດອາດຫລາດໂລດ ບໍ່ຈຳເປັນວ່າມັນຈະຕ້ອງເຫົ່າ. ສ່ວນບັກແດ້ງນັ້ນ ເຫົ່າເອົາແຕ່ຕາຍເປັນ, ກິກິກໍເຫົ່າ, ໃບໄມ້ຫລົ່ນກໍເຫົ່າ, ໂອ້ຍ ! ຢາກໄລ່ຫູ, ເຫົ່າຫລາຍເດັກນ້ອຍເລີຍບໍ່ຢ້ານ ເຫັນເປັນເລື່ອງທຳມະດາ ແຖມຍັງມາລໍ້ມາຫລອກໃຫ້ມັນເຫົ່າຊ້ຳ, ບັກດິກເຫົ່າເປັນລະບອບໃດ-ວ່າດັ່ງນັ້ນ.

" ເຮີ ເຮີ ເຫົ່າເປັນລະບອບ ! ເຫົ່າຍາມໃດໄກ່ຂະເຈົ້າຕາຍຍາມນັ້ນ ຈົນອີ່ແມ່ໄດ້ເອົາເງິນ ໄປເສຍຄ່າໄກ່ ໃຫ້ຂະເຈົ້າເລື້ອຍໆ, ເຫັນໄກ່ຄົນເຮືອນໃກ້ ເຂົ້າມາບ້ານຍາມໃດ ບັກດິກໄລ່ກັດຈົນຕາຍ, ຄັນບໍ່ຕາຍກໍຂົນຫລົ່ນປີກຫັກ ". ຂ້ອຍເວົ້າເຍີ້ຍບຸນໂຕ ຜູ້ມີການະເປັນອ້າຍ.

" ກະດີຕວ່າ, ບັກດິກໄລ່ໄກ່ອອກຈາກບ້ານ, ດີກວ່າບັກແດ້ງ ທີ່ເຫົ່າບໍ່ມີຍາມເຊົາ ຢາກໄລ່ຫູມະເອີ້ຍ, ເບິ່ງບາດຍ່າງກໍເປັນສີເດັ້ມໆ ຄືເປັນຂີ້ໝາກເຫລືອງ ນີ້ຫລະ ສ່ວນບັກດິກມັນກຶດຊຶ່ງຊັ່ງ, ໃຜເຫັນກະຢ້ານ, ດັ່ງນີ້ ຈຶ່ງບໍ່ມີໃຜກ້າລ່ວງເຂົ້າມາໃນບ້ານ " ບຸນໂຕເວົ້າອ້າງຂໍ້ດີຂອງໝາຕົນ.

" ຈ້າງຂ້ອຍກໍບໍ່ຢ້ານ, ມັນຄ້ານຄືຫຍັງນີ້, ກິນຫລາຍກໍປານນັ້ນ ຄືກັນກັບນາຍຂອງມັນຫັ້ນແຫລະ ".

ຍາມໃດຂ້ອຍເວົ້າແບບນີ້ ບຸນໂຕມັກແລ່ນຫລູບ ໃສ່ຂ້ອຍເລື້ອຍໆ ແຕ່ແມ່ປົກປ້ອງຂ້ອຍໄວ້ ຂ້ອຍເລີຍຫວິດ ກີກໝາກກອກຂອງນາຍບັກດິກ.

" ມຶງເດີ້ບັກເຕັມ, ກູຊິຈັດການມຶງຄັກໆ ຈັກເທື່ອ ກ້າເບິ່ງເດີ ... " ບຸນໂຕເວົ້າດ້ວຍຄວາມເຫລືອອົກເຫລືອໃຈ.

ເຮົາສອງຄົນອ້າຍນ້ອງ ມັກມີເລື່ອງຜິດກອງກັນເລື້ອຍ ໆ

ໂດຍສະເພາະນັບແຕ່ເວລາເອົາບັກດິກ ແລະ ບັກແດ້ງມາລ້ຽງ. ທຳອິດບຸນໂຕ - ເອີ ອັນເອີ້ນຕິດສິບ ຕິດປາກແທ້ງ ນັ້ນແມ່ນ "ບັກໂຕ", ແຕ່ພໍ່ແມ່ເຕືອນເລື້ອຍໆວ່າ ບໍ່ໃຫ້ເອີ້ນກັນ "ບັກງ" ເພາະບໍ່ມ່ວນຫູ, ມັນຄືຮ້ອງໝາວ່າຊັ້ນ - ບຸນໂຕເອົາບັກດິກມາລ້ຽງກ່ອນ ໂດຍຂໍເອົານຳໝູ່ຢູ່ຄຸ້ມເໜືອ. ຕອນນັ້ນບັກດິກອາຍຸປະມານສາມເດືອນ. ບຸນໂຕ ແລະ ຂ້ອຍພາກັນລ້ຽງບັກດິກຢ່າງທະນຸຖະໜອມ, ພະຍາຍາມຫາເອົາຂອງດີໆໃຫ້ມັນກິນ ຈົນມັນອ້ວນດີພີງາມ, ຫລາຍໆເທື່ອ ສອງຄົນເຮົາຍາດກັນອຸ້ມບັກດິກຈົນຕ້ອງໄດ້ອອກກຳລັງແຮງຕີກັນ, ປ້ຳກັນ ຈົນເກືອກຂີ້ຝຸ່ນ, ຮ້ອນເຖິງຜູ້ໃຫຍ່ຕ້ອງໄດ້ມາແຍກອອກຈາກກັນ. ບຸນໂຕອາຍຸສິບເອັດປີ ລື່ນຂ້ອຍປີໜຶ່ງ, ຕີກັນແລ້ວພວກເຮົາກໍຫລິ້ນນຳກັນອີກ, ບໍ່ດົນກໍຕີກັນໃໝ່,ຮູ້ສຶກວ່າເວລາໃດຕີກັນແລ້ວ ຕໍ່ມາພວກເຮົາຈະຮູ້ສຶກຜູກພັນກັນຫລາຍກວ່າເກົ່າ ແລ້ວກໍຫລິ້ນຫົວນຳກັນ. ບາງເທື່ອມີເລື່ອງເລັກໆນ້ອຍໆ ພວກເຮົາກໍພາກັນຫົວ ເຊັ່ນດອກຈຳປາຕົ້ນໜ້າບ້ານ ຫລົ່ນຖືກຫົວບຸນໂຕໂດຍບັງເອີນ ພວກເຮົາກໍພາກັນຫົວຫົວແທ້ຫົວວ່າ ຈົນແມ່ຢາກໄລ່ຫູ ເພິ່ນຈຶ່ງຮ້ອງມາໃສ່ ໃຫ້ມິດແດ່. ເທື່ອໜຶ່ງບັກດິກແລ່ນມາຂ້ອງແຄ່ງຂ້ອງຂາ ຈົນຂ້ອຍເຊໄປເກືອບລົ້ມ ບຸນໂຕຫົວຂວັນສຽງດັງແຮງ, ທຳອິດຂ້ອຍກໍບໍ່ພໍໃຈທີ່ມີຜູ້ຫົວຂວັນ, ແຕ່ເມື່ອເຫັນບຸນໂຕຫົວຈົນທ້ອງແຂງ ຂ້ອຍອົດບໍ່ໄດ້ເລີຍຫົວໄປນຳ - ຫົວຂວັນບຸນໂຕທີ່ຫົວ, ສຽງຂ້ອຍສຽງບຸນໂຕດັງຟົດສະນັ້ນ. ພວກເຮົາພາກັນຫົວຢູ່ຕັ້ງດົນ ... ຕອນແລງມາຫລັງຈາກກິນເຂົ້າແລງແລ້ວ ຫລຽວເບິ່ງໜ້າກັນ ພວກເຮົາກໍຫົວຂຶ້ນອີກ, ຫົວເລື່ອງທີ່ຕີນເອງຫົວ ...

ສອງເດືອນຫລັງຈາກທີ່ເອົາບັກດິກມາລ້ຽງ ຂ້ອຍກໍຂໍໝານ້ອຍນຳລຸງເພັງມາໂຕໜຶ່ງ ແລະ ໃສ່ຊື່ມັນວ່າ ບັກແດ້ງ, ທີ່ໃສ່

ຊື່ນີ້ກໍເພາະວ່າມັນຈ່ອຍ ກະແດ້ງ. ຂ້ອຍເອົານ້ຳນົມໃຫ້ມັນກິນ, ອຸ້ມມັນ ເກືອບຕະຫລອດເວລາ ຢອກຫລິ້ນກັບມັນ ເກືອບບໍ່ມີຍາມເຊົາ. ເມື່ອມັນໃຫຍ່ຂຶ້ນມາແດ່ ຂ້ອຍກໍເອົາອາຫານແນວແຊບໆໃຫ້ມັນກິນ, ລ້ຽງມັນຢ່າງກະຫນອມແພງ. ເມື່ອມີຜູ້ໃດ ຜູ້ຫນຶ່ງເອົາຫຍັງໃຫ້ຂ້ອຍກິນ ຂ້ອຍຈະແບ່ງໃຫ້ບັກແດ້ງສະເຫມີໆ ແລະຫລາຍໆເທື່ອ ບັກແດ້ງໄດ້ກິນຫລາຍກວ່າຂ້ອຍຊ້ຳ.

ຂ້ອຍມົວນຳແຕ່ບັກແດ້ງ ຈົນເກືອບຊິລືມບັກດິກ, ດົນໆຂ້ອຍຈິ່ງໄດ້ເອົາເຂົ້າໃຫ້ບັກດິກກິນເທື່ອຫນຶ່ງ ຄື ຕອນທີ່ບຸນໂຕບໍ່ຢູ່ບ້ານ. ຂ້ອຍລູບຂົນບັກແດ້ງ ອຸ້ມມັນໄວ້ແນບເອິກ, ຕື່ນເຊົ້າຂຶ້ນມາ ຫນ້າຕາບໍ່ທັນລ້າງ ຂ້ອຍໄປຫາບັກແດ້ງໂລດ, ຂ້ອຍຮັກບັກແດ້ງອີ່ຫລີ, ຍາມໃດໄດ້ຂອງກິນຂ້ອຍເອົາໃຫ້ບັກແດ້ງກ່ອນ, ບັກດິກໄດ້ທີຫລັງ ທັງໄດ້ຫນ້ອຍກວ່າ ຫລືບາງເທື່ອບໍ່ໄດ້ເລີຍ ແລ້ວແຕ່ກໍລະນີ. ດັ່ງນີ້ ບັກດິກຈິ່ງຕ້ອງຍາດບັກແດ້ງກິນ. ແນວໃດກໍຕາມ ກໍຍັງມີເທື່ອໃຜເທື່ອມັນ ຄືຍາມໃດບຸນໂຕໄດ້ຫຍັງມາ ກໍເອົາໃຫ້ບັກດິກກິນກ່ອນ ແລ້ວຈິ່ງເອົາໃຫ້ບັກແດ້ງ ແລະ ກໍມີຄືກັນທີ່ບັກແດ້ງ ຫມາຂອງຂ້ອຍ ບໍ່ໄດ້ກິນຫຍັງເລີຍ ແລ້ວແຕ່ກໍລະນີເຊັ່ນກັນ.

ເວລາຜ່ານໄປ ບັກແດ້ງ ອ້ວນດີພີມັນ ແລະ ໃຫຍ່ສູງຂຶ້ນຜິດຫູຜິດຕາ ແຕ່ກໍຍັງສູ້ບັກດິກບໍ່ໄດ້ເພາະບັກດິກໂຕໃຫຍ່ກວ່າ ກືດກວ່າ, ກັດກັນຍາມໃດ ບັກແດ້ງເສຍປຽບທຸກເທື່ອ. ເຫັນບັກແດ້ງບໍ່ມີທາງສູ້ ບັກດິກຍູທ່າງຂົ່ມເຫັງເອົາເລື້ອຍໆ, ເຊັ່ນ ຕອນຍາດກິນອັນນັ້ນອັນນີ້ ແມ່ນບໍ່ໄຫວບັກດິກ, ເວລາໃດຢອກກັນແລ້ວເກີດໃຈຮ້າຍຂຶ້ນມາ ບັກດິກຈະກັດບັກແດ້ງຢ່າງຮຸນແຮງ ຈົນບັກແດ້ງຮ້ອງສຽງດັງຄັບທີບ, ເມື່ອໄດ້ຍິນດັ່ງນັ້ນ ຂ້ອຍກໍຕ້ອງແລ່ນໄປຊ່ວຍບັກແດ້ງ ແລະເອົາໄມ້ຟາດບັກດິກໃຫ້ແລ່ນຫນີໄປ. ຂ້ອຍ

ຕີຫົວບັກດິກເທື່ອໃດ ກໍສະເບືອນຮອດຫົວບຸນໂຕເທື່ອນັ້ນ. ພວກເຮົາຜິດກັນທຸກເທື່ອ ທີ່ໝາສອງໂຕນີ້ກັດກັນ, ຜິດກັນແລ້ວກໍຕີກັນ ໝາຍຄວາມວ່າ ຫລັງຈາກທີ່ໝາສອງໂຕກັດກັນເລີກລາໄປແລ້ວ ກໍແມ່ນພວກພວກເຮົາຈະຕ້ອງກັດ... ເອີ ຕີກັນ, ຮ້ອນເຖິງແມ່ ຄືແມ່ຈະຕ້ອງມາແຍກພວກເຮົາອອກຈາກກັນ, ບາງເທື່ອກວ່າຈະ ຍຸດຕິນອຍວັດໄດ້ ແມ່ກໍຈຳເປັນໃຊ້ຝ່າມືຕົບພວກເຮົາ ຜູ້ລະສອງ ສາມບາດ ຈຶ່ງເປັນອັນສະຫງົບລົງໄດ້.

ບັກແດ້ງນັ້ນ ກໍບໍ່ແມ່ນວ່າຂ້ອຍຕັ້ງຍ້ອງມັນດອກ, ມັນມັກ ເຫົ່າອີ່ຫລີ, ຕອນຍັງນ້ອຍກໍເຫົ່າວ້ອກໆ, ເຫັນຫຍັງບໍ່ໄດ້ມັນເຫົ່າ ໝົດ, ເຫັນໝາໂຕບັກໃຫຍ່ ກາຍໜ້າບ້ານໄປ ມັນກໍເຫົ່າເອົາ ສາວ້ອກໆ ປານວ່າເຂົາຊິຢ້ານ. ພໍໃຫຍ່ມາ ແຮ່ງເຫົ່າຫລາຍ ສອງກໍແຮ່ງດັງ ເຫົ່າປານບໍ່ທັນໃຈເລີຍ ຄືບຸນໂຕວ່າທັ້ນແຫລະ. ສ່ວນບັກດິກນັ້ນ ເຫົ່າໜ້ອຍແດ່, ທີ່ໄດ້ເຫົ່າໜ້ອຍກໍເພາະບໍ່ມັກ ຢູ່ບ້ານ ຈັກມັນໄປທ່ອງທາງໃດ, ຕອນເຫັນມັນຢູ່ບ້ານກໍແມ່ນຕອນ ມັນນອນ, ເພາະສະນັ້ນ ເວລາມີຄົນເຂົ້າມາໃນບ້ານ ບັກແດ້ງ ຈະເຫົ່າກ່ອນ, ບັກດິກມົວນອນຫລັບຢູ່ ເມື່ອໄດ້ຍິນສຽງບັກແດ້ງ ແລ້ວ ບັກດິກກໍຈະມືນຕາຂຶ້ນ ແລະ ບໍ່ຈຳເປັນຊິເຫົ່າແລ້ວ ເພາະ ຄົນທີ່ເຂົ້າບ້ານມາອາດເປັນຄົນຮູ້ຈັກມັກຄຸ້ນ ຫລືເປັນພີ່ນ້ອງກັບຄົນ ໄທເຮືອນເຮົາ ແລະ ກໍ່ກໄທເຮືອນຮ້ອງໃສ່ບໍ່ໃຫ້ເຫົ່າຕໍ່ອີກແລ້ວ.

" ໝຸະ ! ບັກແດ້ງ ..." ນີ້ຄືວາຈາທີ່ບັກແດ້ງໄດ້ ຍິນເປັນປະຈຳ ແລະ ເຂົ້າໃຈຄວາມໝາຍດີ ນັ້ນຄືການຫ້າມ ເຫົ່າ ຫ້າມສະແດງຕົວເປັນພິດເປັນໄພ.

ການທີ່ບັກແດ້ງເຫົ່າກ່ອນນັ້ນກາຍເປັນນິດໄສ, ເປັນຄວາມ ຊິນເຄີຍ ຄືວ່າ ເວລາໃດທີ່ຢູ່ບ້ານພ້ອມກັນ ແລະ ກ້າມີຄົນເຂົ້າ ມາໃນບ້ານ ບັກດິກຈະປ່ອຍໃຫ້ບັກແດ້ງເຫົ່າກ່ອນແລ້ວມັນຈຶ່ງເຫົ່າ

ຕາມຫລັງ ແຕ່ເທົ່າສຽງດັງກວ່າສຽງໃຫຍ່ກວ່າ ເບິ່ງຄືວ່າມັນຕັ້ງໃຈໃຫ້ລືບສຽງບັກແດ້ງ, ກ້າວ່າບັກແດ້ງເຊົາເຫົ່າ ບັກດິກກໍຈະເຊົາເຫົ່າຄືກັນ, ຍາມໃດບັກແດ້ງບໍ່ເຫົ່າ ກໍຫມາຍຄວາມວ່າ ຄົນທີ່ເຂົ້າມາໃນບ້ານເປັນຄົນລົ້ງແກວ່ນກັບໄທເຮືອນ ດັ່ງນີ້ ຈຶ່ງບໍ່ຈຳເປັນຕ້ອງເຫົ່າ, ຂຶນເທົ່າກໍມີຫວັງໄດ້ຍິນສຽງ " ເຊະ ! ບັກດິກ ບັກແດ້ງ ! "

ລວມຄວາມແລ້ວ ບັກແດ້ງກວ້າງຂວາງກວ່າ ຄືຮູ້ຈັກຄົນຫລາຍກວ່າບັກດິກ, ແຕ່ບັກດິກມີປະສົບການມີຄວາມເປັນນັກເລງຫລາຍກວ່າ ເພາະບັກດິກບໍ່ມັກຢູ່ບ້ານ, ມັນໄປຕິດເທ່ຢູ່ຕາມກາງບ້ານ ຫລື ບໍລິເວນຕະຫລາດສະເຫມີ, ດັ່ງນັ້ນ ມັນຈຶ່ງຮູ້ກວ້າງຂວາງ ດ້ານເກເລຫລາຍກວ່າ ບັກແດ້ງ.

ຂ້ອຍກັບບັກດິກນັ້ນ ບໍ່ກິນເສັ້ນກັນເລີຍ, ເມື່ອມັນຂົ່ມເຫັງບັກແດ້ງ ຂ້ອຍກໍຕ້ອງລົງໂທດມັນ, ແລ້ວນາຍຂອງມັນກໍຫາທາງມາກວນ ຫລື ຂົ່ມຂູ່ຂ້ອຍຕໍ່ອີກ.

ຂ້ອຍເຂົ້າບ້ານຍາມໃດ ບັກແດ້ງຈະແລ່ນມາຮັບຕ້ອນໂດຍເລຍແຄ່ງເລຍຂາ ແລ່ນອ້ອມຂ້າງອ້ອມແອວ, ສ່ວນບັກດິກຈະນອນເສີຍ ບໍ່ຫ່ວງຫ້າຫ່ວງສິບ, ແຕ່ກ້າຂ້ອຍໂຍນຂອງກິນໃຫ້ບັກແດ້ງ ບັກດິກກໍຈະຄະລາດລຸກແລ່ນໄປໃສ່ ແລ້ວຍາດກິນທຸກເທື່ອ.

ບັກດິກກໍນັບຖືນາຍມັນຢູ່ດອກ. ເວລາໃດບຸນໂຕເຂົ້າບ້ານມາ ບັກດິກຈະຍໍຫົວຂຶ້ນ ຫລືບາງເທື່ອຈະຢືນຂຶ້ນ, ກ້າບໍ່ອື່ຫລືອື່ຫລໍມັນກໍບໍ່ຢືນດອກ ນອກຈາກວ່າ ບຸນໂຕຊິດິດມືໃສ່, ມັນຄືຊິຄິດວ່າເຄີກເວລານອນ ເພາະຄືນທີ່ຜ່ານມາ ມົວໄປຕິດເທ່ຢູ່ແກວຕະຫລາດ. ມື້ໃດບັກດິກລຸກແລ່ນໄປເລຍແຄ່ງເລຍຂານາຍຂອງມັນມື້ນັ້ນອາດຈະຜິດປົກກະຕິ, ຫລືບາງທີອາດເປັນຍ້ອນວ່າ ບຸນໂຕມີຂອງກິນຕິດມືມານຳ.

ມື້ໜຶ່ງ, ບຸນໂຕກັບຂ້ອຍ ຍ່າງຫລິ້ນໄປຕາມກະໜົນແຄມນ້ຳຂອງ ບໍ່ໄກຈາກເຮືອນ ຂອງພວກເຮົາປານໃດ, ຕາມເຄີຍບັກດຶກກັບບັກແດ້ງ ແລ່ນໄປພ້ອມ ໂດຍອອກໜ້າພາທາງ ແລ່ນດົມກົ່ນບ່ອນນັ້ນບ່ອນນີ້. ຄາວໜຶ່ງມີລົດໂອໂຕ ແລ່ນກາຍພວກເຮົາໄປ, ຄົນໃນລົດກົ້ມເສດເຂົ້າຈີ່ ເກືອບເຄິ່ງກ້ອນລົງຂ້າງກະໜົນ, ເຂົາອາດມີຈຸດປະສົງກົ້ມໃຫ້ໝາ ຫລືແນວໃດກໍບໍ່ຮູ້ໄດ້, ປະກົດວ່າບັກແດ້ງຢູ່ໃກ້ກວ່າ ຈຶ່ງແລ່ນຄາບເອົາ ເຂົ້າຈີ່ໄດ້ກ່ອນ, ບັກດຶກແລ່ນຍາດເອົາຕາມປະສາມັກເລງ ໂດຍໂດດໂຕມບັກແດ້ງໄວ້, ບັກແດ້ງບໍ່ຍອມວາງ ມັນລຸກຂຶ້ນແລ້ວກໍແລ່ນຂ້າມທາງໄປອີກຟາກໜຶ່ງ, ບັກດຶກແລ່ນໄລ່ຢ່າງໄວ, ແຕ່ ... ມີລົດໂອໂຕອີກຄັນໜຶ່ງແລ່ນມາຢ່າງໄວຄືກັນ ບັກດຶກຍັງບໍ່ທັນຂ້າມທາງມົ້ມ ລົດຈຶ່ງຕຳເອົາຝັງໄປນອກທາງ, ມັນນອນຮ້ອງເງົ້າເງົ້າຢູ່ກັບບ່ອນດ້ວຍຄວາມເຈັບປວດ, ຄາວໜຶ່ງກໍລຸກໄດ້ແລ້ວເຮັດຂາຫ້ານຍ່າງກັບຄືນເມືອບ້ານ.

ລົດຄັນນັ້ນແລ່ນໄປເລີຍ, ສ່ວນບຸນໂຕໄດ້ແຕ່ຮ້ອງດ່ານຳຫລັງ. ຂ້ອຍຮ້າຍດ່າໝາທັງສອງໂຕ : " ເອົາແຕ່ຍາດກັນ! ມື້ໜຶ່ງສູຊິຕາຍທັງສອງ ກ້າເບິ່ງ ! ... "

ເປັນເທື່ອທຳອິດ ທີ່ຂ້ອຍບໍ່ພ້ອມພຸ້ນພ້ອມພີ້ ເມື່ອໝາສອງໂຕນີ້ຍາດກັນກິນ.

---

ພິມເທື່ອທຳອິດ, ປີ 1974 ໃນ " ຟ້າໃໝ່ "

ພົງໄພໃຫ້ກຳເນີດຄວາມຊຸ່ມເຢັນ
ຈົນນ້ຳໝອກຍາມເຊົ້າຫລັ່ງນ້ຳຕາ
ຢ່າທັນໃຫ້ຄືນຫລັ່ງນ້ຳຕາເພາະຟ້າແລ້ງ
ຢ່າໃຫ້ຄວາມຂຽວສົດຊື່ນ ເປັນອັນແຫ່ງອະດີດເລີຍ.



ຮູບໂດຍ : ຈະເລີນໄຊ

# ຍາມແມ່ຈາກໄປ

ເມື່ອແມ່ຈາກໄປໄກ ບັນຍາກາດເປັນຊອຍວອຍ, ແຕ່ສິ່ງເລັກໆ ນ້ອຍໆ ກ່ຽວກັບແມ່ປະກົດເດັ້ນຂື້ນ ໃນມະໂນພາບຂອງຂ້ອຍ.

ແມ່ເດີນທາງໄປປາກເຊ ເພື່ອເຝົ້າເບິ່ງແຍງພໍ່ເຖົ້າ ຫລື ພໍ່ຂອງແມ່ເອງ. ພໍ່ເຖົ້າແກ່ຊະລາຫລາຍແລ້ວ ແລະ ເຈັບປ່ວຍດ້ວຍໂລກເບົາຫວານ. ພໍ່ເຖົ້າສັ່ງມາໃນຈົດຫມາຍບອກໃຫ້ແມ່ລົງໄປ. ແມ່ເປັນລູກສາວຄົນດຽວຂອງພໍ່ເຖົ້າ ແລະ ຈາກບ້ານເກີດເມືອງນອນມາຊາວກວ່າປີແລ້ວ ຄືນັບແຕ່ ແມ່ແຕ່ງດອງກັບພໍ່ໄດ້ປີປາຍ ພໍ່ກໍພາແມ່ມາຢູ່ວຽງຈັນ. ລູກທຸກຄົນຂອງແມ່ຈຶ່ງເກີດທີ່ວຽງຈັນຫມົດ. ອ້າຍກົກຂອງຂ້ອຍແຕ່ງດອງ ແລະ ອອກເຮືອນໄປແລ້ວ, ກົດມາແມ່ນ ເອື້ອຍພອນ ຊຶ່ງເຮັດການຢູ່ຮ້ານຄ້າເມືອງ, ແລ້ວກໍມາເຖິງຂ້ອຍ ຊຶ່ງພວມຮຽນຢູ່ຫ້ອງມັດທະຍົມສາມ, ຜູ້ຫລ້າເປັນຊາຍ ຊື່ຄໍາ ອາຍຸ ສິບປີ ຍັງຢູ່ໂຮງຮຽນປະຖົມ.



แต้มโดย : ปุ้ย ( 11 ปี )

ແມ່ຈາກໄປໄດ້ໜຶ່ງເດືອນ ແຕ່ຂ້ອຍຮູ້ສຶກວ່າ ມັນດົນປານໜຶ່ງປີ. ແມ່ເຄີຍໄປຢາມພໍ່ເກົ້າຄັ້ງໜຶ່ງ ເມື່ອສິບປີມາແລ້ວ, ຂ້ອຍຈື່ໄດ້ພໍລາງໆວ່າ ແມ່ບໍ່ໄປຢູ່ດົນ.

ຮາວຕາກຜ້າບ່ອນທີ່ແມ່ພາດຜ້າເຊັດໜ້າໄວ້ ເປັນປະຈຳນັ້ນ ມັນຫວ່າງເປົ່າ. ເກີບທີ່ແມ່ໃຊ້ສຳລັບໄປຕະຫລາດ ຫລືໄປບ້ານຄົນເຮືອນໃກ້ນັ້ນ ບໍ່ຢູ່ໃຫ້ເຫັນອີກ, ຟອຍກວາດເຮືອນ ທີ່ແມ່ມັກມ້ຽນໄວ້ແຈຝາ ໂດຍຊັນເບື້ອງກວາດຝຸ່ນຂຶ້ນນັ້ນບໍ່ຢູ່ບ່ອນເກົ່າ, ແມ່ຊັນໄວ້ແບບນັ້ນ ກໍເພື່ອບໍ່ໃຫ້ມັນຫັກ ມັນງໍ, ມີແຕ່ແມ່ເທົ່ານັ້ນຊັນໄວ້ແບບນັ້ນ.

ແມ່ເປັນຄົນສະຫງ່ຽມຈ່ຽມຕົວ, ບໍ່ຟຸມເຟືອຍ, ແມ່ບອກໃຫ້ທຸກຄົນປະຢັດ ເຊັ່ນອອກຈາກຫ້ອງກໍຕ້ອງມອດໄຟ, ຊັກເຄື່ອງກໍຕ້ອງກະຕວງສະບູຝຸ່ນໃສ່ໃຫ້ພໍດີ ຢ່າໃສ່ຫລາຍເກີນໄປ, ກິນນ້ຳກໍຢ່າໃຫ້ມັນເຫລືອຈົນກອກກົ້ນ–ແມ່ກຳກັບນັບຊານຳທຸກຢ່າງ . . . ແຕ່ສິ່ງທີ່ແມ່ປະຕິບັດບໍ່ຄ່ອຍສອດຄ່ອງຕາມຫລັກປະຢັດ ກໍຄືແມ່ຊື້ຜັກຕຳນິນມາເລື້ອຍໆ ເທື່ອລະມັດສອງມັດ, ຈະກິນຫລືບໍ່ກິນ ແມ່ກໍຊື້ມາ ແລະ ປະໃຫ້ເນົ່າກົ້ນ ເປັນດັ່ງນີ້ເລື້ອຍໆມາ.

ຂ້ອຍເອົາມືລູບຄຳຮາວຕາກຜ້າ ບ່ອນທີ່ແມ່ ເຄີຍຕາກຜ້າເຊັດໜ້າໄວ້ ແນມໄປທີ່ປາກປະຕູບ້ານ, ຂ້ອຍເຄີຍເຫັນຈົນລື້ງຕາ : ພາບແມ່ຖືກະຕ່າຂອງກິນຍ່າງເຂົ້າປະຕູບ້ານມາ – ແມ່ກັບຈາກຕະຫລາດດ້ວຍອາການອິດເມື່ອຍ. ຂ້ອຍມັກແລ່ນໄປຮັບເອົາກະຕ່າຈາກມືແມ່ ແລະ ກໍມັກໄດ້ເຂົ້າໜົມກິນ ເປັນປະຈຳສະເໝີ.

" ແມ່ຊື້ຜັກຕຳນິນມາອີກແລ້ວ. ອັນເກົ່າກໍຍັງບໍ່ທັນໄດ້ເຮັດກິນ " ຂ້ອຍເຄີຍທ້ວງດັ່ງນີ້.

ແມ່ບໍ່ປາກ. ມັນອາດເປັນເລື່ອງເລັກນ້ອຍເກີນໄປ ທີ່

ແມ່ຈະມາເສຍເວລາອະທິບາຍ. ຜັກຕຳນິນໜຶ່ງມັດ - ລາຄາບໍ່ເທົ່າໃດກີບ, ຊື້ປະໄວ້ກໍຄົງບໍ່ເສຍຫາຍຫຍັງ - ແມ່ອາດຄິດດັ່ງນີ້.

ພໍ່ກໍເຄີຍຈົ່ມວ່າ : " ຊື້ມາແລ້ວບໍ່ເຫັນເຮັດກິນ, ປະໃຫ້ມັນເນົ່າກົ້ມລ້າງ ".

ແມ່ບໍ່ໂຕ້ຕອບ ເພາະບໍ່ຢາກໃຫ້ເປັນເລື່ອງໃຫຍ່, ຄົງປ່ອຍໃຫ້ມັນຜ່ານໆໄປ. ແຕ່ກ້າແມ່ນເລື່ອງສຳຄັນແລ້ວ ແມ່ບໍ່ຍອມງ່າຍໆ, ແມ່ເວົ້າແມ່ກອງຈົນພໍ່ຕ້ອງອ່ອນສຽງລົງ.

ໂດຍທົ່ວໄປແລ້ວ ພວກເຮົາຜູ້ເປັນລູກ ມັກເຂົ້າຂ້າງແມ່ເກີງວ່າແມ່ຈະມັກລຳໄລນຳບັນຫາເລັກໆນ້ອຍໆ. ແຕ່ຄວາມລຳໄລ ກໍຄືຄວາມຫ່ວງໃຍ ຄືຄວາມໃກ້ຊິດຕິດແທດ. ສຽງຮ້າຍສຽງຈົ່ມຂອງແມ່ ຄືສຽງສະຫວັນ. ຂ້ອຍຄິດວ່າ ໄດ້ຍິນສຽງແມ່ຈົ່ມດີກວ່າບໍ່ໄດ້ຍິນສຽງໃດໆຈາກແມ່ເລີຍ-ເພາະຢ່າງໜ້ອຍມັນໝາຍເກີງພວກເຮົາມີແມ່ - ມີແມ່ແມ່ນມີທຸກສິ່ງທຸກຢ່າງ.

ຂ້ອຍບໍ່ແມ່ນລູກກຳພ້າ, ແຕ່ກໍເຊື່ອວ່າ ການທີ່ຊີວິດຄົນຜູ້ໜຶ່ງບໍ່ເຄີຍໄດ້ຍິນສຽງແມ່ເລີຍນັ້ນ ຊີວິດຄົງອ້າງວ້າງ ປ່ຽວພອຍຄືນົກນ້ອຍປີກບໍ່ແຂງ ແຕ່ກີກລົມແຮງພັດພາກຕົກຈາກຮັງ. ແລ້ວຂ້ອຍກໍພາວະນາໃຫ້ແມ່ກັບຕ່າວມາໄວໆ, ຂໍຢ່າໃຫ້ແມ່ມີໂພຍໄພອັນຕະລາຍໃດໆ.

ຄິດມາຮອດຕອນນີ້ ນ້ຳຕາຂ້ອຍໄຫລຊຶມອອກ, ຂ້ອຍຕັ້ງໃຈເອົາໄວ້ວ່າ ເວລາແມ່ກັບມາແລ້ວນີ້ ຂ້ອຍຈະເຮັດທຸກສິ່ງທຸກຢ່າງທີ່ແມ່ຕ້ອງການ, ຈະປະຕິບັດຕົນໃຫ້ຖືກຕ້ອງຕາມທີ່ແມ່ປາຖະໜາທຸກປະການ, ຈະບໍ່ໃຫ້ແມ່ໄດ້ຈົ່ມໄດ້ວ່າອີກ. ຂ້ອຍຮູ້ສຶກວ່າຕົນເອງເລີ່ມມີນິດໄສປ່ຽນໄປ, ທັດສະນະກໍປ່ຽນໄປ ແລະ ທີ່ສຳຄັນກໍຄືຂ້ອຍຮູ້ສຶກວ່າ ຕົນເອງມີຄວາມຮັບຜິດຊອບສູງຂຶ້ນ. ຂ້ອຍເຮັດຫລາຍສິ່ງຫລາຍຢ່າງແທນແມ່, ຈື່ຈຳເອົາວາດວິທີຕ່າງ ໆ

ຂອງແມ່ ແລ້ວກໍປະຕິບັດຕາມ.

*　　*　　*

ແລ້ວແມ່ກໍສົ່ງຈົດໝາຍມາ, ແມ່ຈ່າໜ້າຊອງເຖິງພໍ່ ແຕ່ຂໍ້ຄວາມໃນຈົດໝາຍແມ່ນສຳລັບທຸກຄົນໃນຄອບຄົວ, ແມ່ບອກວ່າຍັງບໍ່ຮູ້ມື້ຈະຕ່າວຄືນເທື່ອ ເພາະອາການຂອງພໍ່ເຖົ້າ ຍັງບໍ່ດີຂຶ້ນ. ອັນພິເສດກໍຄື ແມ່ສົ່ງຮູບມາໃຫ້ພວກເຮົາເບິ່ງ, ເປັນຮູບຕອນທີ່ແມ່ເປັນເດັກນ້ອຍ ອາຍຸ 7 - 8 ປີ ພວມຂາຍຜັກຢູ່ຕະຫລາດທີ່ປາກເຊ. ແມ່ບອກວ່າ ເຂົາຖ່າຍເພື່ອໂຄສະນາການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການພັດທະນາຕົວເມືອງປາກເຊສະໄໝນັ້ນ ແລະ ບັງເອີນມີແມ່ຕິດຢູ່ໃນຮູບນັ້ນນຳດ້ວຍ.

ແມ່ຂຽນເລົ່າມາວ່າ ຕອນຍັງນ້ອຍແມ່ໃຊ້ເວລາຕອນເລີກໂຮງຮຽນໄປຂາຍຜັກ ທີ່ເກັບຫາມາໄດ້ຕາມສວນຄົວ ຕາມແຄມຮົ້ວ, ມີຜັກຕຳນິນ, ຜັກອີ່ເລີດ, ຜັກຂະ ແລະ ອື່ນໆ... ເມື່ອຂາຍຜັກໄດ້ເງິນແລ້ວ ກໍເກັບໄວ້ຊື້ປຶ້ມອ່ານ, ປຶ້ມຂຽນ, ສໍ,ປາກກາ, ແລະ ສ່ວນໜຶ່ງມອບໃຫ້ແມ່. ຄອບຄົວຂອງແມ່ ຢູ່ໃນສະພາບທຸກຍາກຂາດເຂີນ, ແມ່ຈຶ່ງເຮັດທຸກສິ່ງທຸກຢ່າງ ເພື່ອຊ່ວຍຄອບຄົວ. ແມ່ວ່າ ການຂາຍຜັກກໍແມ່ນໃຊ້ເຈ້ຍໜັງສືພິມປູຕາມພື້ນດິນແຄມທາງຍ່າງເຂົ້າສູ່ຕະຫລາດ ແລ້ວເອົາຜັກທີ່ເຮັດເປັນມັດວາງຢາຍໄວ້, ລາຄາມັດລະຫ້າກີບ ຫລື ສິບກີບ ຕາມແຕ່ຊະນິດຜັກ, ແມ່ວ່າ ຜັກຕຳນິນ ແພງກວ່າຜັກອີ່ເລີດ ແລະ ກໍ່ກວ່າຜັກຂະ, ເມື່ອມີຄົນຍ່າງມາໃກ້ ແມ່ກໍເວົ້າວ່າ : " ຊື້ຊ່ອຍແດ່ຍາແມ່, ຊື້ຊ່ອຍແດ່ເອື້ອຍ ... " ບາງຄົນກໍຕັ້ງໃຈຊື້, ບາງຄົນຊື້ເພາະອີ່ຕົນ ເຊັ່ນ ຜັກມັດສິບກີບ ກໍເອົາເງິນໃຫ້ຮອດ 20-30 ກີບ. ແມ່ດີໃຈທີ່ໄດ້ເງິນເຫລົ່ານີ້ ແລ້ວກໍໝັ່ນຊອກເກັບຜັກຢູ່ຕາມແຄມຮົ້ວໄປຂາຍ ເກືອບທຸກມື້ ຫລັງຈາກເລີກໂຮງຮຽນ.

ແມ່ເລົ່າວ່າ ບາງມື້ ກໍມີຕຳຫລວດມາໄລ່ ເພາະເຂົາບໍ່ຢາກໃຫ້ຂາຍຢູ່ແຄມທາງ ມັນກີດຂວາງຜູ້ຄົນ ທີ່ຍ່າງເຂົ້າສູ່ຕະຫລາດ. ບາງມື້ແມ່ຕ້ອງຫອບຫໍ່ຜັກແລ່ນຫນີ ເພາະກົວຖືກຈັບກໍຕ້ອງໄດ້ເສຍຄ່າປັບໄຫມ, ຖືກຍາມຊວຍ ເງິນບໍ່ໄດ້ແລ້ວຜັກກໍຍັງຊ້ຳ ແລະ ມຸ່ນ ຈົນຂາຍບໍ່ອອກອີກ, ແມ່ຈຶ່ງຮ້ອງໄຫ້ຟາຍນ້ຳຕາກັບຕ່າວຄືນເຮືອນ.

ພວກເຮົາ ອັນມີເອື້ອຍພອນ, ຄຳ ນ້ອງຊາຍຫລ້າ ແລະ ຂ້ອຍເອງ ພາກັນຫຸ້ມເບິ່ງຮູບແມ່ ແລ້ວກໍຕ່າງຄົນຕ່າງເວົ້າ.ບາງຄົນວ່າຕາວຍັງນ້ອຍແມ່ຄືຂ້ອຍ, ບາງຄົນກໍວ່າຄືເອື້ອຍພອນ. ແຕ່ທີ່ແນ່ນອນ ແລະ ປະກົດເດັ່ນກໍຄື ນາງນ້ອຍຫນ້າຕາໄຮ້ດວງສານັ່ງຂາຍຜັກຢູ່ແຄມທາງເຂົ້າສູ່ຕະຫລາດ.

ແມ່ບໍ່ເຄີຍເລົ່າຊີວິດຕອນນີ້ສູ່ພວກລູກຟັງເລີຍ. ແມ່ອາດຄິດວ່າ ມັນບໍ່ສະບາຍອົກສະບາຍໃຈ ທີ່ຈະເລົ່າ, ຫລື ເມື່ອເລົ່າແລ້ວ ແມ່ອາດອົດຮ້ອງໄຫ້ສະອື້ນບໍ່ໄດ້. ຂ້ອຍບໍ່ເຄີຍຄິດວ່າ ແມ່ຈະມີສິ່ງອັດອັ້ນໄວ້ໃນໃຈເຖິງນານປານນີ້.

ຂ້ອຍບໍ່ກິນເຂົ້າແລງ, ມັນບໍ່ຮູ້ສຶກຫິວ, ຂ້ອຍໄປລູບໆຄຳໆສົ້ນເສື້ອແມ່ທີ່ພັບຍອງກັນໄວ້ຢູ່ກ້ານຕູ້ເຄື່ອງນຸ່ງ. ບັນຍາກາດພາຍໃນເຮືອນມິດ ແລະ ເປັນຊອຍວອຍ. ເອື້ອຍພອນນັ່ງຢູ່ງອບໆທີ່ລະບຽງ ເອົາມືຄ້ຳແກ້ມ, ຂ້ອຍເອີ້ນລາວແຕ່ລາວບໍ່ປາກບໍ່ວາກມາຫາ. ຂ້ອຍເຂົ້າໄປໃກ້ໆລາວ.

" ເອື້ອຍເປັນຫຍັງ ? "

" ບໍ່ເປັນຫຍັງ " ລາວຕອບ, ແຕ່ຂ້ອຍສັງເກດວ່າສຽງເອື້ອຍພອນສັ່ນ ໆ.

ແລ້ວທັງເອື້ອຍພອນ ແລະ ຂ້ອຍກໍສະອື້ນໄຫ້ ເພາະຄິດຮອດແມ່.

---

ພິມເທື່ອທຳອິດ, ເດືອນ ກໍລະກົດ, 1990 ໃນ "ແມ່ຍິງລາວ"

ປ່າໃຫ້ກຳເນີດແຫລ່ງນ້ຳ
ຂາດນ້ຳກໍຂາດພົງໄພ.
ຕົ້ນໄມ້ປາຍກຸດ ຄືຄວາມສິ້ນຫວັງ
ແຕ່ເປັນຄວາມສິ້ນຫວັງຂອງຄົນ.



ຮູບໂດຍ : ຈະເລີນໄຊ

ເມືອງງາມເພາະມີດອກໄມ້ບານ

ປ່າງາມເພາະມີນົກບິນຕອມ

ນົກຄືດອກໄມ້ທີ່ບິນໄດ້.



ຮູບໂດຍ : ຈະເລີນໄຊ

# ແຮງເສຍສະຫລະ

ຂີ່ລົດກີບ ລົມພັດມາ ເຢັນສະບາຍ ...

ຂ້າພະເຈົ້າຈົ່ມດັ່ງນີ້ຢູ່ໃນໃຈເປັນປະຈຳ, ແຕ່ແນ່ນອນລະວ່າ ຄວາມສະດວກສະບາຍໃນການຂີ່ລົດກີບຍ່ອມດ້ອຍກວ່າການຂີ່ລົດຈັກຫລືລົດໂອໂຕ - ໂດຍສະເພາະຍາມຝົນຕົກ ແລະ ຍາມແດດຮ້ອນໆ. ເຖິງຢ່າງໃດກໍຕາມ ຫລັງຈາກທີ່ຂີ່ລົດກີບແຂ່ງແດດເຫື່ອຍ້ອຍເຫື່ອຍັ່ງແລ້ວ ບັງເອີນມີລົມພັດມາ ຂ້າພະເຈົ້າກໍເວົ້າກັບຕົນເອງຄືເກົ່າ :

ຂີ່ລົດກີບ ລົມພັດມາ ເຢັນສະບາຍ ...

ເວລາຂີ່ລົດກີບແຂ່ງແດດນັ້ນ ເຖິງວ່າຕົນເອງຈະລຳບາກປານໃດກໍຕາມ ແຕ່ເມື່ອມາເຫັນຄົນຢືນຢູ່ແຄມທາງ ຄອງກ້າລົດແລ້ວ ຂ້າພະເຈົ້າກໍຄຶດຢາກຊວນເຂົາເຈົ້າ ຂຶ້ນຊ້ອນທ້າຍໄປນຳທັງນີ້ເພາະຄິດວ່າຜູ້ທີ່ຢືນຕາກແດດຄອງກ້າຢູ່ແຄມທາງນັ້ນອາດຈະທໍລະມານໃຈກວ່າເຮົາ ຜູ້ທີ່ຂີ່ລົດກີບແຂ່ງແດດຫລາຍຕໍ່. ຂ້າພະ



ແຕ້ມໂດຍ : ກອງມະນີ

ເຈົ້າກໍໄດ້ແຕ່ຄິດເທົ່ານັ້ນ, ບໍ່ກ້າຊວນຜູ້ໃດ ກ້າບໍ່ລົງກັນ ເພາະສະພາບຕົນເອງກໍອັດຕະຄັດຢູ່ແລ້ວ, ກ້າຈະຍືບຍື່ນຄວາມສະດວກສະບາຍໃຫ້ຜູ້ອື່ນ ມັນຄວນຈະຢູ່ໃນສະພາບທີ່ດີກວ່ານີ້ ເຊັ່ນ ຊວນຂີ່ລົດຈັກ ຫລື ລົດໂອໂຕຈະເປັນການເຫມາະສົມກວ່າ.

ແລ້ວວັນຫນຶ່ງ ຂ້າພະເຈົ້າກໍມີຜູ້ຂໍຊ້ອນທ້າຍລົດຖີບນຳໂດຍບໍ່ຄາດຄິດມາກ່ອນ.

" ຈັ່ງໃດເອີຍ ! ບໍ່ເຫັນຕັ້ງດົນ ຂໍໄປນຳແດ່. " ເຂົາຍົກມືສັນຍານໃຫ້ຂ້າພະເຈົ້າຢຸດ ທັງກ່າວທັກທາຍແບບກັນເອງ. ຂ້າພະເຈົ້າງົງ ຄິດບໍ່ອອກວ່າ ເຄີຍພົບພໍ້ກັນຢູ່ໃສ, ແຕ່ໃນເມື່ອເຂົາມາແບບເພື່ອນມິດ ຂ້າພະເຈົ້າກໍຕອບສະຫນອງ ແບບເພື່ອນມິດ. ດັ່ງນີ້ ນ້ຳຫນັກທ້າສິບກວ່າກິໂລ ຈຶ່ງເຕັງລົງທີ່ແຢ່ງລົດຖີບແລ້ວຂ້າພະເຈົ້າກໍໄດ້ອອກແຮງຕື່ມອີກ ເພື່ອໃຫ້ລົດເຄື່ອນໄປ.

" ໄປໄກປານໃດລະນີ້ ? " ຂ້າພະເຈົ້າຖາມ.

" ບໍ່ໄກ, ຍ່ານຫນ້ານີ້ເຮົາກໍລົງດອກ."

" ຄັນໄປໄກ ຊິບໍ່ໄດ້ໄປສົ່ງ ເພາະອີກສອງຫລັກ ກໍຮອດບ້ານເຮົາແລ້ວ."

" ເອີ ... ເຮົາບໍ່ຮອດພຸ້ນດອກ."

ຕະຫລອດທາງ ເຂົາລົມເລື່ອງທີ່ມີນີ້ເປັນຫຍັງຈຶ່ງໄດ້ຍ່າງໄປການ. ເຂົາວ່າຄອບຄົວມີລົດຖີບສອງຄັນ ແຕ່ຄັນຫນຶ່ງເພ, ອີກຄັນຫນຶ່ງ ຊໍາໃຫ້ເມຍໄປແລ່ນວຽກ ເຊັ່ນເອກະສານເດີນທາງເພື່ອໄປຢາມບ້ານ. ນອກນັ້ນ ເຂົາຍັງຍ້ອງວ່າ ລົດຖີບຂ້າພະເຈົ້າແຂງແກ່ນດີ, ຖີບມ່ອນ, ຊ້ອນສະບາຍ... ຂ້າພະເຈົ້າໄດ້ແຕ່ຟັງເປັນສ່ວນໃຫຍ່, ແລະ ຄິດຢູ່ບໍ່ເລີກບໍ່ແລ້ວວ່າ ເຂົາແມ່ນໃຜ ? ຊື່ວ່າຢ່າງໃດ ? ກ້າຈະຖາມ ມັນກໍຮູ້ສຶກມີອັນໃດອັນຫນຶ່ງມາຕັນຮູຄໍໄວ້ ແລະ ຢ້ານເຂົາເວົ້າໃສ່ວ່າ " ຈື່ຫມູ່ຄູ່ກໍບໍ່ໄດ້ຊັ້ນ

ແຮງເສຍສະຫລະ

ບໍ ?" ດັ່ງນີ້ ຂ້າພະເຈົ້າ ຈຶ່ງເຊື່ອເອົາວ່າ ເຂົາກໍຄືຫນຶ່ງໃນບັນດາເພື່ອນມິດໃນອະດີດ. ຄິດດັ່ງນີ້ແລ້ວກໍສະບາຍໃຈ ແລະ ກົບລົດຕໍ່ໄປ ...

ໄປອີກບໍ່ໄກປານໃດ ເຂົາກໍເອົ້າຂຶ້ນວ່າ : " ຮອດແລ້ວຮອດແລ້ວ ! ເຮົາລົງກ່ອນເດີ " ເຂົາລົງໂດຍທີ່ຂ້າພະເຈົ້າບໍ່ຕ້ອງຢຸດລົດ. ຂ້າພະເຈົ້າງວາກຫລັງໄປເບິ່ງຫນ້າເຂົາ ເພາະເປັນໂອກາດສຸດທ້າຍ. ເຂົາກ່າວຂອບໃຈ ແລະ ຍົກມືໃຫ້ ອັນເປັນການສະແດງຄວາມເປັນກັນເອງ. ຂ້າພະເຈົ້າງຶກຫົວຕອບຮັບຄວາມຂອບໃຈຂອງເຂົາ ແລ້ວກໍກົບລົດຕໍ່ໄປ.

ຂ້າພະເຈົ້າຄິດສົງໄສໃນຄວາມຊົງຈຳຂອງຕົນ, ດັ່ງນີ້ຈຶ່ງບໍ່ກ້າຕີລາຄາວ່າ ເຂົາເປັນຄົນແປກຫນ້າ, ແຕ່ເມື່ອມາສົມມຸດວ່າເຂົາເປັນຄົນແປກຫນ້າ ຂ້າພະເຈົ້າກໍບໍ່ເສຍຫາຍຫຍັງ ແກມຍັງດີໃຈຊ້ຳ ເພາະຄິດວ່າຕົນເອງໄດ້ຊ່ອຍຄົນຜູ້ຫນຶ່ງ ທີ່ບໍ່ຮູ້ຈັກມາກ່ອນໃຫ້ໄປເຖິງຈຸດຫມາຍປາຍທາງ ໄດ້ໄວກວ່າການຍ່າງ ຫລື ຢ່າງຫນ້ອຍກໍໃຫ້ເຂົາອິດເມື່ອຍຫນ້ອຍລົງ. ການໃຫ້ຄວາມຊ່ວຍເຫລືອແກ່ເພື່ອນມະນຸດນັ້ນ ເປັນຄວາມສຸກຢ່າງຫນຶ່ງຂອງຄົນ. ແຕ່ຄົນເປັນສັດໂລກທີ່ມີກອດມີອາດ, ການພົວພັນກັນ ຈຶ່ງມີລະບອບແບບແຜນ, ມີມາລະຍາດ ໂດຍສະເພາະຢູ່ໃນຕົວເມືອງ, ມີບາງຄົນຕ້ອງການຄວາມຊ່ວຍເຫລືອ ແຕ່ກໍອົດອຳໄວ້ເພາະຢ້ານເສຍກອດເສຍອາດ, ທັງຢ້ານຄົນອື່ນດູຫມິ່ນ. ມີບາງຄົນຢາກໃຫ້ຄວາມຊ່ວຍເຫລືອ ແຕ່ກໍລັ່ງເລໃຈເພາະຢ້ານວ່າຄົນອື່ນ ຫລືຝ່າຍຮັບຈະເບິ່ງໄປໃນແງ່ບໍ່ດີ - ຊ້ຳບໍ່ຫນຳອາດຈະກາຍເປັນວ່າ ຫມິ່ນປະຫມາດກັນຊ້ຳ. ດັ່ງນີ້ ຄົນຜູ້ຕ້ອງການຄວາມຊ່ວຍເຫລືອ ແລະຄົນຜູ້ຢາກໃຫ້ການຊ່ວຍເຫລືອ ຈຶ່ງບໍ່ຄ່ອຍພົບກັນ ທັງທີ່ເດີນທາງເສັ້ນດຽວກັນ.

ຫລາຍວັນຕໍ່ມາ ຂ້າພະເຈົ້າກັບບ້ານ ທ່າມກາງແສງແດດ ອັນຮ້ອນຮົນຂອງເດືອນພຶດສະພາ, ຕາມທາງເຫັນຊາຍຊະລາຄົນໜຶ່ງຢືນຢູ່ແຄມທາງ, ສາຍຕາລາວແນມເບິ່ງລົດແຕ່ລະຄັນທີ່ຜ່ານໄປດ້ວຍຄວາມຈິດຈໍ່. ເມື່ອຂ້າພະເຈົ້າໄປໃກ້ໆ ກໍໄດ້ສົບແສງຕາກັບລາວ - ມັນເປັນສີໜ້າ ແວວຕາຂອງຄົນທີ່ຕ້ອງການຄວາມຊ່ວຍເຫລືອ. ຂ້າພະເຈົ້າຕັດສິນໃຈຢຸດລົດກິບແລ້ວຖາມຂຶ້ນກ່ອນ.

" ລຸງຊິໄປໃສ ? "

" ເມືອບ້ານຢູ່ສີໄຄພຸ້ນ ".

" ລຸງຊ້ອນທ້າຍລົດກິບໄດ້ຢູ່ຕິ, ຫລານຊິໄປສົ່ງ ".

" ໄດ້ຢູ່, ລຸງຂໍໄປນຳແດ່."

ແລ້ວຂ້າພະເຈົ້າກໍໄດ້ລຸງແປກໜ້າຄົນໜຶ່ງ ນັ່ງຊ້ອນທ້າຍໄປນຳ. ບ້ານລຸງຢູ່ກາຍບ້ານຂ້າພະເຈົ້າໄປອີກໄກ ແຕ່ຂ້າພະເຈົ້າກໍໄປສົ່ງລາວ ຮອດຈຸດໝາຍປາຍທາງ ແລ້ວຈຶ່ງກັບຄືນມາບ້ານຕົນເອງ. ຂ້າພະເຈົ້າຮູ້ສຶກເປັນສຸກຢູ່ໃນໃຈ ແລະ ຈົ່ມອອກມາຄ່ອຍໆວ່າ : ຂີ່ລົດກິບ ລົມພັດມາ ເຢັນສະບາຍ.

ຄັ້ງໜຶ່ງ ຂ້າພະເຈົ້າມີລົດຈັກໄວ້ໃນຄອບຄອງ. ມັນເປັນລົດຈັກຮອນດາ ສີຂຽວ ຊຶ່ງໝູ່ຂອງຂ້າພະເຈົ້າ ນຳມາຝາກໄວ້ ເພາະເຂົາມີວຽກຕ້ອງເດີນທາງໄປປະຕິບັດງານຢູ່ທ້ອງຖິ່ນ. ເຂົາເປັນໂສດ ແລະ ພັກຢູ່ຫໍພັກຂອງພະນັກງານ. ເຂົາບອກວ່າ ໄລຍະ ທີ່ເຂົາບໍ່ຢູ່ນີ້ ຂ້າພະເຈົ້າມີສິດໃຊ້ລົດຕາມສະບາຍ. ດັ່ງນີ້ ຂ້າພະເຈົ້າຈຶ່ງໃຊ້ມັນເປັນພາຫະນະໄປການເກືອບທຸກວັນ, ແຕ່ໃຊ້ຢ່າງລະມັດລະວັງ ເພື່ອບໍ່ໃຫ້ເກີດການເສຍຫາຍ ຫລືເປ່ເພ. ຕະຫລອດເວລາສອງອາທິດ ທີ່ລົດຈັກຢູ່ນຳນັ້ນ ກໍເກີດມີກໍລະນີເປັນຕາໜ້າຫົວ ຍ້ອນຄວາມບໍ່ຮອບຄອບຂອງຂ້າພະເຈົ້າ, ເວົ້າອີກຢ່າງ ກໍແມ່ນຍ້ອນຕົນເອງເສືອກບໍ່ເຂົ້າເລື່ອງ :

ແມ່ຍິງຄົນນັ້ນຢູ່ໃນໄວສາມສິບກວ່າ, ອາດຈະແກ່ກວ່າຂ້າພະເຈົ້າສີ່ຫລືຫ້າປີ, ນາງຢືນຕາກແດດຄອຍກ້າລົດ. ຂ້າພະເຈົ້າເຫັນວ່ານາງຍົກມືໃຫ້ລົດຢຸດ, ທຳອິດຄິດວ່ານາງຍົກມືໃສ່ຂ້າພະເຈົ້າ, ແຕ່ຂະນະດຽວກັນ ກໍມີລົດຕັກຊີຄັນໜຶ່ງແລ່ນມາແລ້ວກາຍໄປເລີຍ ເພາະມີຄົນໂດຍສານເຕັມລົດແລ້ວ. ເມື່ອເປັນດັ່ງນັ້ນຂ້າພະເຈົ້າຈຶ່ງຢຸດລົດໃກ້ງກັບນາງ ແລະ ຖາມຂຶ້ນ :

" ລົດຕັກຊີມັນເຕັມແລ້ວ ຈຶ່ງບໍ່ຢຸດ. ໄປບໍ່ ? ຂ້ອຍຊິໄປສົ່ງ."

" ເລື່ອງອີ່ຫຍັງຂ້ອຍຊິໄປຂີ່ລົດຈັກນຳເຈົ້າ ! " ນາງເຮັດສຽງແຂງ.

" ບໍ່ໃຫ້ຈ້າງດອກ, ຊິໄປສົ່ງຊື່ໆ " ຂ້ອຍວ່າດ້ວຍຄວາມບໍລິສຸດໃຈ.

" ບໍ່ວ່າແຕ່ໃຫ້ຂີ່ລ້າ, ຈ້າງໃຫ້ຂີ່ຍັງບໍ່ຂີ່ນ່າ."

" ເຫັນໃຈເຈົ້າທີ່ຕາກແດດ, ຫວັງດີນຳຊື່ໆດອກ."

" ຂອບໃຈໃນຄວາມຫວັງດີ. ແຕ່ຢ່າຫວັງລວຍເດີ້ !"

ຂ້າພະເຈົ້າບໍ່ຕໍ່ຄວາມຍາກ ເລີຍຂີ່ລົດໜີຈາກໄປ ທັງບໍ່ຍອມຫລຽວຫລັງໃຫ້ນາງເຫັນໜ້າອີກ ເພາະຮູ້ວ່າ ຕົນເອງກໍກເບິ່ງໃນແງ່ບໍ່ດີ. ຂ້າພະເຈົ້າບໍ່ຢາກປະນາມ ຜູ້ຍິງຄົນນັ້ນດອກ ເພາະນາງເຮັດຖືກແລ້ວ ທີ່ປະຕິເສດການຂີ່ລົດນຳຄົນແປກໜ້າ. ນາງເປັນຄົນຮອບຄອບ, ມີສະຕິລະວັງຕົວ. ແມ່ຍິງທີ່ມີຄຸນສົມບັດບໍ່ແມ່ນຈະໄປຂີ່ລົດນຳຄົນອື່ນ ໂດຍບໍ່ເລືອກໜ້າ. ຂະນະຂີ່ລົດໄປຂ້າພະເຈົ້າກໍທົບທວນປະໂຫຍກຄຳເວົ້າ ຂອງນາງຢູ່ໃນໃຈໄປຕະຫລອດທາງ :

" ຢ່າຫວັງລວຍເດີ້ ! ຢ່າຫວັງລວຍເດີ້ ! ... "

ຂ້າພະເຈົ້າບໍ່ຄິດຄຽດຂົມດອກ ທີ່ຕົນເອງກໍກເບິ່ງໃນແງ່ບໍ່

ດີ, ແຕ່ກໍອຶດຫິວໄປຕະຫລອດທາງ, ໝາຍຄວາມວ່າຫິວຢູ່ໃນໃຈ ທິວຂວັນຕົນເອງທັ້ນລະ !

ແຕ່ຂ້າພະເຈົ້າ ກໍບໍ່ຍອມທໍ້ຖອຍ ໃນເມື່ອຄິດວ່າ ຕົນເອງ ຢາກເຮັດແນວທີ່ບໍລິສຸດປອດໃສ. ເມື່ອຄັ້ງທຳອິດບໍ່ໄດ້ຜົນ, ຂ້າພະເຈົ້າກໍທົດລອງຊໍ້າສອງອີກ ເພື່ອຈະສະຫລຸບຜົນວ່າ ເປັນແນວໃດແລ້ວ ຈະບໍ່ໄດ້ເຮັດອີກ ຖ້າບໍ່ເປັນຜົນດີ.

ເຊົ້າວັນໜຶ່ງ, ຂ້າພະເຈົ້າໄປການຕາມປົກກະຕິ, ຂີ່ລົດຈັກໄປຮອດຄຸ້ມທິວເມືອງ ກໍເຫັນຍິງສາວຄົນໜຶ່ງ ຢືນຢູ່ແຄມທາງມືຖືປີ່ນໂຕ. ຂ້າພະເຈົ້າ ຜ່ອນຄວາມໄວລົງ ບໍ່ເລັ່ງນໍ້າມັນຈັກໜ່ອຍ, ຄາວໜຶ່ງຈັກລົດກໍມອດລົງ ແລະ ໄປຢຸດຢູ່ໃກ້ໆ ຍິງຄົນນັ້ນ. ຂ້າພະເຈົ້າລົງລົດ ແລ້ວທຳທ່າແປງບ່ອນນັ້ນບ່ອນນີ້ຢູ່ດົນເຕີບ, ຕໍ່ມາກໍທົດລອງຕິດຈັກ - ມັນຕິດໄດ້ບາດດຽວໂລດ ! ຂ້າພະເຈົ້າຢາກໄປຫາຍິງຄົນນັ້ນ. ນາງມີທ່າທາງ ກະວົນກະວາຍ, ຄືງຮ້ອນໃຈຢາກໄປໃຫ້ເຖິງຈຸດໝາຍປາຍທາງ ແຫ່ງໃດແຫ່ງໜຶ່ງ.

" ນ້ອງຖ້າຄົນມາຮັບບໍ ? " ຂ້າພະເຈົ້າຖາມ.

" ເອີ ... ອາ ນ້ອງຖ້າລົດຕັກຊີ." ນາງເວົ້າກະຕຸກກະຕັກ.

" ຄັນຟ້າວ ອ້າຍຊິໄປສົ່ງ."

" ກໍາຟ້າວແດ່ ເພາະນ້ອງຮີບເອົາເຄື່ອງກິນໄປສົ່ງແມ່ຢູ່ໂຮງໝໍ."

" ເຊີນຕີ, ອ້າຍຊິໄປສົ່ງ."

ນາງສະແດງຄວາມຍິນດີ ແລະ ຂອບໃຈທີ່ຂ້າພະເຈົ້າຍື່ນມືເຂົ້າໄປຊ່ວຍ. ຂ້າພະເຈົ້າໄປສົ່ງນາງທີ່ປາກທາງເຂົ້າໂຮງໝໍມະໂຫສົດ. ນາງລົງລົດ ກ່າວຂອບໃຈອີກເທື່ອໜຶ່ງ ແລ້ວພວກ

ເຮົາ ກໍຈາກກັນໄປຄົນລະທາງ. ຂ້າພະເຈົ້າມຸ່ງຫນ້າໄປອີກບໍ່ໄກ ກໍຮອດໂຮງການ ແລະ ມີເວລາເຫລືອຢູ່ຫ້ານາທີ ຈຶ່ງຮອດເວລາເຂົ້າການ.

ເວລາຜ່ານໄປສອງອາທິດ, ຫມູ່ຂອງຂ້າພະເຈົ້າກໍມານໍາເອົາລົດຈັກຄືນ. ລົດຢູ່ໃນສະພາບແລ່ນໄດ້ດີຄືດັ່ງຕອນທີ່ຫມໍເອົາມາຝາກໄວ້ທໍາອິດ. ຫມໍບອກວ່າ ເວລາໃດມີວຽກຈໍາເປັນຕ້ອງໃຊ້ກໍໃຫ້ບອກ, ຫມໍຍິນດີຈະໃຫ້ຢືມ. ທັງສອງເຮົາເປັນຫມູ່ຄູ່ທີ່ຮັກແພງກັນມາແຕ່ຕອນຮຽນຢູ່ໂຮງຮຽນອຸດົມ.

ຂ້າພະເຈົ້າຄືນມາຂີ່ລົດກິບ ເປັນປະຈໍາທຸກມື້, ບໍ່ວ່າໄປວຽກສ່ວນຕົວ ຫລືໄປການ. ບາງຄັ້ງເຫັນຜູ້ເຖົ້າຜູ້ແກ່ຍືນຢູ່ແຄມທາງ ຂ້າພະເຈົ້າກໍຊວນຊ້ອນທ້າຍໄປນໍາ ຖ້າແມ່ນຈຸດຫມາຍບໍ່ໄກ ແລະ ຜ່ານໄປຕາມເສັ້ນທາງດຽວກັນ, ບາງຄົນກໍປະຕິເສດ - ອາດເນື່ອງມາຈາກຄວາມບໍ່ສະດວກບາງປະການ ໃນການຊ້ອນທ້າຍລົດກິບ. ແຕ່ສິ່ງທີ່ຂ້າພະເຈົ້າບໍ່ເຮັດອີກ ກໍຄືຊວນແມ່ຍິງທີ່ບໍ່ລື້ງເຄີຍກັນຂຶ້ນຊ້ອນທ້າຍ ຖ້າວ່າບໍ່ໄດ້ຮັບການຂໍຮ້ອງກ່ອນ.

## *ບົດນ້ອຍທ້າຍ* ( epilogue )

ມັນເປັນແລງວັນເສົາ, ຂ້າພະເຈົ້າໄປຢ້ຽມຢາມຫລານທີ່ປ່ວຍເປັນພະຍາດໄຂ້ເລືອດອອກ ຢູ່ໂຮງພະຍາບານ. ຂະນະນີ້ເປັນເດືອນທີສາມແລ້ວ ທີ່ພະຍາດໄຂ້ເລືອດອອກລະບາດ ໃນກໍາແພງນະຄອນວຽງຈັນ. ນັບເປັນຄັ້ງຮ້າຍແຮງທີ່ສຸດ ເທົ່າທີ່ເຄີຍເປັນມາ, ມັນເລີ່ມຕົ້ນແຕ່ເດືອນພຶດສະພາ 1987 ແລະເກີດຂຶ້ນໃນຫລາຍແຫ່ງຂອງປະເທດ, ແພດ ໄດ້ແນະນໍາຫລາຍຢ່າງກ່ຽວກັບວິທີປ້ອງກັນ ແລະ ປິ່ນປົວ, ວິທີຫນຶ່ງກໍແມ່ນ ໃຫ້ເດັກນ້ອຍກິນ

ຫມາກໄມ້ຫລາຍໆ ເຊັ່ນ ນ້ຳຫມາກພ້າວ, ນ້ຳຫມາກຫນາວ, ຫມາກກ້ອງ ແລະ ອື່ນໆ ...

ຢູ່ຂ້າງຕຶກປິ່ນປົວເດັກນ້ອຍ ມີຄົນຢືນຈຸ້ມກັນຢູ່. ບາງຄົນມາຕິດຕາມເບິ່ງລູກເບິ່ງຫລານ ຫລື ນຳສິ່ງຂອງຈຳເປັນມາໃຫ້ຜູ້ປ່ວຍ. ມີສຽງໂສເຫລັກັນ, ການກັນເລື່ອງຢາພື້ນເມືອງ, ການຫາຮ້ານຂາຍຢາ, ເລື່ອງພາຫະນະໄປມາ ...

" ລູກຂ້ອຍ ຄັນໄດ້ມາໂຮງຫມໍໄວ ກໍຄືຊິບໍ່ອາການຫນັກຈັ່ງຊີ, ຍາກນຳບໍ່ມີລົດລາ, ມັນເລີ່ມຄິງຮ້ອນແຕ່ຕອນແລງ ຈົນມື້ຕໍ່ມາ ຈຶ່ງໄດ້ມາໂຮງຫມໍ. " ຄົນຫນຶ່ງຈົ່ມດ້ວຍນ້ຳສຽງມີຄວາມກັງວົນ.

" ລູກຂ້ອຍພໍແຕ່ຄິງອຸ່ນຜິດປົກກະຕິ ກໍຟ້າວເອົາມາໂລດ, ໄກແດ່ແຕ່ຄົນເຮືອນໃກ້ມີລົດໃຫຍ່ - ລາວບອກໄວ້ກ່ອນວ່າ ຄັນເດັກນ້ອຍເຈັບເປັນແລ້ວຮີບໄປເອີ້ນເອົາໂລດ, ລາວພາມາແຕ່ຄືນນີ້. ຢູ່ຄຸ້ມຂ້ອຍໃຜກໍແລ່ນໄປຫາແຕ່ລາວທັ້ນລະ, ລາວຊ່ອຍບໍລິການສິ່ງໂຮງຫມໍຢູ່ເລື້ອຍໆ." ຜູ້ຫນຶ່ງເວົ້າຈ້ອຍຈ້ອຍ.

"... ຂ້ອຍຫວະ ເອີວ່າຊິມາເອົາເລືອດອອກໃຫ້ຫລານ ແຕ່ເລືອດບໍ່ແມ່ນກຸ່ມດຽວກັນ ກໍເລີຍບໍລິຈາກໃຫ້ເດັກນ້ອຍ ຢູ່ຕຽງຂ້າງທັ້ນສາ ... ມີແຕ່ຜູ້ຕ້ອງການເລືອດ, ໂອຍຈັ່ງແມ່ນຂ້ອຍຢາກມີເລືອດຫລາຍໆ ຊິບໍລິຈາກໃຫ້ມັນໄຄວ່ພຸ້ນລະ ... " ອີກຜູ້ຫນຶ່ງຕອບຄຳການຂອງຫມູ່ດັງມາເຂົ້າຫູຂ້າພະເຈົ້າ.

ແລະ ມີສຽງຜູ້ຍິງດັງຂຶ້ນວ່າ : " ຂ້ອຍເອງກໍຍາກນຳເລື່ອງລົດລາ ພາຫະນະ, ຈ້າງແຕ່ຕັກຊີຫລາຍ ກໍບໍ່ໄຫວ, ລູກກໍເຈັບພາບກັນສອງຄົນ. ມື້ກ່ອນລູກສາວກົກຊິເອົາເຂົ້າມາສົ່ງແມ່, ມັນຢືນກ້າລົດຕັກຊີຕັ້ງດົນ, ພໍດີ ມີລົດຈັກຄັນຫນຶ່ງມາຈອດ ແລ້ວຜູ້ຂີ່ກໍຂັນອາສາ ມາສົ່ງຈຶ່ງໄດ້ມາຮອດ. ມີຄົນໃຈບຸນ ຈັ່ງຊີ້ກໍ

ໄກແດ່ ..."

ຂ້າພະເຈົ້າບໍ່ຢາກເຊື່ອດອກວ່າ ຜູ້ທີ່ຂັບຂີ່ລົດຈັກຄັນນັ້ນແມ່ນຂ້າພະເຈົ້າເອງ ເພາະເຫດການ ມັນຜ່ານມາຫລາຍເດືອນແລ້ວ, ຫລືບາງທີຍິງຄົນນັ້ນຢາກມີເລື່ອງສົນທະນານຳໝູ່ ກໍເລີຍຍົກເລື່ອງເກົ່າ ມາເລົ່າໃໝ່, ເຮັດຄືວ່າ ມັນເກີດຂຶ້ນມື້ກ່ອນ ມື້ວານ. ບໍ່... ຂ້າພະເຈົ້າບໍ່ເຊື່ອຕາມທີ່ຕົນເອງຄິດດອກ, ແນວໃດມັນກໍຕ້ອງມີຜູ້ໃດຜູ້ໜຶ່ງຂັບອາສາມາສົ່ງລູກສາວຂອງລາວ.

ຄິດດັ່ງນີ້ແລ້ວ ຂ້າພະເຈົ້າຍິ່ງເປັນສຸກຢູ່ໃນໃຈ. ການໄດ້ຍິນໄດ້ຟັງ ເລື່ອງຄົນທີ່ມີນ້ຳໃຈ ເສຍສະຫລະນັ້ນ ພາໃຫ້ຮູ້ສຶກສະບາຍໃຈ, ດັ່ງນີ້ ເມື່ອຂີ່ລົດກັບ ເກືອງວ່າລືມບໍ່ພົດ ມັນກໍຮູ້ສຶກເຢັນສະບາຍໃນຫົວໃຈ.

---

ພິມເທື່ອທຳອິດ, ປີ 1988 ໃນໂຮມເລື່ອງສັ້ນ " ແຮງໃຈ ".

# ຊອງຈາກທົ່ງໄຫຫີນ

ຊອງຈົດຫມາຍສະບັບນີ້ ກໍຖືກສົ່ງມາຫາຂ້ອຍຈາກທົ່ງໄຫຫີນ, ເມື່ອຈົກເບິ່ງ ກໍພົບເນື້ອຄວາມຂຽນຢ່າງບັນຈົງ ເຕັມຫລາຍຫນ້າເຈ້ຍ, ແຕ່ບໍ່ແມ່ນຂຽນຫາຂ້ອຍ. ໃນຊອງຍັງມີເຈ້ຍນ້ອຍອີກແຜ່ນຫນຶ່ງ ຊຶ່ງມີຂໍ້ຄວາມວ່າ :

*ຂໍໃຫ້ອ້າຍເອົາຈົດຫມາຍນີ້ລົງໃນຫນັງສືພິມໃຫ້ແດ່ ເພື່ອວ່າຜູ້ຮັບຊຶ່ງເປັນຄົນຮັກແພງກັບນ້ອງ ຈະໄດ້ອ່ານໃນວັນໃດວັນຫນຶ່ງ. ນ້ອງບໍ່ຮູ້ບ່ອນຢູ່ຂອງເຂົາ ເພາະຫລັງຈາກທີ່ເຂົາຕ່າວຄືນເມືອສະຫະລັດອາເມລິກາໄດ້ບໍ່ດົນ ນ້ອງກໍ່ໄດ້ຕ່າວຄືນທົ່ງໄປຫີນ. ຈອນນີ້ເປັນອາສາສະຫມັກອາເມລິກາຂອງອົງການ ໄອ. ວີ. ແອສ.* ຫລັງຈາກທີ່ໄດ້ມາຕິດແທດກັບປະຊາຊົນລາວ ຈອນນີ້ ກໍກາຍເປັນນັກຕ້ານສົງຄາມຂອງອາເມລິກາ ໃນອິນດູຈີນ, ເຂົາຂຽນບົດຄົ້ນຄວ້າ ການທີ່ອາເມລິກາເຂົ້າມາລາວ ແລ້ວສະຫລູບວ່າ ອາເມລິກາ ຕ້ອງອອກຈາກລາວເດັດຂາດ. ເຂົາສົ່ງບົດຄົ້ນຄວ້າດັ່ງກ່າວ*

---

* ໄອ. ວີ. ແອສ. - International Voluntary Service. ອົງການອາສາສະຫມັກສາກົນ.



ແຕ້ມໂດຍ : ທອງມະນີ

*ໃຫ້ລັດຖະບານອາເມລິກາ ແລະສະພາຄອງແກຣສ ນຳໄປສຶກສາ ເພື່ອກຳໜົດນະໂຍບາຍຕ່າງປະເທດຂອງອາເມລິກາຕໍ່ໄປ.*

*ນ້ອງເຊື່ອວ່າຈົດໝາຍນີ້ ຈະໄດ້ຮັບການຕີພິມ ແລະ ສົ່ງໄປຍັງສະຫະລັດອາເມລິກາ ເພາະໜັງສືພິມຂອງອ້າຍ ໄດ້ຮັບການແປເປັນພາສາຝະລັ່ງ ແລະ ອັງກິດທຸກສະບັບ.*

*ຈາກໄມແດງ*

ຂໍ້ຄວາມໃນເຈ້ຍນ້ອຍ ເຮັດໃຫ້ຂ້ອຍຄິດພໍ້ ຊາຍໜຸ່ມຄົນໜຶ່ງ ຊຶ່ງເປັນ " ຊາວອົບພະຍົບ " ເຮົາພົບພໍ້ກັນໃນຖາວທີ່ມີການຈັດສົ່ງ " ຊາວອົບພະຍົບ " ຕ່າວຄືນເມືອບ້ານເດີມ ພາຍຫລັງສົງຄາມ. ຂ້ອຍເປັນນັກຂ່າວຄົນໜຶ່ງ ທີ່ໄດ້ເດີນທາງໄປຕິດຕາມການສົ່ງ " ຊາວອົບພະຍົບ " ຊຸດທຳອິດ ໂດຍທາງເຮືອບິນ ທີ່ໂພນສະຫວັນ ແລະ ໃນໂອກາດນີ້ ໄດ້ສຳພາດໄມແດງກ່ຽວກັບຄວາມຮູ້ສຶກນຶກຄິດທີ່ໄດ້ຕ່າວຄືນບ້ານເກີດ ເມືອງນອນ.

ໄມແດງກ່າວວ່າ :"ເຂົາພ້ອມດ້ວຍພໍ່ແມ່ ແລະ ນ້ອງ ໆ ກໍ່ຖືກບັງຄັບໃຫ້ອອກຈາກທົ່ງໄຫຫີນ ໃນປີ 1970 ແລ້ວກໍ່ຖືກນຳໄປຢູ່ສູນ " ອົບພະຍົບ " ເກືອບຫ້າປີ ທີ່ບ້ານອີ່ໄລ ໄກຈາກວຽງຈັນປະມານ 25 ຫລັກ. ການໄດ້ຕ່າວຄືນມາບ້ານເກີດ ເທື່ອນີ້ແສນດີໃຈທີ່ສຸດ ບໍ່ມີຫຍັງປຽບໄດ້, ມັນຕື້ນຕັນໃຈຈົນນ້ຳຕາໄຫລ ແລະ ຄິດວ່າ ຊີວິດໄດ້ເລີ່ມຕົ້ນໃໝ່ແລ້ວ".

ເນື້ອໃນຈົດໝາຍ ມີດັ່ງນີ້ :

*ຮັກແພງ ຈອນນີ່,*

*ເຮົາຂຽນຈົດໝາຍນີ້ຈາກທົ່ງໄຫຫີນ, ອະດີດສະໜໍລະພູມເລືອດ ຂໍສົ່ງຂ່າວມາຫາເພື່ອນ ດ້ວຍຄວາມຄິດຮອດຄິດເຖິງ. ເຮົາຕ່າວຄືນບ້ານເດີມພ້ອມກັບຊາວອົບພະຍົບຊຸດທຳອິດ ຄື ລຸນຫລັງທີ່ໂຕກັບເມືອສະຫະລັດອາເມລິກາບໍ່ທັນດົນ.*

ມັນເປັນເຫດການຕື່ນເຕັ້ນ ປົນເສົ້າສະຫລົດໃຈທີ່ໄດ້ຕ່າວຄືນບ້ານເກີດເມືອງນອນ ຫລັງຈາກໄດ້ພັດພາກ ໄປເປັນເວລາຫລາຍປີ, ເຮົາຫລັ່ງນ້ຳຕາອອກມາເມື່ອພາບທົ່ງໄຫຫີນປະກົດຕົວຢູ່ຕໍ່ໜ້າ - ມັນອ້າງວ້າງເປົ່າປ່ຽວ, ຫລຽວໄປທາງໃດເຫັນແຕ່ຊາກສະຫລັກຫັກພັງ, ມີແຕ່ຂຸມລະເບີດ, ຕົ້ນໄມ້ປາຍກຸດສີດຳຢືນຢູ່ຢ່າງໂດດດ່ຽວ ຕາມຈ້າຍພູ ເປັນສັນຍາລັກຂອງຄວາມເປົ່າປ່ຽວ, ງຽບສະຫງັດ. ນອກຈາກນົກແອ່ນບິນເຈີດໄປມາຢູ່ກາງອາກາດທ່າມກາງສາຍລົມແລ້ວ ບໍ່ປະກົດສິ່ງມີຊີວິດໃດໆ. ສຸດສາຍຕາ ເປັນທົ່ງຫຍ້າ ສີຂຽວ ໂອນເອນເປັນຄື້ນຄືທະເລ ເມື່ອກົກລົມພັດຕ້ອງ. ຄື້ນສີຂຽວນີ້ ຈະງົດງາມທີ່ສຸດ ຖ້າບໍ່ມີຈຸດດ່າງດາວເດຍລະດາດໄປທົ່ວ. ຈຸດດ່າງດາວນີ້ກໍ່ຄືຂຸມລະເບີດຈາກຍົນໂດຍສະເພາະຍົນເບ - 52 ທີ່ເອົາທົ່ງໄຫຫີນເປັນເປົ້າໝາຍ, ແລ້ວກອກເທລະເບີດລົງຢ່າງນັບບໍ່ຖ້ວນ ໃນທ້ອງປີ 1970 ເປັນຕົ້ນມາ. ບໍ່ແມ່ນແຕ່ມະນຸດເທົ່ານັ້ນທີ່ຢູ່ບໍ່ໄດ້, ສັດສາວາສິ່ງກໍມອດມ້ວຍມໍລະນາ ເຫລືອແຕ່ຟ້າກັບດິນ, ປະຊາຊົນທີ່ອາໄສຢູ່ໃນແຖບນີ້ກໍ່ກວາດຕ້ອນຈາກຈຸດໜຶ່ງໄປຍັງຈຸດໜຶ່ງ ແລ້ວກໍ່ຕໍ່ໄປເລື້ອຍໆ ປະຊາຊົນບໍ່ມີໂອກາດໄດ້ຕັດສິນໂຊກຊາຕາຕົນເອງ, ມີແຕ່ຄວາມລະທົມຂົມຂື່ນ, ຄວາມທຸກຍາກກັນດານ.

ເຮົາຢືນຊື່ງ, ແນມເບິ່ງທົ່ງໄຫຫີນ ດ້ວຍຄວາມສະທ້ອນອ່ອນໃຈ. ພາບທຸກສິ່ງທຸກຢ່າງ ມັນໜ້າເສົ້າສະຫລົດ ທິດທູ່ໃຈ, ມີແຕ່ຜູ້ໃຈດຳອຳມະຫິດເທົ່ານັ້ນ ທີ່ຈະທົນເບິ່ງໄດ້ ໂດຍບໍ່ມີອາລົມອ່ອນໄຫວ.

ຈອນນີ້ ເພື່ອນຮັກ... ສົງຄາມ ໄດ້ຍຸຕິລົງແລ້ວກໍຈິງຢູ່, ແຕ່ຄວາມໂຫດຮ້າຍຂອງມັນຍັງແຜ່ກະຈາຍຢູ່ທົ່ວ. ລູກລະເບີດທີ່ບໍ່ທັນແຕກຍັງຝັງຢູ່ຕາມທົ່ງໄຫຫີນ, ມີຫລາຍຊະນິດດ້ວຍກັນ ແລະ

ທີ່ຫລາຍກວ່າໝູ່ແມ່ນບົມບີ. ພຽງແຕ່ສອງມື້ທີ່ພວກເຮົາມາຮອດທົ່ງໄຫຫີນ ບົມບີກໍໄດ້ປິດຊີວິດໄປເກືອງສາມຄົນ, ຈະເຄື່ອນໄຫວໄປທາງໃດ ຕ້ອງລະວັງ, ຄວາມຕາຍຄອຍກ້ຳເຮົາຢູ່ທຸກແຫ່ງ, ກຶກຜູ້ໃດແລ້ວ ບໍ່ຕາຍກໍເສຍອົງຄະ.

ລະເບີດໄດ້ແຜ່ຄວາມສະທ້ານຢ້ານກົວ ໄປທຸກຍ່ອມຫຍ້າ, ມັນແຕກບຶ້ມຂຶ້ນ ! ແລ້ວກໍມີຄວາມຕາຍ, ຄວາມເຈັບປວດຕິດຕາມມາ.

ທ່າມກາງອັນຕະລາຍຮອບດ້ານ, ເຮົາ ແລະ ພໍ່ແມ່ອ້າຍນ້ອງ ປັກຫລັກແຫລ່ງຢູ່ທົ່ງໄຫຫີນ, ຈະໄປທາງໃດກໍໄດ້ລະມັດລະວັງ. ພວກເຮົາພາກັນປຸກເຮືອນຕູບຢູ່ອາໄສພໍຊາມຊາ, ບຸກເບີກທີ່ດິນ ເຮັດຮົ້ວເຮັດສວນຫາກຸ້ມຕົນເອງ, ບາງເທື່ອກໍໄດ້ຮັບຂອງຊ່ວຍເຫລືອຈາກມິດປະເທດ.

ຫວ່າງຈາກວຽກງານ ເຮົາກໍໄປເລາະເບິ່ງໄຫຫີນ ທີ່ຢູ່ເປັນກະແຈກກະຈາຍ ໃນບໍລິເວນທົ່ງອັນກວ້າງສຸດສາຍຕາ, ໄຫຫີນເປັນສີມືຂອງມະນຸດ ໃນສະໄໝກ່ອນປະຫວັດສາດ, ເປັນສິ່ງມະຫັດສະຈັນ ຂອງໂລກຊະນິດໜຶ່ງ, ຈຳນວນບໍ່ໜ້ອຍໄດ້ກຶກທຳລາຍໂດຍສະເພາະຈາກການກຸ້ມລະເບີດ. ຂຸມລະເບີດແຕ່ລະຂຸມນັ້ນກວ້າງປະມານ 10 - 20 ແມັດ, ເລິກປະມານ 5 - 6 ແມັດ, ຫລາຍຂຸມມີນ້ຳເຕັມ, ທຳອິດທີ່ໄປຮອດນັ້ນ ເຮົາວ່າຂຸມຄົງບໍ່ເລິກ ຈຶ່ງໂດນລົງເພື່ອອາບນ້ຳ ແຕ່ແລ້ວ ກໍເກືອບເອົາຊີວິດໄປກົ້ມໃນຂຸມລະເບີດນີ້. ເຮົາກຳລັງຊິຈົມນ້ຳ, ບັງເອີນມີຜູ້ມາພົບເຂົ້າຈຶ່ງຊ່ວຍຊີວິດໄວ້. ເຮົາພົ້ນຄວາມຕາຍມາໄດ້, ແຕ່ຕໍ່ມາບໍ່ດົນ ອະນາຄົດຂອງເຮົາກໍດັບວູບລົງອີກ ເຮົາຕ້ອງພົບກັບຄວາມເສຍໃຈທີ່ສຸດໃນຊີວິດ ແລະ ຄິດວ່າຕົນເອງໄດ້ຕາຍໄປແລ້ວເຄິ່ງໜຶ່ງ, ມັນທໍລະມານໃຈ ທໍລະມານກາຍຢ່າງເຫລືອທີ່ສຸດ.

ຈອນນີ້ ... ເຮົາບອກແລ້ວວ່າ ເຮົາກັບສະມາຊິກຄອບຄົວຕ້ອງບຸກເບີກດິນດອນຕອນໜ້າ ເພື່ອທຳການປູກຝັງຫາກຸ້ມຕົນເອງ. ມື້ໜຶ່ງເຮົາແບກຈົກໄປຂຸດໜານປູກມັນ, ຂຸດໄປໄດ້ປະມານຊົ່ວໂມງກວ່າແລ້ວກໍເກີດລະເບີດຂຶ້ນ, ມັນເປັນບົມບີທີ່ເຫລືອຢູ່ຕາມພື້ນດິນ, ເຮົາໝົດສະຕິໄປ ແລະ ມາຮູ້ເມື່ອຄືງ ກໍພົບວ່າຕົນເອງ ຢູ່ໂຮງພະຍາບານ ແຂນຂາພັນດ້ວຍຜ້າພັນບາດຈົນເຮົາເໜັງຕິງບໍ່ໄດ້. ເຮົາມາຮູ້ພາຍຫລັງວ່າ ຂາສອງເບື້ອງຖືກຕັດຂາດ. ສ່ວນແຂນຊ້າຍກໍໄດ້ຮັບບາດເຈັບ ແຕ່ບໍ່ສາຫັດ, ນ້ອງເຮົາຜູ້ໜຶ່ງກໍໄດ້ຮັບບາດເຈັບທີ່ຂາຊ້າຍ ແຕ່ບໍ່ສາຫັດ ຈຶ່ງໄດ້ກັບໄປບ້ານແລ້ວ. ເມື່ອຮູ້ວ່າຕົນເອງເສຍອົງຄະ, ອະນາຄົດມືດມົນດັ່ງນີ້ ເຮົາຮ້ອງໄຫ້ສະອື້ນ, ນ້ຳຕາໄຫລບໍ່ມີຍາມເຊົາ ຕະຫລອດເວລາທີ່ຢູ່ໂຮງພະຍາບານ.

ຈອນນີ້ ... ເຮົາເປັນຄົນເສຍອົງຄະ ເປັນຄົນທີ່ຕາຍແລ້ວ ກໍວ່າໄດ້, ຄືຕາຍໄປຈາກອະນາຄົດ ອັນແຈ່ມໃສ, ເປັນສິບທີ່ເຄື່ອນໄຫວໄປມາໄດ້, ຄິດເຫັນຕົນເອງຍາມໃດແລ້ວ ເຮົາກໍສະອື້ນອົກສະທ້ານຫວັ່ນໄຫວ. ເຮົາເຊື່ອວ່າ ໂຕຄືງຈະກ້າວໄປໄກໃນອະນາຄົດ, ເປັນນັກຕໍ່ສູ້ເພື່ອສັນຕິພາບ, ເປັນນັກຕໍ່ຕ້ານສົງຄາມຜູ້ມີອິດທິພົນ, ເປັນວິລະຊົນຂອງຂະບວນການສັນຕິພາບ. ຂໍໃຫ້ໂຕສືບຕໍ່ປະຕິບັດພາລະກິດ ເພື່ອປະຊາຊົນຜູ້ຖືກກົດຂີ່, ປະຊາຊົນຜູ້ຖືກຍາດແຍ່ງເອົາອິດສະລະພາບໄປຈາກມື, ແລະປະຊາຊົນຜູ້ປະສົບໄພສົງຄາມ.

ເຮົາຂຽນຈົດໝາຍມານີ້ກໍເພື່ອໃຫ້ເປັນສຽງໜຶ່ງຈາກທົ່ງໄຫຫີນ, ສຽງໜຶ່ງໃນຈຳນວນຫລາຍສຽງຂອງຜູ້ປະສົບໄພອັນຕະ

*ລາຍຈາກສິ່ງເສດເຫລືອຂອງສົງຄາມ ທີ່ພວມຄຸກຄາມຊີວິດເພື່ອນມະນຸດຢູ່ໃນຂະນະນີ້.*

*ຮັກແພງຈາກເຮົາ*

*ໄມແດງ.*

ຂ້ອຍອ່ານຈົດຫມາຍສະບັບນີ້ ດ້ວຍຄວາມຫົດຫູ່ໃຈ, ເຢັນວາບໃນສ່ວນເລິກຂອງອາລົມ ແລະ ຮູ້ສຶກລະອາຍທີ່ບໍ່ສາມາດຊ່ອຍຫຍັງເຂົາຫລາຍໄດ້, ດັ່ງນີ້ຈຶ່ງເອົາຈົດຫມາຍລົງພິມໃນຄໍລຳ *ຈົດຫມາຍເຖິງບັນນາທິການ* ແລະ ພາດຫົວເລື່ອງວ່າ *ສຽງຈາກທົ່ງໄຫຫີນ.*

---

ພິມເທື່ອທຳອິດ, ປີ 1978 ໃນໂຮມເລື່ອງສັ້ນ "ສຽງເອີ້ນຂອງໄພ".
ພິມເທື່ອທີສອງ, ປີ 1988 ໃນ ວັນນະສິນ.

ຍາມເຂົ້າພັນສາ ຢ່າຂ້າພວກຂ້ອຍ

ຍາມອອກພັນສາ ຈົ່ງຮັກສາພວກຂ້ອຍ



ຮູບໂດຍ : ຈະເລີນໄຊ

# ຄົນງາມ

ລຳວົງຜ່ານໄປແລ້ວສິບສອງຮອບ ແຕ່ແພງຄຳບໍ່ໄດ້ຟ້ອນຈັກເທື່ອ, ຮອບທີສິບສາມ ກໍ່ກຳລັງຟ້ອນກັນຢູ່ຢ່າງມ່ວນຊື່ນ.

ນາງນັ່ງຢູ່ແປ້ນມາ ໃກ້ກັບວົງດົນຕີທີ່ກຳລັງສົ່ງສຽງອຶກກະທຶກ, ເປັນນາງສາວຄົນດຽວທີ່ເຫລືອຄ້າງ, ໝາຍຄວາມວ່າບໍ່ມີຜູ້ເອົາພວງມະໄລມາຈອງໄປຟ້ອນ ຄືສາວອື່ນ ໆ. ນາງນັ່ງຟັງດົນຕີ, ຟັງເພງສຽງດັງໂວກວາກຈາກນັກຮ້ອງຜົມຍາວທີ່ນຸ່ງໂສ້ງຊາບານ.

ບໍ່ ... ບໍ່ແມ່ນແພງຄຳຟັງດ້ວຍຄວາມຊາບຊຶ້ງ ສົນໃຈດອກ, ແຕ່ນາງຈຳໃຈຟັງ, ເກີງບໍ່ຟັງ ສຽງເພງມັນກໍເຂົ້າຫູເອງ, ນາງຟັງເພື່ອຂ້າເວລາ, ຟັງເພາະນາງບໍ່ມີຫຍັງເຮັດ, ມີແຕ່ນັ່ງໂຈ່ມໂປ່ມ, ຟັງເພື່ອແກ້ເຂີນ ເພາະນາງບໍ່ໄດ້ອອກໄປຟ້ອນຄືໝູ່.

ນາງນັ່ງເກືອບບໍ່ເໜັງບໍ່ຕິງ ເບິ່ງນັກດົນຕີເສບ ເກືອບບໍ່

ພັບຕາ, ດົນໆ ນາງກໍ່ຫລຽວໄປເບິ່ງໝູ່ ທີ່ກຳລັງຟ້ອນຢູ່ດ້ວຍຄວາມຮູ້ສຶກຕ່ຳຕ້ອຍນ້ອຍໃຈ.

ນັ້ນ ... ລັດດາພອນກຳລັງຟ້ອນອອກໜ້າໝູ່, ນາງຍິ້ມແຍ້ມ, ທ່າທາງອວດອີ່ງແດ່ຈັກໜ່ອຍ ເພາະເປັນສາວງາມ ແລະ ເປັນເຈົ້າຂອງພວງມະໄລໃນຮອບນີ້, ໝາຍຄວາມວ່າ ຜູ້ເໝົາຮອບບົ່ງຊີ້ເອົານາງ ໃຫ້ໄປຢືນຢູ່ກາງເວທີ ເພື່ອມອບພວງມະໄລ ໃຫ້ແກ່ຜູ້ເໝົາ, ນາງເປັນເຈົ້າຂອງພວງມະໄລມາແລ້ວສາມຮອບ.

ກັດຈາກລັດດາພອນ ແມ່ນສອນນະພາ, ສາວງາມອີກຄົນໜຶ່ງ ຊຶ່ງໃຜໆ ກໍ່ໝາຍຕາໄວ້ໃຫ້ເປັນເຈົ້າຂອງພວງມະໄລ. ນາງຟ້ອນທຸກຮອບບໍ່ເວັ້ນຫວ່າງ. ຄືນທີ່ຟ້ອນແອ່ນປານນົກຍຸງລຳແພນ ເປັນເປົ້າສາຍຕາຂອງບ່າວເທີ່ມບ່າວແກ່ອີກລາຍໜຶ່ງ ກໍແມ່ນຟ້າວິຈິດ, ຕິດຕາມດ້ວຍອອນອະນົງ ສາວຄິ້ວກົ່ງດັ່ງຄົມ ສີນເປັນດາລາປະຈຳຮ້ານລຳວົງ ເພາະນາງເປັນເຈົ້າຂອງພວງມະໄລມາແລ້ວຫົກຮອບ. ຄົນອື່ນໆ ນັ້ນ ເປັນເຈົ້າຂອງພວງມະໄລພຽງຜູ້ລະໜຶ່ງຮອບສອງຮອບທໍ່ນັ້ນ. ສ່ວນແພງຄຳ ບໍ່ພຽງແຕ່ບໍ່ໄດ້ເປັນເຈົ້າຂອງພວງມະໄລຈັກຮອບ, ນາງຍັງບໍ່ມີຜູ້ໃດມາໂຄ້ງເອົາໄປຟ້ອນ ແມ່ນແຕ່ຮອບດຽວ. ດັ່ງນີ້ ນາງຈຶ່ງເປັນບຸກຄົນທີ່ພວກນາງສາວດ້ວຍກັນເວົ້າຂວັນ ເວົ້າເຍີ້ຍ ຫລືເປັນຕົວຕະຫລົກໃນບົດສົນທະນາຂອງໝູ່ເພື່ອນ. ລັດດາພອນຈະເບິ່ງໜ້າສອນນະພາແລ້ວຍິ້ມຫົວ ທັງຫລຽວມາເບິ່ງແພງຄຳ ຄືດັ່ງຈະເວົ້າວ່າ: " ແພງຄຳບໍ່ໄດ້ຟ້ອນນຳໝູ່ອີກແລ້ວຮອບນີ້ ". ຫລື ອອນອະນົງຈະຫົວຂົ້ນຄ່ອຍໆກັບໝູ່ ແລ້ວເວົ້າຂຶ້ນວ່າ :

" ນັ່ງຕົບຍຸງອີກຕາມເຄີຍ ແພງຄຳນະ, ຜູ້ຊາຍນີ້ກໍຈັ່ງແມ່ນໃຈດຳນໍ້ ບໍ່ຈອງເອົາລາວໄປຟ້ອນຈັກຮອບ ພໍຢືດແຄ່ງຢືດ

ຂາແດ່ ".

ແມ່ນແທ້ ... ທີ່ວ່າ ແພງຄຳບໍ່ງາມຄືໝູ່, ແຕ່ງຕົວບໍ່ທັນສະໄໝ, ເຕັ້ນລຳແບບສາກົນກໍບໍ່ເປັນ. ແພງຄຳສະຫງ່ອມຈອມຕົວ, ບໍ່ກະໂດດໂລດເຕັ້ນ, ບໍ່ເດັ່ນໃນສັງຄົມ.

ນາງເປັນລູກຂອງຄົນທຸກຍາກ ຕ້ອງຊ່ວຍແມ່ ເຮັດເຂົ້າໜົມຄົກຂາຍ, ຕ້ອງເບິ່ງແຍງນ້ອງຕັ້ງຫົກຄົນ. ພໍ່ນາງເປັນຊ່າງໄມ້, ການະຂອງຄອບຄົວບໍ່ດີເລີຍ, ຂາດໆ ເຂີນໆ, ເງິນຊື້ເຄື່ອງນຸ່ງງາມໆ ກໍບໍ່ມີນຳເພິ່ນ.

ສ່ວນນາງສາວອື່ນ ໆ ໂດຍສະເພາະທີ່ກ່າວນາມມາແລ້ວນັ້ນ ລ້ວນແຕ່ເປັນລູກຜູ້ຮັ່ງມີ, ລູກເຈົ້າລູກນາຍ. ພວກນາງຈັບຈ່າຍເງິນບໍ່ອັ້ນ, ຕັດເສື້ອ ແລະ ໂສ້ງຂາບານເປັນປະຈຳເກືອບທຸກເດືອນ, ປານວ່ານຸ່ງເທື່ອໜຶ່ງສອງເທື່ອ ແລ້ວໂຍນກິ້ມໂລດ. ສ່ວນແພງຄຳນັ້ນປີໜຶ່ງ ຫລື ສອງປີຈຶ່ງໄດ້ຕັດເສື້ອພອງໜຶ່ງໂຕ, ດັ່ງນີ້ນາງຈຶ່ງນຸ່ງແຕ່ເຄື່ອງເກົ່າ, ເບິ່ງເປັນກໍ່ສໍ່ ເມື່ອສົມທຽບໃສ່ສາວອື່ນ ໆ ໃນຮ້ານລຳວົງ, ຜູ້ຊາຍຈຶ່ງບໍ່ສົນໃຈ, ບໍ່ຈອງເອົານາງໄປຟ້ອນ, ປ່ອຍໃຫ້ນາງນັ່ງດອວດາຍ ກາຍເປັນຄົນທີ່ໜ້າສົງສານ.

" ກໍດີ ... ບໍ່ກຶກບິ່ງໂຕອອກໄປຢືນຢູ່ກາງເວທີໃຫ້ຄົນເບິ່ງ ປານວ່າຈ່າວຂາຍສິນຄ້າ ". ນາງຄຶດ.

ແມ່ນແທ້, ສາວງາມຕາມຮ້ານລຳວົງນັ້ນ ຄືດັ່ງສິນຄ້າ. ໂຄສົກກໍ່ເວົ້າຢ່າງບໍ່ຈອມປາກວ່າ :

" ສາວງາມນາມຄ່ອງ ເຈົ້າຂອງພວງມະໄລຮອບນີ້ ໄດ້ແກ່ ສອນນະພາ, ນັ້ນ ກຳລັງຂຶ້ນສູ່ເວທີ, ຍິ້ມເປີ່ນເອີ່ນມາພຸ້ນ, ອຸ້ຍຈັ່ງແມ່ນງາມນໍ້ ! ງາມໝົດທຸກສ່ວນ, ງາມແຄ່ງ ງາມຂາ, ງາມກະໂພກ ໜ້າອົກກໍ່ພໍດີ, ຄືວກົງ ຄຳກົມ ສົມເປັນເຈົ້າຂອງ

ພວງມະໄລອື່ຫລື, ຍ່າງກໍ່ງາມ ຊິລອງຖາມເພິ່ນເບິ່ງກ່ອນວ່າ ມີຊູ້ມີແຟນແລ້ວຫລືບໍ່, ອຸ້ຍເພິ່ນຍິ້ມອາຍໆ, ແບບນີ້ຮັບຮອງວ່າ ຫົວໃຈຍັງຫວ່າງ, ໃຜຊ່າງເວົ້າຊ່າງລົມກໍ່ເຊີນໂລດເດີ້, ບ່າວເຫິ້ມບ່າວແກ່ທີ່ມີແມ່ເດັກນ້ອຍແລ້ວຕະຫລອດຮອດຍາພໍ່ອ້າຍທັງຫລາຍ. ນ້ອງສອນນະພາ ເພິ່ນໃຈດີໃຈດີ ມີສະເໜ ຄົງບໍ່ລັງກອດ ທີ່ຈະເປັນມິດທີ່ດີ ຫລື ນ້ອງທີ່ຮັກແພງຂອງພວກທ່ານ. ເຊີນທ່ານນາຍພິນ ... ເຈົ້າຂອງຮອບພິເສດນີ້ ຂຶ້ນຮັບພວງມະໄລ ຈາກນາງສາວຂອງເຮົາໄດ້, ທ່ານນາຍພິນ ເພິ່ນມີສັດທາ ອັນແຮງກ້າເໜືອຮອບພິເສດນີ້ ໂດຍມອບເງິນໃຫ້ວັດ ຈຳນວນ 50.000 ກີບ. ກ້ານ້ອງສອນນະພາ ຍິ້ມໃສ່ເພິ່ນຫນຶ່ງນາທີ ຫລື ລົງໄປຍົກຈອກເຫລົ້າປ້ອນເພິ່ນ ຮັບຮອງວ່າໄດ້ເຖິງແສນກີບ, ເອົາ! ທ່ານນາຍພິນຂຶ້ນມາແລ້ວ ເຊີນຕົບມືເປັນກອດ, ຮອບນີ້ມາໃນຈັງຫວະສະລຸບປີ້ ... "

ນອກຈາກຜູ້ງາມແລ້ວ ພວກນາງເຫລົ່ານັ້ນຍັງມີນາມຄ່ອງທັງມ່ວນຫູອີກ, ຊື່ຂອງແຕ່ລະຄົນ ຢູ່ເທິງຟ້າເທິງດາວ, ທັງຍາວທັງແປກຕ່າງຈາກຊື່ຄົນລາວທົ່ວໄປ. ສ່ວນແພງຄຳ ມີຊື່ທຳມະດາ ໆ, ຈື່ງ່າຍ, ບໍ່ຍາວ.

ເດີກເຂົ້າໄປຊຸກໃຊ້, ບຸນວັດບ້ານນີ້ ກໍ່ແຮ່ງຟົດຟື້ນ, ລຳວົງໄດ້ດຳເນີນໄປຮອດຮອບທີຊາວແລ້ວ. ມັນເປັນເວລາສາມໂມງກາງຄືນ.

ແພງຄຳ ຍັງບໍ່ທັນໄດ້ຟ້ອນຈັກຮອບ. ນາງບໍ່ຮູ້ສຶກມ່ວນຊື່ນນຳຫມູ່, ນາງຮູ້ສຶກຫງ່ວມເຫງົາ, ນາງຢາກກັບບ້ານເມືອນອນ, ແຕ່ ກຳມະການຈັດບຸນບອກວ່າ ໃຫ້ອົດເອົາເພາະບຸນບ້ານເຮົາ. ດັ່ງນີ້ ນາງຈຶ່ງຢູ່ຕໍ່ໄປດ້ວຍຄວາມຝືນໃຈ, ດ້ວຍຄວາມລຳຄານ. ນາງຄຶດດ່າກຳມະການຈັດບຸນ ທີ່ບັງຄັບໃຫ້ນາງເປັນສາວລຳວົງ,

ແທນທີ່ຈະໃຫ້ນາງຂາຍດອກໄມ້ ຢູ່ປາກປະຕູວັດ ເພາະເປັນວຽກທີ່ເຫມາະສົມກວ່າ ແລະ ນາງກໍ່ກະຫນັດດີໃນດ້ານນີ້. ການໃຫ້ມານັ່ງຮ້ານລຳວົງນັ້ນ ມັນຝືນຕໍ່ຈິດໃຈ ແລະ ຂັດຕໍ່ສະພາບຂອງນາງຢ່າງເຫັນໄດ້ຄັກ, ເປັນການໃຊ້ຄົນບໍ່ຖືກທາງ.

ໂຄສົກໄດ້ປະກາດລຳວົງຮອບທີຊາວເອັດ. ອອນອະນົງເປັນເຈົ້າຂອງພວງມະໄລອີກໃນຮອບນີ້. ຫລັງຈາກຜູ້ເຫມົາຮອບມາຮັບເອົາພວງມະໄລ ແລະ ນຳໄປແຈກຢາຍຫມູ່ແລ້ວ, ໂຄສົກກໍ່ເຊີນຂຶ້ນຈັບຈອງນາງສາວ ແລະ ຟ້ອນລຳວົງໄດ້. ບັນດາແຂກທີ່ເປັນຜູ້ຊາຍ ຕ່າງທະຍອຍກັນຂຶ້ນຮ້ານລຳວົງ ແລະ ຍ່າງກົງໄປຫານາງສາວທີ່ໄດ້ຫມາຍຕາໄວ້ກ່ອນແລ້ວ. ຜູ້ນັ້ນກົງໄປຫາ ລັດດາພອນ, ຜູ້ນີ້ຊີ້ໃສ່ຟ້າວິຈິດ, ຜູ້ຫນ້າຍ່າງໄປຫາສອນນະພາ,ຄົນຕໍ່ມາເບັດໃສ່ສາວທີ່ນັ່ງກັດໄປ ແລະ ຕໍ່ໆ ໄປ. ແຕ່ບໍ່ມີຜູ້ໃດຍ່າງກົງມາຫາແພງຄຳ. ນາງຮູ້ສຶກເສີນໆ ແຕ່ກໍ່ເຮັດສີຫນ້າໃຫ້ເປັນທຳມະດາ ເພາະນາງລື້ງເຄີຍກັບສະພາບດັ່ງນີ້ມາແລ້ວ ນັບແຕ່ລຳວົງຮອບທຳອິດ. ນາງບໍ່ຮູ້ສຶກຜິດຫວັງຫຍັງ ແລ້ວກໍ່ນັ່ງຊຶ່ງຄືດັ່ງຄົນທີ່ໃຊ້ຄວາມຄິດຫນັກ. ໃນນາທີຕໍ່ມາ ນາງກໍ່ຕື່ນຍຸບ ແລະ ເກືອບບໍ່ເຊື່ອສາຍຕາໂຕເອງ ເມື່ອມີຊາຍຫນຸ່ມຄົນຫນຶ່ງມາຢຸດຢູ່ຕໍ່ຫນ້າ ແລ້ວຍື່ນພວງມະໄລໃຫ້ນາງ.

" ຂໍຟ້ອນລຳວົງນຳນ້ອງແດ່ " ຊາຍຄົນນັ້ນວ່າ.

ນາງຮັບເອົາ ແລະ ເບິ່ງຫນ້າເຂົາດ້ວຍຄວາມແປກໃຈ, ຫມູ່ຜູ້ສາວຫລອນເຫັນດັ່ງນັ້ນ ຕ່າງກໍ່ແປກໃຈ, ແລ້ວກໍ່ເວົ້າລົມກັນຫົວອິກໆ ທັງບຸ້ຍສືບມາທາງແພງຄຳ. ນາງໄດ້ຍິນຄຳເວົ້າບາງຄຳ ຂອງພວກນາງເຫລົ່ານັ້ນວ່າ :

" ຢ້ານຝົນຕົກຢູ່ ... ແພງຄຳຊິໄດ້ຟ້ອນລຳວົງແລ້ວ".

" ອີ່ຕານັ້ນສອດຫລອດມາແຕ່ໃສ ເບິ່ງແຕ່ງໂຕ ພຸ້ນນະ

ຈັ່ງແມ່ນສົມກັນ ເຮີເຮີ ..."

ແພງຄຳ ໄດ້ຟ້ອນລຳວົງ ເປັນເທື່ອທຳອິດ ແລະ ເປັນຮອບດຽວໃນຄືນນັ້ນ. ເມື່ອລຳວົງໄດ້ສຸດລົງ ຊາຍຄູ່ຟ້ອນ ກ່າວອຳລານາງ ແລະ ລົງຮ້ານໄປ. ນາງແນມນຳຫລັງເຂົາ ຊຶ່ງລັບຫາຍໄປ ທ່າມກາງຄວາມສັບສົນຂອງຜູ້ຄົນ ໃນບໍລິເວນອ້ອມແອ້ມຮ້ານລຳວົງ. ນາງຈື່ໜ້າທ່າທາງເຂົາໄດ້, ເຂົາເປັນຄົນອ່າວຈ່ອຍ, ທ່າທາງສຸພາບ, ຕັດຜົມສັ້ນ ບໍ່ຍາວຄືຜົມຂອງຜູ້ມາຟ້ອນລຳວົງທົ່ວໄປ, ບໍ່ຊົງຊັງຄືບ່າວຈິໂກະທັງຫລາຍ. ເຂົາອາຍຸປະມານຊາວສີ່ຊາວຫ້າປີ.

ການລຳວົງໃນຄືນນັ້ນໄດ້ອັດລົງໃນຮອບທີຊາວຫົກ,ເວລາສີ່ໂມງເຄິ່ງ.

ອາທິດໜຶ່ງຕໍ່ມາ, ຊາຍແປກໜ້າ ທີ່ໄດ້ຟ້ອນລຳວົງກັບແພງຄຳນັ້ນ ກໍ່ໄດ້ໄປຢ້ຽມຢາມການຄ້າວ ຂະນະທີ່ນາງນັ່ງຂາຍເຂົ້າໜົມຄົກຢູ່ໜ້າບ້ານ. ເຂົາເວົ້າລົມກັບນາງຢ່າງອ່ອນນ້ອມແລະ ຊື້ເຂົ້າໜົມຄົກຂອງນາງຫົກຄູ່. ເຂົາບໍ່ບອກຊື່, ບໍ່ບອກບ່ອນເຮັດການ ຫລື ບ່ອນຢູ່ອາໄສ ໃຫ້ນາງຮູ້ເລີຍ ແລະ ນາງກໍ່ບໍ່ກ້າຖາມ ເພາະກີເຂົາເປັນພຽງຄົນຜູ້ໜຶ່ງ ທີ່ມາຟ້ອນລຳວົງນຳມາຊື້ເຂົ້າໜົມຄົກນຳ ຄືດັ່ງຫລາຍ ໆ ຄົນທີ່ມາຊື້ນຳນາງເປັນປະຈຳ. ເຂົາເວົ້າ ແລະ ສະແດງຄວາມເຫັນອົກເຫັນໃຈຄົນທຸກຍາກ, ຊາວໄຮ່, ຊາວນາ ແລະ ກຳມະກອນ. ເຂົາວ່າ ເຂົາເອງເປັນກຳມະກອນຜູ້ໜຶ່ງ ແລະ ຮູ້ສຶກພູມໃຈເພາະເປັນອາຊີບບໍລິສຸດ, ບໍ່ໂກງ ບໍ່ຂູດຮີດຜູ້ໃດ.

ເວລາຜ່ານໄປສອງປີປາຍ. ມາຕົ້ນປີ 1977 ຊາຍແປກໜ້າຄືນນັ້ນໄປຢາມນາງອີກ, ເຂົານຸ່ງເຄື່ອງທະຫານ ກອງທັບປະຊາຊົນລາວ. ສ່ວນນາງເປັນພະນັກງານຂົນຂວາຍພື້ນຖານ.

" ອ້າຍເປັນນັກຮົບປົດປ່ອຍ, ເສຍດາຍທີ່ນ້ອງບໍ່ຮູ້ຈັກແຕ່ກ່ອນນໍ້ ". ນາງວ່າ.

" ອ້າຍເຂົ້າໃຈນ້ອງດີ,ບໍ່ຢາກມາຕິດແທດຫລາຍຕອນນັ້ນ ເພາະພວກຝ່າຍຂວາ ມີອຳນາດຫລາຍ, ຢ້ານນ້ອງໄດ້ຮັບອັນຕະລາຍ ".

" ຕອນມີການລຸກຮືຂຶ້ນນັ້ນ ນ້ອງເປັນຫົວໜ້າແມ່ຍິງໃນຄຸ້ມນີ້ ... "

" ເອີ ... ພວກນາງສາວງາມໆ ທີ່ຟ້ອນລຳວົງເກັ່ງໆ ຈີນບໍ່ໄດ້ເຊົາຈັກຮອບປີນັ້ນເດ ໄປໃສໝົດ ? "

" ພວກນັ້ນຫວະ ... ບາງຄົນກໍ່ໂຕນໜີໄປ, ບາງຄົນກໍ່ເປັນມະລຳມະລອຍ, ອຳນາດການປົກຄອງເລີຍສົ່ງໄປດັດສ້າງຢູ່ດອນນາງພຸ້ນຈຳນວນໜຶ່ງ. ເຂົາເຈົ້າດັດບໍ່ຍາກດອກ ເພາະທີ່ເຮັດໂລເລ ເມື່ອກ່ອນນັ້ນ ຍ້ອນສິ່ງແວດລ້ອມ ແລະ ສັງຄົມພາເປັນໄປ ".

" ດີແລ້ວເດ ທີ່ເຂົາເຈົ້າໄດ້ໄປດັດສ້າງ ເພາະຈະເປັນປະໂຫຍດຕໍ່ສັງຄົມ, ເປັນການກອບກູ້ເອົາຄົນໄວ້ ".

ນາງ ແລະ ເຂົາລົມກັນ ຢ່າງສະໜິດສະໜົມ. ໃນທັດສະນະຂອງເຂົາ ນາງເປັນຄົນງາມ ເປັນຄົນທີ່ເຂົາຍົກຍ້ອງນັບຖື.

---

ພິມເທື່ອທຳອິດ, ປີ 1978 ໃນໂຮມເລື່ອງສັ້ນ "ສຽງເອີ້ນຂອງໃຜ ".
ພິມເທື່ອທີສອງ, ປີ 1988 ໃນ ວັນນະສິນ.

ແສງອະລຸນມິໄວ້ສ່ອງຟ້າ

ແສງແດດມິໄວ້ສ່ອງດິນ




ຮູບໂດຍ : ຈະເລີນໄຊ

# JUST A PAIR OF BIRDS

## Short story by Outhine BOUNYAVONG

It was early February, when flame of the forest blossoms at the edge of the ricefields were in full bloom. Illuminated by the sinking sun, the blossoms glowed a striking red. Nearby stood a single palmyra tree, starkly silhouetted against the sky. For years now it had stood there, tall and straight. For the villagers it was a timepiece : when the sun was straight above it, it was high noon, and when in the late afternoon the sun sunk level with its top fronds, it was time for

the farmers to drive their buffaloes back home while housewives lit their cooking fires.

Tendrils of smoke from the firewood and the steam from the pot of bubbling rice rose up from houses here and there, weaving with streaks from the dying sun which filtered through the branches to create a play of light and shade over the whole village.

When her rice was cooked, Nang Un sat on the veranda with her young son. The front yard was spacious, and beyond it was a dirt road once used only by oxcarts. Since last year, however, the villagers had begun to see logging trucks churning along it. The road was alive now, as people returned home from the fields and gardens. The first drove of cattle were arriving, driven by men ambling back home. For Nang Un, the sound of these wooden cowbells always marked the end of the day.

Nang Un watched the passerbys on the road quietly, waiting for her

husband Tit Tan to head home after work. She wasn't really waiting for him, but it was part of the routine of her day to sit there on the veranda during twilight.

Every day she would sit there, looking at the birds flying through the sky over the ricefields as the sun disappeared behind the nearby mountain. Flocks of birds would fly from the east, heading for their nests in the green forest next to the village. Some swooped low while others flew high overhead. In the distance, they looked like dark grains of rice gliding by. Among these birds were two which always flew apart from the others, straight over the palmyra every evening. A pair of rare hornbills, their white crests and tails looked dramatic against the fiery sky as they glided past the tree top. Nang Un didn't know exactly how long this pair of birds had been flying past there, but she had first noticed them since the end of the Buddhist

Lent.

Pointing them out to her son, she had wished for a moment that she was a bird too, flying in the immense sky. After thàt, it had became a game, to see whether she or her son could spot them first. With his keener eyesight, seven-year old Nit would usually spot them first.

" Over there, Ma!" he would say gleefully, pointing at the hornbills as they flew into sight.

" Where? Oh, I see them. How small they are." Mother and child would watch breathlessly as the white-crested birds glided past the top of the palmyra tree. " They've disappeared again."

" I can still see them, Ma. Like needle points - now I can't see them either."

" Then your father should be home soon," she would say, smiling.

Nang Un and her son watched for the birds now, as the rice simmered in

the kitchen behind them. From time to time, she got up to stir the fire there. In the front yard, near the ladder to their house, was a sandy heap with some empty beer cans and Pepsi cans on it. With their flashy bright colours, they were a novelty in the village. Her son had picked them up from the road and kept them to play with, but neither he nor his mother had ever tasted their contents. Scattered along the entrance to their yard were also crushed Benson and 555 cigarette packets, tossed out by the drivers of the logging trucks and pick-up trucks as they roared past.

The men at the wheels of these vehicles were at first referred to by the villagers as "traders". These gentlemen from the town apparently disliked being called that, however, and said that they were 'businessmen'. But since the villagers thought of all businessmen as traders, they ended up calling these men " log-trading

businessmen". Why these businessmen often carried long barreled guns remained a mystery.

Today, as Nang Un sat on the veranda, the flocks of birds had all but disappeared from the sky over the ricefields. Only a few were seen heading for their nests. But Nang Un and her son didn't see the pair of hornbills. Could they have suddenly changed their route? But she had seen them only yesterday. Perhaps somebody had discovered their nest in the forest and stolen their eggs, so that they had moved to another spot? She frowned, - she did not like to think of the majestic hornbills interfered with like that. "Soon," she reassured herself silently, "they'll be flying over the fields, straight over the palmyra tree - just like every other day." In her mind, she could imagine the pair of them gliding by, their great wings flapping overhead. She looked hopefully at the palmyra tree, but

could see no sign of them. Her son, too, remained silent by her side.

A convoy of logging trucks drove past, churning up clouds of dust on the dirt road. Recently so many trucks had passed down their road, hauling huge teak logs out of the nearby forest, that even the flame of the forest blossoms were coated a dirty brown.

As the dust was settling, her husband Tit Tan arrived home.

He told her that he had just seen a pair of hornbills dangling from the back of the last logging truck. One of the 'businessmen' must have shot them dead, he said.

Nang Un stood there, speechless. She felt her heart clutching tight, into a hard rock. The sun had slipped behind the mountain ridge. Darkness was setting in, melting with the shadows. Only the empty tin cans in the front yard glinted in the fading light. More cans, less birds, she thought vaguely.

A dry breeze sprung up, and rustled the fronds of the palmyra tree. Nang Un looked at the top fronds in the twilight, but there was nothing there.

She never saw the pair of hornbills again.

ອຸທິນ ບຸນຍາວົງ

ເກີດເມື່ອປີ 1942 ທີ່ບໍ່ແຕນ ແຂວງໄຊຍະບູລີ. ໃຊ້ໄວເດັກຢູ່ຊົນນະບົດບ້ານເກີດ, ພໍອາຍຸ 10 ປີ ກໍເຂົ້າສູ່ນະຄອນວຽງຈັນ ເພື່ອຮຽນຕໍ່ທີ່ໂຮງຮຽນປະຖົມວັດໄຕ ແລະ ທີ່ວິທະຍາໄລວຽງຈັນ ແຕ່ບໍ່ທັນຈົບ ກໍອອກຫາເຮັດການ ເພື່ອລ້ຽງຊີບຫລາຍແຫ່ງ.

ເປັນໜຶ່ງໃນຄະນະທີ່ບຸກເບີກກໍ່ຕັ້ງ ວາລະສານວັນນະສິນ ແລະ ຍັງຄົງມີຜົນງານພິມລົງ ໃນວາລະສານນີ້ເລື້ອຍໆມາ.

ຂຽນເລື່ອງສັ້ນ ເປັນຕົ້ນຕໍ, ນອກນັ້ນ ຍັງຂຽນບົດຄວາມ, ສາລະຄະດີ, ບົດບັນນາທິການ, ກອນອິດສະຫລະ ...

ເລື່ອງສັ້ນຂອງເຂົາ ໄດ້ຮັບການແປ ເປັນພາສາ ລັດເຊຍ, ຫວຽດນາມ ແລະໄທຫລາຍເລື່ອງ.

ປະຈຸບັນ ເປັນພະນັກງານສັງກັດ ຢູ່ກົມວັນນະຄະດີ, ກະຊວງກະແຫລງຂ່າວ ແລະ ວັດທະນະທຳ.

